ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-6
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 2, 3, 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 2, 3, 8-10
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 1, 7, 11-13, Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 1, 7, 11-13, Christmas Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ພຣະເຢຊູສອນຊີວິດປະຈຳວັນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 5:1-16

ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມັດທາຍ 5:1-16

ຈຸດສຳຄັນຂອງບົດຮຽນນີ້: ເພື່ອໃຫ້ເຫັນຄວາມສຳຄັນຂອງຊີວິດ

ຄຳຖາມເພື່ອການສຳຣວດ: ເຮົາຄວນຈະມີຊີວິດຢ່າງໃດຈຶ່ງຈະຖືກຕ້ອງ?

ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຣວດເບິ່ງຊີວິດວ່າເຮົາມີຫຍັງດີກວ່າຄົນທັມະດາສາມັນ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມ

## ບົດນຳ

ການເທສນາທີ່ຈ້າຍພູເປັນການເທສນາຄັ້ງແຮກຂອງພຣະເຢຊູ ເປັນການເທດທີ່ຍາວນານຈາກບົດ 5 ເຖິງບົດ 7 ບົດເທດນີ້ເປັນບົດເທດທີ່ມີຊື່ສຽງຫລາຍຈົນຄຣິສຕຽນສ່ວນຫລາຍເກືອບຈື່ໄດ້ວ່າຢູ່ໃນພຣະທັມມັດທາຍບົດ 5 ສ່ວນບັນດາສາສນາຈານຫລາຍຄົນມັກຈະເທສນາໃນເຣື່ອງນີ້ຢູ່ເລື້ອຍ. ບົດເທສນານີ້ບໍ່ໄດ້ເວົ້າເຣື່ອງແຜ່ນດິນສວັນພໍເທົ່າໃດ ແຕ່ແມ່ນເຣື່ອງການໃຊ້ຊີວິດໃນໂລກຢ່າງສັນຕິສຸກຫລາຍກວ່າແລະບົດເທສນານີ້ຍັງດີສຳລັບທຸກສັງຄົມອີກດ້ວຍ.

ຄຳເທສນາທີ່ຈ້າຍພູ ມັດທາຍ 5:1-2

ຊື່ສຽງຂອງພຣະເຢຊູໄດ້ຊ່າລືກັນໄປທົ່ວ ຈຶ່ງເປັນເຫດໃຫ້ຄົນທັງຫລາຍຢາກເຫັນພຣະເຢຊູ, ຢາກເຂົ້າໃກ້ເພື່ອຮັບຟັງຖ້ອຍຄຳຂອງພຣະອົງ, ຝູງຊົນຫລວງຫລາຍມາຫາພຣະອົງ ເມື່ອພຣະອົງຊົງເຫັນເຊັ່ນນັ້ນພຣະອົງຈຶ່ງສະເດັດຂຶ້ນໄປຍັງເທິງພູເພື່ອທຸກຄົນຈະໄດ້ເຫັນແລະໄດ້ຍິນຖ້ອຍຄຳຂອງພຣະອົງ. "ເມື່ອພຣະອົງຊົງທອດພຣະເນດເຫັນຄົນຫລວງຫລາຍດັ່ງນັ້ນ ພຣະອົງກໍສະເດັດຂຶ້ນພູ ເມື່ອປະທັບລົງແລ້ວ ພວກສາວົກກໍເຂົ້າເຝົ້າ ພຣະອົງຈຶ່ງຊົງໄຂພຣະໂອດຕັ້ງຕົ້ນສັ່ງສອນ (ຂໍ້ 1-2).

ຂ້າພະເຈົ້າເຄີຍໄດ້ຍິນຄົນຊ່າລືກັນວ່າ ມີນັກຮ້ອງລູກທຸ່ງຊື່ດັງຂອງປະເທດໄທມາຮ້ອງເພງຫາລາຍໄດ້ທີ່ອະເມຣິກາ ຄົນລາວຈຳນວນຫລວງຫລາຍກໍລັ່ງໄຫລກັນໄປເພື່ອຢາກເຫັນຕົວຈິງ, ແລະຍັງຈ້າງຖ່າຍຮູບກັບດາຣານັກຮ້ອງຜູ້ນັ້ນອີກ. ຄວາມຈິງແລ້ວຜູ້ທີ່ເຂົ້າໄປຟັງການສະແດງຮ້ອງເພງນັ້ນສ່ວນໃຫຍ່ໄດ້ເຫັນ ແລະໄດ້ຍິນຈາກວີດີໂອ ຫລືກະແຊດຂອງນັກຮ້ອງຜູ້ນັ້ນຕັ້ງແຕ່ດົນນານແລ້ວ ມາເຖິງຕອນນີ້ຢາກມີໂອກາດພົບໂຕຈິງຈຶ່ງພາກັນປະວຽກປະງານ ເສັຽເງິນທອງກໍຍອມ ຈົນລາງຄົນທີ່ເຮັດການກາງຄືນຈຳຕ້ອງຕົວະໂຮງງານຕ່າງໆນາໆເພື່ອຈະໄດ້ໄປເບິ່ງນັກຮ້ອງຊື່ດັງຄົນນັ້ນ. ຄັນ

ຫາກຄຣິສຕຽນເຮົາຫາທາງມາໂບດໃນວັນອາທິດຕອນເຊົ້າຄືຫາທາງໄປເບິ່ງນັກຮ້ອງນີ້ຈະດີ. ນັກຮ້ອງທີ່ມາຮ້ອງເພງນັ້ນເຂົາເຈົ້າຈະຮ້ອງເພງໃຫ້ຈິດໃຈຂອງຜູ້ຟັງນັ້ນເພີດເພີນ ຜ່ອນຄາຍອາຣົມຕຶງຄຽດຊົ່ວລະຍະນຶ່ງ, ສ່ວນບຸກຄົນທີ່ຢາກເຫັນພຣະເຢຊູໃນນັ້ນຈະໄດ້ຮັບສອງຢ່າງຄື; 1. ການມີຊີວິດຢ່າງສັນຕິສຸກກັບເພື່ອນບ້ານ. 2. ຈະໄດ້ຮັບຄວາມລອດພົ້ນຈາກບຶງໄຟນາຮົກຫາກຍອມຮັບເຊື່ອເອົາພຣະເຢຊູເປັນພຣະຜູ້ຊ່ອຍໃຫ້ພົ້ນ. ຂໍ້ທີ່ໜ້າສັງເກດຄື; ຄົນທີ່ໄປຟັງນັກຮ້ອງໆ ເພງກໍເພາະວ່າລາວກໍາລັງຫາຄວາມສຸກທາງໃຈ ເພື່ອຜ່ອນຄາຍຄວາມຕຶງຄຽດ ເວົ້າອີກຢ່າງນຶ່ງແມ່ນໄປຫາຄວາມເພີດເພີນເພື່ອຈະມີສຸກໃຈລະຍະນຶ່ງ. ໃນພຣະທັມມັດທາຍບົດ 5-7 ພຣະເຢຊູເວົ້າເຖິງຄວາມສຸກອັນແທ້ຈິງ.

<u>ຍອດຂອງຄວາມສຸກ</u> ມັດທາຍ 5:3-12

ຄໍາວ່າ Blessed ໃນພາສາອັ່ງກິດຕອນນີ້ມາຈາກພາສາກຣີກ Makarioi ແປວ່າຄວາມສຸກທີ່ຫາປຽບບໍ່ໄດ້ , ດັ່ງນັ້ນເມື່ອທ່ານອ່ານພຣະທັມມັດທາຍບົດ 5-7 ຈົ່ງຄິດສເມີວ່າເພິ່ນກໍາລັງເວົ້າເຖິງຄວາມສຸກທີ່ຫາຫຍັງປຽບບໍ່ໄດ້. ພຣະອົງຊົງກ່າວເຣື່ອງຄວາມສຸກດັ່ງນີ້:

1. "ຜູ້ໃດຍາກຈົນຝ່າຍຈິດວິນຍານກໍເປັນສຸກ ເພາະວ່າແຜ່ນດິນສວັນເປັນຂອງຜູ້ນັ້ນ" (ຂໍ້ 3) ແປວ່າຜູ້ນັ້ນຮູ້ວ່າຕົນເອງຂາດຈິດວິນຍານສໍານຶກຜິດແລະຊອບ ແລ້ວຊອກສແວງຫາຊີວິດຫລັງຈາກຕາຍຜູ້ນັ້ນກໍຈະໄດ້ໄປຢູ່ສວັນເມື່ອຕາຍໄປ.

2. "ຜູ້ໃດໂສກເສົ້າກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບການຊົງເລົ້າໂລມ" ( ຂໍ້ 4) ແປວ່າຜູ້ນັ້ນຮູ້ສຶກວ່າຕົນເອງໄດ້ເຮັດບາບແລະເສັຽໃຈທີ່ໄດ້ເຮັດບາບ ແລ້ວກັບໃຈຫັນໜີຈາກທາງຊົ່ວເຂົ້າຫາພຣະເຈົ້າ ພຣະອົງກໍຈະຊົງອະພັຍໃຫ້.

3. ຜູ້ໃດມີໃຈອ່ອນຫວານກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບແຜ່ນດິນໂລກເປັນມໍຣະດົກ" (ຂໍ້ 5). ແປວ່າຜູ້ນັ້ນມີໃຈຖ່ອມຍອມຮັບພຣະເຢຊູກໍຈະພົ້ນ, ການປາກດີເວົ້າມ່ວນຂອງລາວກໍຈະສ້າງເພື່ອຝູງຮັກແພງໃນໂລກດ້ວຍ.

4. "ຜູ້ໃດອຶດຫິວຄວາມຊອບທັມກໍເປັນສຸກ ເພາະວ່າພຣະເຈົ້າຈະຊົງໃຫ້ອີ່ມບໍຣິບູນ" (ຂໍ້ 6). ແປວ່າຜູ້ໃດຊອກສແວງຫາພຣະທັມພຣະເຈົ້າຜູ້ນັ້ນຈະອີ່ມຈາກຂອງຝ່າຍໂລກ, ຈິດໃຈຂອງຜູ້ນັ້ນຈະອີ່ມໂດຍຄວາມຊອບທັມນັ້ນ.

5. "ຜູ້ໃດມີໃຈກະຣຸນນາກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບພຣະກະຣຸນນາຕອບ" (ຂໍ້ 7). ແປວ່າຜູ້ໃດມີໃຈເມຕາສົງສານຍົກໂທດຄວາມຜິດຂອງຜູ້ອື່ນ ພຣະເຈົ້າກໍຊົງຍົກໂທດຜູ້ນັ້ນ.

6. "ຜູ້ໃດມີຈິດໃຈບໍຣິສຸດກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ເຫັນພຣະເຈົ້າ" (ຂໍ້ 8) ແປວ່າຜູ້ໃດເວົ້າຄວາມຈິງຈາກໃຈ ໃນເຫດການຕ່າງໆ ແມ່ນແຕ່ຍາມຖືກຂົ່ມເຫັງລາວກໍບໍ່ເຊົາຕິດຕາມພຣະເຈົ້າ ລາວກໍຈະເຫັນພຣະເຈົ້າ.

7. "ຜູ້ໃດສ້າງຄວາມສງົບສຸກກໍເປັນສຸກ ພາະວ່າພຣະເຈົ້າຈະຊົງເອີ້ນຜູ້ນັ້ນວ່າເປັນບຸດ" (ຂໍ້ 9) ແປວ່າຜູ້ໃດສ້າງຄວາມປອງດອງກັນໃນຍາມຜິດຖຽງຫລືບໍ່ຜິດຖຽງກໍຕາມ ຜູ້ນັ້ນຈະໄດ້ຊື່ວ່າລູກຂອງພຣະເຈົ້າ, ດ້ວຍວ່າພຣະເຈົ້າແມ່ນພຣະເຈົ້າແຫ່ງສັນຕິສຸກ. (ສັງເກດຄໍາວ່າສ້າງ ແປວ່າບໍ່ມີກໍສ້າງໃຫ້ມີຂຶ້ນ).

8. "ຜູ້ໃດຖືກຂົ່ມເຫງເພາະຄວາມຊອບທັມກໍເປັນສຸກ ເພາະວ່າແຜ່ນດິນສ້ວນເປັນຂອງຜູ້ນັ້ນ" (ຂໍ້ 10). ແປວ່າຜູ້ໃດຖືກຂົ່ມເຫງແລ້ວຍັງສັດຊື່ຕໍ່ພຣະເຢຊູຢູ່ ແຜ່ນດິນສວັນເປັຂອງຜູ້ນັ້ນແລ້ວ.

"ເມື່ອເຂົາຕິຕຽນຂົ່ມເຫງນິນທາວ່າຮ້າຍທ່ານທັງຫລາຍ ເປັນຄວາມບໍ່ຈິງທຸກຢ່າງ ເພາະເຫັນແກ່ເຮົາ ພວກທ່ານກໍເປັນສຸກ ຈົ່ງຊົມຊື່ນຍິນດີ ເພາະວ່າບໍາເໜັດຂອງທ່ານມີບໍຣິບູນໃນສວັນ ເໝືອນດັ່ງນັ້ນແຫລະ, ເຂົາໄດ້ຂົ່ມເຫງຜູ້ປະກາດພຣະທັມທີ່ຢູ່ກ່ອນທ່ານທັງຫລາຍ" (ຂໍ້ 11-12). ເປັນຄໍາເລົ້າໂລມໃຈທີ່ພຣະເຢຊູໄດ້ເລົ້າໂລມຊາວຍິວໃນຂະນະທີ່ຢູ່ໃຕ້ບັງຄັບບັນຊາຂອງຈັກກະພັດໂຣມັນ.

<u>ພວກທ່ານເປັນເກືອແລະຄວາມສວ່າງ</u> ມັດທາຍ 5:13-16

ເມື່ອພຣະເຢຊູເລົ່າເຣື່ອງຄວາມສຸກມາເຖິງຕອນຖືກຂົ່ມເຫງທີ່ຊາວຍິວໄດ້ຮັບຈາກຈັກກະພັດໂຣມັນພຣະອົງກໍເລົ່າຕໍ່ໄປອີກເພື່ອເລົ້າໂລມໃຈຊາວຍິວບໍ່ໃຫ້ຢ້ານຕໍ່ການກົດຂີ່ຂົ່ມເຫງ ພຣະອົງກ່າວວ່າ "ທ່ານທັງຫລາຍເປັນເກືອສໍາລັບໂລກ ແຕ່ຖ້າເກືອນັ້ນຈືດຈາງໄປແລ້ວ ຈະເຮັດໃຫ້ເຄັມໄດ້ຢ່າງໃດ" (ຂໍ້ 13) ຫລືເວົ້າງ່າຍໆວ່າທ່ານທັງຫລາຍຕ້ອງອົດທົນຢ່າເຊົາຕິດຕາມພຣະເຈົ້າເມື່ອຖືກຂົ່ມເຫັງ, ພວກທ່ານເປັນຄ້າຍຄືເກືອທີ່ເອືອບຊີ້ນຫລືປາບໍ່ໃຫ້ເນົ່າ, ທ່ານເປັນເຫມືອນເກືອທີ່ໃຫ້ຣົດຊາດແກ່ອາຫານ ໃຜກໍຕາມຫາກກິນອາຫານເຄັມຜູ້ນັ້ນກໍຈະຫິວນໍ້າ ຫລືໃຜກໍຕາມຫາກໃກ້ຊິດສນິດໃນພວກທ່ານ ຜູ້ເປັນເກືອແລະຄວາມສະວ່າງ ຜູ້ນັ້ນຈະຫິວເກາະຫາຍພຣະທັມພຣະເຈົ້າ ແລ້ວລາວກໍຈະເດີນຕາມຄວາມສະວ່າງ.

"ພວກທ່ານຄືແສງສະວ່າງສໍາລັບໂລກ ເມືອງທີ່ຕັ້ງໄວ້ເທິງພູຈະບັງລັບໄວ້ບໍ່ໄດ້" (ຂໍ້ 14) ພຣະເຢຊູຊົງປຽບທຽບຊາວຍິວເປັນເຫມືອນໂຄມໄຟທີ່ສ່ອງແສງສະວ່າງ ແຕ່ບໍ່ແມ່ນແສງສະວ່າງຂອງໂຄມໄຟ ແຕ່ແມ່ນແສງສະວ່າງຂອງພຣະເຈົ້າທີ່ສ່ອງໄປທົ່ວພິພົບ, ເມືອງທີ່ຕັ້ງໄວ້ເທິງພູມີຄວາມຫມາຍວ່າພວກກົດຂີ່ຂົ່ມເຫງ, ພວກເຈົ້າໃຫຍ່ນາຍໂຕຈະບັງແສງ ແຫ່ງຂ່າວປະເສີດນີ້ໄວ້ບໍ່ໄດ້. ບໍ່ມີສິ່ງໃດບັງຄັບຫລືຫ້າມຂ່າວປະເສີດຂອງພຣະເຈົ້າໄດ້, ພວກທ່ານເປັນແສງສະວ່າງແຫ່ງຂ່າວປະເສີດນັ້ນແຫລະ.

"ບໍ່ທ່ອນມີຜູ້ໃດເມື່ອໄຕ້ໂຄມແລ້ວເອົາບຸງມາກວບ ແຕ່ເຄີຍຕັ້ງໄວ້ທີ່ຮອງຕີນໂຄມ ແລະມັນຈະສ່ອງແຈ້ງແກ່ຄົນທັງປວງ" (ຂໍ້ 15). ພຣະເຢຊູຊົງແຕ່ງຕັ້ງທ່ານເປັນແສງສະວ່າງ ເມື່ອພຣະອົງຊົງແຕ່ງຕັ້ງທ່ານພຣະອົງກໍຈະຍົກຖານະ ແລະມອບອໍານາດຂອງແຫ່ງຄວາມສະວ່າງເພື່ອສ່ອງໄປຍັງຄົນທັງປວງ, ເມື່ອຄົນທັງປວງເຫັນແສງສະວ່າງເຂົາກໍຈະເດີນຕາມແສງສະວ່າງໃນຖ້າມກາງຄວາມມືດ. "ເພື່ອວ່າ, ເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ ໃນສວັນ" (ຂໍ້ 16). ດ້ວຍເຫດນີ້ແຫລະເຮົາຄວນອົດທົດຕໍ່ການທັງປວງເພື່ອຄົນທັງຫລາຍຈະ ໄດ້ເຫັນພຣະເຈົ້າໃນຕົວຂອງທ່ານ.

<u>ຄໍາຖາມ:</u>

1. ທ່ານເຄີຍໄປເບິ່ງ ຄອນເຊີດໄທ ທີ່ມາສະແດງຢູ່ໃກ້ບ້ານເຮົາບໍ່? ຄິດແນວໃດຈຶ່ງໄປ?

2. ທ່ານເຄີຍຄິດຫ້າງຫາຫລືຈັດຕຽມໄປໂບດຕອນເຊົ້າວັນອາທິດແນວໃດ?

3. ເປັນຫຍັງຄົນທັງຫລາຍຈຶ່ງມາຫາພຣະເຢຊູ?

4. ເມື່ອມາຫາພຣະເຢຊູແລ້ວພຣະອົງເອົາຫຍັງໃຫ້ແດ່? ສິ່ງທີ່ພຣະອົງເອົາໃຫ້ນັ້ນດີແນວໃດ?

5. ເຣື່ອງຄວາມສຸກທີ່ພຣະອົງກ່າວມານັ້ນທ່ານມັກອັນໃດຫລາຍກວ່າໝູ່?

6. ເປັນຫຍັງພຣະເຢຊູຈຶ່ງເວົ້າວ່າທ່ານເປັນເໝືອນເກືອ?

7. ເປັນຫຍັງພຣະເຢຊູຈຶ່ງເວົ້າວ່າທ່ານເປັນເໝືອນແສງສະວ່າງ?

8. ດຽວນີ້ທ່ານຮູ້ສຶກວ່າທ່ານເປັນເກືອແລະແສງສະວ່າງບໍ່?

9. ເຮັດແນວໃດຄົນທັງຫລາຍຈຶ່ງຈະຮູ້ຈັກພຣະເຈົ້າແລະສັຣເສີນພຣະອົງ?

ສຈ. ທູນພັນ ວົງສຸຣິດທ໌

# ບົດຮຽນບົດທີ 2
# ຄວາມໝາຍໃໝ່ຈາກຄຳສອນເດີມ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 5:17-48
ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ: ມັດທາຍ 5:17-48
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງເອີ້ນໃຫ້ມີຊີວິດທີ່ດີ, ຊີວິດຊຶ່ງເກີດມາຈາກຈິດໃຈແລະຖືກຕ້ອງກັບຄຸນຄ່າ; ແທນທີ່ຈະເປັນຊີວິດທີ່ດີພຽງຕໍ່ໜ້າ, ຊີວິດຊຶ່ງເກີດໂດຍການບັງຄັບຈາກກົດຣະບຽບ.
ຄຳຖາມເພື່ອການສຳຣວດ: ຄຸນຄວາມດີທີ່ແທ້ເກີດມາຈາກໃສ ແລະຈະສະແດງອອກໂດຍວິທີໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍວິທີທີ່ພວກເຮົາສາມາດຮຽນຮູ້ການດຳເນີນຊີວິດຕາມວິທີທາງຂອງພຣະເຢຊູຢ່າງຄົບບໍຣິບູນ.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ສົ່ງເສີມໃຫ້ຄອບຄົວສົມບູນດີ.
- ສ້າງຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ການດຳເນີນຊີວິດຄຣິສຕຽນບໍ່ແມ່ນພຽງການຮັກສາກົດຣະບຽບ. ແຕ່ຄວາມສັມພັນຂອງເຮົາກັບພຣະຄຣິດຈະສົ່ງຜົນສະທ້ອນໄປເຖິງຄວາມສັມພັນທັງໝົດທີ່ພວກເຮົາມີຢູ່.

ພຣະບັນຍັດແລະຜູ້ປະກາດພຣະທັມ (5:17-20)
ຫລັງຈາກປະກາດຄວາມໝາຍຂອງຄວາມຊອບທັມທີ່ແທ້ຈິງ, ພຣະເຢຊູໄດ້ຊົງອະທິບາຍຄວາມໝາຍຂອງຄວາມຜິດບາບ. ພຣະອົງຊົງກ່າວວ່າພຣະອົງບໍ່ໄດ້ຊົງມາເພື່ອລົບລ້າງພຣະບັດຍັດ ແຕ່ພຣະອົງໄດ້ຊົງມາເພື່ອເຮັດໃຫ້ທຸກຢ່າງສຳເຣັດຄົບຖ້ວນ. ພຣະບັດຍັດໃນພຣະຄັມພີເດີມເວົ້າເຖິງການປະພຶດພຽງພາຍນອກ; ແຕ່ໃນຣາຊອານາຈັກສວັນ, ພວກເຮົາຈະຕ້ອງຣະວັງທ່າທີທີ່ເປັນຄວາມຜິດບາບຊຶ່ງຢູ່ພາຍໃນ. ພຣະເຢຊູຊົງເຮັດໃຫ້ພຣະບັນຍັດສຳເຣັດໃນຊີວິດຂອງພຣະອົງ, ແລະບໍ່ມີໃຜທີ່ຈະກ້າກ່າວຫາວ່າພຣະອົງໄດ້ເຮັດຄວາມຜິດບາບ; ພຣະອົງຍັງໄດ້ຊົງເຮັດໃຫ້ທຸກຢ່າງສຳເຣັດໃນການຕາຍແລະການຄືນພຣະຊົນຂອງພຣະອົງ. ໄພ່ພົນຂອງພຣະເຈົ້າບໍ່ໄດ້ເຊື່ອຟັງພຣະອົງເພາະການບັງຄັບຈາກຂ້າງນອກ ແຕ່ເຊື່ອຟັງພຣະອົງຈາກຈິດໃຈ, ຊຶ່ງແມ່ນພຣະວິນຍານບໍຣິສຸດຂອງພຣະເຈົ້າເປັນຜູ້ຊົງນຳ.ເຖິງຈະບໍ່ໄດ້ເວົ້າເຖິງພຣະວິນຍານໃນຄຳເທສນາທີ່ຈ້າຍພູ, ພວກເຮົາຮູ້ວ່າພວກເຮົາບໍ່ສາມາດທີ່ຈະເຮັດໃນສິ່ງທີ່ພຣະເຢຊູຊົງສອນນັ້ນໄດ້ປາສຈາກການຊ່ອຍເຫລືອຈາກພຣະວິນຍານ (ໂຣມ 8:1-13).ພຣະເຢຊູຊົງເວົ້າເຖິງຄວາມຜິດບາບຕ່າງໆ ແລະອະທິບາຍເຖິງວິທີທີ່ພວກເຮົາຈະເອົາຊະນະຄວາມບາບເຫລົ່ານັ້ນ.

ທ່ານທັງຫລາຍເຄີຍໄດ້ຍິນ... ແຕ່ເຮົາ, ບອກທ່ານວ່າ (5:21-48)

ຄຣູທີ່ດີສອນວິທີໃດ? ມັດທາຍ 5:21-48 ໃຫ້ຕົວຢ່າງການສອນຂອງພຣະເຢຊູຄຣິດ. ພຣະອົງຊົງໃຊ້ວິທີງ່າຍເພື່ອສອນເຣື່ອງສຳຄັນ. ພຣະເຢຊູຊົງໃຊ້ການຢ້ຳຄືນ (ຊ້ຳແລ້ວຊ້ຳອີກ). ຮູບແບບທີ່ພຣະອົງໄດ້ຊົງໃຊ້ຄື: (1) "ທ່ານທັງຫລາຍໄດ້ຍິນຄຳທີ່ກ່າວໄວ້ວ່າ"; (2) ແຕ່ເຮົາ, ບອກທ່ານທັງຫລາຍວ່າ..."; ແລະ (3) ຂໍ້ຄວາມທີ່ບອກເຖິງສະພາບໃນຊີວິດ. ສິ່ງທີ່ຜ່ານມາ, ສິ່ງໃນປັດຈຸບັນ, ແລະສິ່ງໃນອະນາຄົດຈະສອດຄ່ອງໄປຕາມຮູບແບບນີ້.

"ທ່ານທັງຫລາຍໄດ້ຍິນຄຳທີ່ກ່າວໄວ້ວ່າ" ຈະຊວນຜູ້ຟັງໃຫ້ຄິດເຖິງຈຸດກ່ອນໆຂອງການສົນທະນາ; ໂດຍສເພາະພຣະເຢຊູຈະຊີ້ໃສ່ຖ້ອຍຄວາມໃນພຣະຄັມພີເດີມ. ຕົວຢ່າງ: ການສອນເຣື່ອງການຂ້າຄົນແລະເຣື່ອງການຫລິ້ນຊູ້ຊຶ່ງມີຢູ່ໃນພຣະບັນຍັດສິບປະການ (ອພຍ 20:1-17; ພບຍສ 5:1-21). ມັດທາຍ 5:31-32 ອອກມາຈາກການຕີຄວາມໝາຍຂອງພວກສາສນາຈານໃນສມັຍນັ້ນກ່ຽວກັບເຣື່ອງການຢ່າຮ້າງ.

ໂດຍການໃຊ້ຮູບແບບນີ້ໃນການສອນ, ພຣະເຢຊູຊົງຊີ້ໃຫ້ພວກຜູ້ຟັງຮູ້ວ່າພຣະອົງຊົງຮູ້ພື້ນຖານໃນການປະພຶດຂອງພວກເຂົາ. ສິ່ງເຫລົ່ານີ້ມີຄຸນຄ່າເພື່ອການເວົ້າກັບກຸ່ມຄົນ, ຂ້ອຍເຂົ້າໃຈພວກເຈົ້າດີ. ພຣະອົງຊົງເຂົ້າໃຈພວກຜູ້ຟັງດີ ແລະຊົງບອກພວກເຂົາວ່າເຂົາໄດ້ເຂົ້າໃຈຜິດໂດຍການຊົງກ່າວວ່າ, "ແຕ່ເຮົາບອກທ່ານວ່າ..." ຜູ້ຟັງເຂົ້າໃຈເຈຕະນາຂອງຂໍ້ຄວາມຜິດໄປ, "ທ່ານໄດ້ຍິນຄຳທີ່ກ່າວວ່າ." ໃນທີ່ນີ້ ພຣະເຢຊູບໍ່ໄດ້ຊົງປະຕິເສດພຣະບັນຍັດແລະຜູ້ປະກາດ, ແຕ່ພຣະອົງຊົງຊ່ວຍຜູ້ຟັງໃຫ້ຮູ້ຈັກເຈຕະນາທີ່ແທ້ຂອງຄຳສອນນັ້ນໆ.

ຄຳກ່າວຫົກຢ່າງ (5:21-48)

ມີຄຳກ່າວຫົກຢ່າງຢູ່ໃນມັດທາຍ 5:21-48. ຂໍ້ຄວາມເຫລົ່ານີ້ເວົ້າເຖິງເຣື່ອງສຳຄັນໃນຊີວິດຂອງພວກເຮົາທຸກໆຄົນ.

ຄວາມຄຽດຮ້າຍ (5:21-26)-- ພຣະບັດຍັດບອກວ່າ, "ຢ່າຂ້າຄົນ" (ອພຍ 20:13); ແຕ່ພຣະເຢຊູຊົງບອກວ່າ, "ຢ່າຮ້າຍກັບຄົນອື່ນໆ." ການຄຽດຮ້າຍແມ່ນການຂ້າຄົນຢູ່ໃນໃຈ ແລະສາມາດທີ່ຈະນຳໄປສູ່ການເວົ້າບໍ່ດີ ແລະການສັງຫານກັນ. "ການພິພາກສາ" ໝາຍເຖິງສານທ້ອງຖິ່ນ ຫລືສານສູງຂອງຄົນຢິວ. ຢ່າລໍຖ້າອ້າຍນ້ອງຂອງຕົນ, ແຕ່ທ່ານຈະເປັນຜູ້ເລີ່ມສ້າງຄວາມປອງດອງກັນກ່ອນເຣື່ອງຈະຮ້າຍແຮງຂຶ້ນ.

ການຫລິ້ນຊູ້ (5:27-32)-- ການຫລິ້ນຊູ້ຜ່ານທາງຮ່າງກາຍຍ່ອມຈະຮ້າຍແຮງກວ່າການຫລິ້ນຊູ້ໃນຈິດໃຈ. ແຕ່ສິ່ງທີ່ເກີດຂຶ້ນໃນໃຈສາມາດລາມໄປເຖິງການປະພຶດທີ່ຖືກຕ້ອງຫ້າມ (ອພຍ 20:14). ພວກເຮົາຈະຕ້ອງຮັບຮູ້ຕົວເອງ ແລະຢ່າປ່ອຍໃຫ້ຄວາມຄິດຝັນໃນທາງຜິດບາບນັ້ນຄ້າງຄາຢູ່ໃນສມອງ. ພວກເຮົາຈະຕ້ອງຮັກສາຕາແລະມືໃຫ້ຢູ່ໃຕ້ບັງຄັບ. ສຳລັບຄຳສອນເຣື່ອງການຢ່າຮ້າງໃນຂໍ້ 5: 31-32 ນັ້ນເປັນຄຳສອນຢ່າງດຽວກັນໃນມັດທາຍ 19:1-11. ໃນຕອນນີ້ພຣະເຢຊູຊົງເວົ້າເຖິງຄວາມສັກສິດຂອງການແຕ່ງງານ ຫລາຍກວ່າການອະນຸຍາດເຣື່ອງການຢ່າຮ້າງ. ສິ່ງເຫລົ່ານີ້ຄວນຈະເປັນສິ່ງເຕືອນຄະຕິຜູ້ທີ່ມີໜ້າທີ່ໃນການໃຫ້ຄຳປຶກສາກັບສະມາຊິກໃນຄຣິສຕະຈັກເຣື່ອງຄອບຄົວ ໂດຍສເພາະແມ່ນເຣື່ອງການຢ່າຮ້າງ.

ການສາບານ (5:33-37) -- ເບິ່ງລາຍລະອຽດເຣື່ອງບັນຍັດຂອງໂມເຊໄດ້ໃນ ຣະບຽບພວກເລວີ 19:12 ແລະພຣະບັນຍັດທີສອງ 23:23. ຜູ້ຊຳນານດ້ານກົດໝາຍຂອງຊາວຢິວມີວິທີຫລາຍຢ່າງທີ່ຈະເຮັດບາງຢ່າງບໍ່ໃຫ້ຜິດກົດ ຫລືຜິດຄຳສາບານ ເພື່ອຄຳສາບານຂອງບາງຄົນຈະບໍ່ເປັນເຣື່ອງສັກສິດ. ພຣະເຢຊູບໍ່ໄດ້ຊົງຫ້າມເຣື່ອງການສາບານ, ແຕ່ພຣະອົງຊົງບອກໃຫ້ພວກເຮົາຈົ່ງເວົ້າແຕ່ຄວາມຈິງເພື່ອຄຳສົນທະນາຂອງພວກເຮົາຈະບໍ່ເຕັມໄປດ້ວຍຄຳສາບານ. ບາງຄົນ

ຄິດຜິດໄປວ່າຄຳສາບານຈະເຮັດໃຫ້ຄວາມເວົ້າຕ່າງໆຂອງຄົນມີນ້ຳໜັກຫລາຍຂຶ້ນ. ຖ້າເຮົາເປັນຄົນມີສັກສີ, ຄົນອື່ນກໍຈະເຊື່ອຖືຄຳເວົ້າຂອງເຮົາ.

ການຕອບແທນແກ້ແຄ້ນ (5:38-42) --ພຣະເຢຊູຊົງນຳເອົາເຣື່ອງລົບ, "ຕາແທນຕາ ແລະແຂ້ວແທນແຂ້ວ" ໃຫ້ມາໃນທາງບວກ. ພວກຜູ້ຟັງກຳລັງໃຊ້ຊີວິດພາຍໃຕ້ການປົກຄອງຂອງຈັກພັດໂຣມ. ທະຫານໂຣມມີສິດສັ່ງໃຫ້ຜູ້ໃດຜູ້ນຶ່ງແບກສິ່ງຂອງໆເຂົາ. ພຣະເຢຊູບໍ່ພຽງແຕ່ສອນບໍ່ໃຫ້ຕໍ່ຕ້ານ ແຕ່ຊົງສອນໃຫ້ເຮັດຫລາຍກວ່າທີ່ຖືກສັ່ງ. ຄວາມຫວັງກໍຄືຜູ້ທີ່ສັ່ງອາດຈະຖາມວ່າ, <u>ເປັນຫຍັງທ່ານຈຶ່ງເຮັດຢ່າງນີ້?</u> ເມື່ອນັ້ນ, ສາວົກຈະມີໂອກາດເປັນພຍານເຣື່ອງຣາຊອານາຈັກສວັນ.

ໃນ 5:43-48, ພຣະທັມຕອນນີ້ໄດ້ກໍ່ຂຶ້ນຈາກພຣະທັມຫລາຍໆຂໍ້ທີ່ຜ່ານມາ, ແຕ່ໄດ້ເພີ່ມເຣື່ອງຄວາມເມດຕາຄົນອື່ນໃສ່. ພຣະເຢຊູຊົງສອນໃຫ້ຄຣິສຕຽນປະຕິບັດດີກັບສັດຕຣູຂອງຕົນ ແລະໃຫ້ຮັກພວກເຂົາດ້ວຍ. ສັນຍາລັກຂອງຄວາມຮັກແບບເສັຽສລະຈະຕ້ອງສະແດງອອກກັບທຸກໆຄົນ, ບໍ່ແມ່ນແຕ່ກັບສັງຄົມແລະເພື່ອນຝູງຂອງພວກເຮົາເທົ່ານັ້ນ.

ມັດທາຍ 5:48 ສລຸບເຣື່ອງໃນພຣະທັມພາກນີ້. ພຣະທັມຂໍ້ນີ້ເນັ້ນເຖິງຄວາມບໍຣິສຸດ ແລະຄວາມຄົບບໍຣິບູນຊຶ່ງເປັນລັກສະນະຂອງພຣະເຈົ້າ. ຖ້າພວກເຮົາດຳເນີນຊີວິດດ້ວຍກຽດສັກສີໃນທຸກໆກໍຣະນີຂອງຊີວິດທີ່ພຣະເຢຊູໄດ້ຊົງກ່າວມານີ້, ພວກເຮົາກໍຈະກາຍເປັນແສງສະທ້ອນພຣະລັກສະນະຂອງພຣະເຈົ້າ.

<u>ຄຳຖາມ:</u>

1. ພວກເຮົາຈະຮູ້ໄດ້ຢ່າງໃດວ່າເຮົາໄດ້ປ່ອຍໃຫ້ຄວາມເຂົ້າໃຈເຣື່ອງຂ່າວປະເສີດກາຍເປັນເຣື່ອງສະເພາະສ່ວນຕົວຫລືສະເພາະສັງຄົມຂອງເຮົາ?
2. ພວກເຮົາຈະດຳເນີນຊີວິດຕາມຂ່າວປະເສີດວິທີໃດເພື່ອໃຫ້ຊີວິດນີ້ມີຜົນສະທ້ອນສຳລັບຕົວເຮົາເອງ, ສຳລັບສັງຄົມ, ສຳລັບປະເທດຊາດ, ແລະສຳລັບໂລກ?
3. ເຮັບເຣີ 1:1-14 ສະແດງເຖິງການຕໍ່ເນື່ອງຣະຫວ່າງກົດໃນພຣະຄັມພີເດີມ ແລະພຣະເຢຊູຢ່າງໃດແດ່?
4. ຈາກປະສົບການສ່ວນຕົວ, ຄວາມສາມາດໃນການຮັກສາຄຳເວົ້າຂອງຕົນສະແດງເຖິງອຸປນິສັຍຂອງສ່ວນບຸກຄົນໄດ້ຢ່າງໃດ? ຄຳເວົ້າທີ່ວ່າ "ຄົນຂີ້ຕົວະ ກັບຄົນຂີ້ຂະໂມຍແຕກຕ່າງກັນນ້ອຍດຽວ" ມີຄວາມຈິງຫລາຍປານໃດ?
5. ອີງຕາຄຳສອນຂອງພຣະເຢຊູເຣື່ອງການຮັກສັດຕຣູ, ບົດຮຽນນີ້ມີຄວາມໝາຍແນວໃດສຳລັບພວກເຮົາກ່ຽວກັບການຮັກໝູ່ເພື່ອນແລະການຮັກຄອບຄົວ?

ສ.ຈ. ສີດາ ຄານ

## ບົດຮຽນບົດທີ 3
## ເມື່ອພຣະເຈົ້າເປັນຜູ້ຟັງພຽງຜູ້ດຽວ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 6:1-18
ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ: ມັດທາຍ 6:1-18
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງເອີ້ນຫາປະເພນີທາງສາສນາທີ່ສແວງຫາພຣະເຈົ້າ ແລະແນວທາງຂອງພຣະອົງ ແທນທີ່ຈະສແວງຫາການສັຣເສີນແລະການເຫັນພ້ອມຈາກມະນຸດດ້ວຍກັນ.

ຄຳຖາມເພື່ອການສຳຣວດ: ທ່ານຈະເປັນຜູ້ເຊື່ອຖືສາສນາປະເພດໃດຖ້າມີພຣະເຈົ້າຜູ້ດຽວເປັນຜູ້ເບິ່ງທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຣວດເບິ່ງການປະຕິບັດທາງສາສນາຂອງຂ້າພະເຈົ້າເມື່ອປຽບໃສ່ຄຳສອນທີ່ພຣະເຢຊູຊົງໃຫ້ໄວ້ໃນຕົວຢ່າງສາມເຣື່ອງໃນບົດຮຽນນີ້.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ສົ່ງເສີມຄອບຄົວໃຫ້ເຂັ້ມແຂງ.
- ຈັດຕຽມຄົນທັງຫລາຍໃຫ້ເປັນຜູ້ນຳທີ່ມີຄຸນລັກສະນະຂອງຜູ້ຮັບໃຊ້.

## ຄຳນຳ

ການສແດງຄວາມເຊື່ອຈະຕ້ອງມີການຕິດຕໍ່ກັບຊຸມຊົນ. ວິທີທີ່ເຮົາສະແດງຄວາມເຊື່ອກັບຄົນອື່ນໆ ຈະບອກໃຫ້ເຫັນເຖິງຄວາມເຊື່ອອັນແທ້ຈິງທີ່ຢູ່ໃນເຮົາ.

ຖ້ອຍຄຳໂດຍທົ່ວໄປ (6:1)
ພຣະເຢຊູຊົງເວົ້າເຖິງການນະມັສການກ່ອນເຣື່ອງອື່ນໆ ເພາະຄວາມສັມພັນຂອງສ່ວນບຸກຄົນກັບພຣະເຈົ້າຈະເປັນພື້ນຖານຂອງຄວາມສັມພັນກັບຄົນອື່ນແລະກັບໂລກທົ່ວໄປ. ເງື່ອນໄຂຢູ່ທີ່ພຣະທັມຂໍ້ 1, ທີ່ຈິງແລ້ວຄຳວ່າ "ຂອງທານ" ຄວນຈະເປັນ "ຄວາມຊອບທັມ" ຫລາຍກວ່າ. ສິ່ງສຳຄັນໃນຕອນນີ້ ຄືຄວາມສັມພັນຣະຫວ່າງເຮົາກັບພຣະເຈົ້າຈະຕ້ອງເປັນເຣື່ອງລັບລີ້, ຊຶ່ງໝາຍຄວາມວ່າ "ສຳລັບພຣະເນດພຣະເຈົ້າເທົ່ານັ້ນ" ແລະບໍ່ແມ່ນເພື່ອຄົນທັງຫລາຍຈະໄດ້ເຫັນ ແລະສັຣເສີນພວກເຮົາ. ພຣະເຈົ້າຈະບໍ່ຊົງອະນຸຍາດສອງລາງວັນ, ລາງວັນນຶ່ງຈາກພຣະເຈົ້າ ແລະອີກລາງວັນນຶ່ງຈາກຟ້າສວັນ.

**<u>ເຣື່ອງການໃຫ້ທານ</u>** (6:2-4)

ພວກຟາຣີຊາຍມັກສະແດງການໃຫ້ທານຂອງພວກເຂົາ (ມຣກ 12:38-40). ບາງຄົນໃນສມັຍນີ້ກໍມັກເວົ້າອວດຄົນອື່ນເຣື່ອງການຖວາຍຂອງຕົນ. ຖ້າການກະທຳແບບນີ້ແມ່ນສິ່ງຊັກຊວນໃຫ້ມີການທານ ຫລືການຖວາຍ, ພວກເຂົາເຈົ້າກໍໄດ້ຮັບລາງວັນແລ້ວ ຄືການສັຣເສີນຂອງມະນຸດ; ແຕ່ພວກເຂົາຈະບໍ່ໄດ້ບຳເໜັດຈາກພຣະບິດາຜູ້ສະຖິດໃນຟ້າສວັນ.

**<u>ເຣື່ອງການອ້ອນວອນ</u>** (6:5-15)

ພຣະເຢຊູຊົງກ່າວວ່າ, "ເມື່ອທ່ານອ້ອນວອນ"; ພຣະອົງບໍ່ໄດ້ຊົງບອກວ່າ "ຖ້າທ່ານອ້ອນວອນ" ຊຶ່ງໝາຍຄວາມວ່າພຣະເຢຊູຄິດວ່າພວກເຮົາຕ້ອງອ້ອນວອນ. ສິ່ງແລກທີ່ໂປໂລເຮັດຫລັງຈາກທີ່ທ່ານມາເປັນຄຣິສຕຽນຄືທ່ານໄດ້ອ້ອນວອນ (ກຈກ 22:17). ພຣະເຢຊູຊົງເນັ້ນວ່າການອ້ອນວອນເພື່ອສແດງໃຫ້ຄົນອື່ນໄດ້ເຫັນ ຫລືໄດ້ຍິນເປັນການເຮັດຄວາມຜິດບາບ. ການອ້ອນວອນແມ່ນການສັມພັນກັບພຣະເຈົ້າໃນທີ່ລັບລີ້, ແຕ່ພຣະຄັມພີກໍໄດ້ອະນຸຍາດເຣື່ອງການອ້ອນວອນໃນທີ່ປະຊຸມເໝືອນກັນ. ຜູ້ທີ່ອ້ອນວອນໃນທີ່ປະຊຸມຈະຕ້ອງເປັນຜູ້ທີ່ມີການອ້ອນວອນທາງສ່ວນຕົວ, ບໍ່ດັ່ງນັ້ນກໍຈະຖືວ່າຜູ້ກ່ຽວເປັນຄົນໜ້າຊື່ໃຈຄົດ. ພຣະເຢຊູຊົງບອກເຖິງຄວາມຜິດພາດສາມຢ່າງເຣື່ອງການອ້ອນວອນ: (1) ອ້ອນວອນເພື່ອໃຫ້ຄົນອື່ນເຫັນ (ຂໍ້ 5-6); (2) ອ້ອນວອນແບບເວົ້າຊ້ຳຄຳເກົ່າ (ຂໍ້ 7-8); ແລະ(3) ອ້ອນວອນໂດຍມີຄວາມຜິດບາບຢູ່ໃນໃຈ (ຂໍ້ 14-15). ພຣະເຈົ້າບໍ່ໄດ້ຊົງອະພັຍເຮົາເພາະພວກເຮົາໃຫ້ອະພັຍຄົນອື່ນ; ພຣະອົງຊົງອະພັຍພວກເຮົາເພາະພຣະໂຣຫິດຂອງພຣະເຢຊູຄຣິດ (1 ຢຮ 1:9). ແຕ່ການບໍ່ຍອມອະພັຍຄົນອື່ນໃນຊີວິດຂອງຜູ້ອ້ອນວອນຈະເປັນອຸປສັກສຳລັບຊີວິດຂອງການອະທິຖານ. ນອກນັ້ນການກະທຳແບບນີ້ຍັງສະແດງໃຫ້ເຫັນວ່າຜູ້ເຊື່ອປະເພດນີ້ບໍ່ໄດ້ເຂົ້າໃຈເຣື່ອງພຣະຄຸນຂອງພຣະເຈົ້າທີ່ມີຕໍ່ພວກເຮົາທຸກໆຄົນ.

ຄຳອ້ອນວອນໃນມັດທາຍ 6:9-13 ບໍ່ໄດ້ມີໄວ້ເພື່ອພວກເຮົາຈະໄດ້ທ່ອງຂຶ້ນໃຈ ແລ້ວເລົ່າຖ້ອຍຄຳເຫຼົ່ານີ້ໂດຍບໍ່ຕ້ອງຄິດຫຍັງເລີຍເວລາພວກເຮົາອ້ອນວອນ. ແຕ່ຄຳອ້ອນວອນນີ້ເປັນແບບຢ່າງທີ່ພວກເຮົາສາມາດໃຊ້ເວລາພວກເຮົາຮຽນອ້ອນວອນ. ຄຳອ້ອນວອນນີ້ເປັນຄຳອ້ອນວອນໃນຄອບຄົວ; ທ່ານສາມາດສັງເກດໄດ້ຈາກຄຳເວົ້າທີ່ປາກົດຢູ່ເລື້ອຍໆເຊັ່ນ "ຂ້າພຣະອົງທັງຫລາຍ" ແລະ "ຂ້າພຣະອົງ." ນອກນັ້ນຄຳອ້ອນວອນນີ້ຍັງກ່າວເຖິງ "ພຣະນາມພຣະເຈົ້າ," "ພຣະ ຣາຊອານາຈັກ," ແລະ "ນ້ຳພຣະທັຍຂອງພຣະອົງ" ກ່ອນທຸກໆຢ່າງທີ່ພວກເຮົາຕ້ອງການໃນໂລກມະນຸດ. ຄຳອ້ອນວອນນີ້ໄດ້ເຕືອນພວກເຮົາບໍ່ໃຫ້ອະທິຖານແບບເຫັນແກ່ຕົວ.

**<u>ເຣື່ອງສິນອົດອາຫານ</u>** (6:16-18)

ການຖືສິນອົດອາຫານທີ່ແທ້ຈິງເກີດມາຈາກໃຈ, ບໍ່ແມ່ນພຽງແຕ່ຮ່າງກາຍ (ອຊຢ 58:5). ສິນອົດອາຫານສຳລັບຄຣິສຕຽນແມ່ນການຕຽມຕົວເພື່ອການອ້ອນວອນ ແລະການຝຶກຫັດດ້ານຈິດວິນຍານ. ການຖືສິນອົດອາຫານແມ່ນການຍອມສລະສິ່ງເລັກນ້ອຍ ເພື່ອຈະໄດ້ສິ່ງທີ່ຍິ່ງໃຫຍ່ກວ່າ. ການຖືສິນອົດອາຫານອາດຈະປະກອບດ້ວຍການງົດອາຫານການກິນ, ການຫລັບນອນ, ຫລືການຮ່ວມເພດ (1 ກຣທ 7:1-6).

**<u>ເຣື່ອງລາວທັງສາມ</u>** (6:1-18)

ຄຣິສຕຽນສ່ວນຫລາຍໃນສມັຍນີ້ບໍ່ໄດ້ປະຕິບັດທຸກຢ່າງທີ່ພຣະເຢຊູໃນຊົງສອນໃນຕອນນີ້; ບາງຄັ້ງພວກເຮົາອາດຈະເວົ້າເຖິງເຣື່ອງການອ້ອນວອນ ຫລືການໃຫ້ທານ, ແຕ່ພວກເຮົາບໍ່ໄດ້ເວົ້າໃຫ້ຄົບທັງສາມຢ່າງ. ທ່ານຈື່ໄດ້ບໍ່ວ່າດົນປານໃດແລ້ວທີ່ຄຣິສຕະຈັກຂອງທ່ານໄດ້ສອນເຣື່ອງການຖືສິນອົດອາຫານ.

ຫລາຍກວ່ານັ້ນ, ພວກເຮົາເຄີຍໄດ້ເນັ້ນເຣື່ອງໃຫ້ເຮົາເຮັດທຸກຢ່າງໂດຍຄິດເຖິງພຣະເຈົ້າ ແທນທີ່ຈະຄິດເຖິງວ່າຄົນອື່ນຈະເບິ່ງພວກເຮົາແນວໃດ ບໍ່? ຄວາມຈິງແລ້ວ, ຖ້າພວກເຮົາພາກັນເຮັດທຸກຢ່າງໂດຍຄິດວ່າພຣະເຈົ້າເປັນຜູ້ຟັງ ຫລື

ຜູ້ເບິ່ງເຮົາ, ພວກເຮົາຈະສາມາດເຂົ້າໃຈເພື່ອນມະນຸດດ້ວຍກັນຫລາຍຂຶ້ນ. ພວກເຮົາຄວນນຳເອົາຄຳສອນສາມຢ່າງທີ່ພຣະເຢຊູຊົງສອນໃນບົດຮຽນນີ້ໄປເປັນບົດຮຽນເລີ່ມຕົ້ນໃນລາຍການສ້າງສາວົກໃນຄຣິສຕະຈັກຂອງພວກເຮົາ.

## ການອ້ອນວອນໃນພຣະຄັມພີ

ຫລາຍໆຄົນເວົ້າເຣື່ອງການອ້ອນວອນ, ແຕ່ມີນ້ອຍຄົນທີ່ເອົາໃຈໃສ່ໃນການປະຕິບັດ. ໃຫ້ພວກເຮົາເບິ່ງການອ້ອນວອນໃນພຣະຄັມພີຕໍ່ໄປນີ້:

ບົດເພັງສັຣເສີນທີ່ມີຄຳອ້ອນວອນເພື່ອການຂອບພຣະຄຸນ (ພສສ 18; 3; 103); ການສັຣເສີນ (19; 104; 148); ການສາຣະພາບບາບ (51); ການປົດປ່ອຍຈາກສັດຕຣູ (9; 83; 109); ການສັຣເສີນພຣະບັນຍັດ (119). ຜູ້ປະກາດພຣະທັມເວົ້າເຖິງປະສົບການກັບພຣະເຈົ້າ (ອຊຢ 6; ຢຣມຢ 1:4-18). ພຣະເຢຊູຊົງເຮັດໃນສິ່ງທີ່ພຣະອົງໄດ້ສອນພວກສາວົກ (ມຣກ 1:35; 6:46; 14:36-39; 15:34). ອັຄສາວົກໂປໂລເວົ້າວ່າພຣະເຈົ້າໄດ້ຊົງປະທານພຣະວິນຍານເພື່ອຊ່ວຍຜູ້ເຊື່ອໃນການອ້ອນວອນ (ໂຣມ 8:26-27). ໂປໂລອ້ອນວອນໃຫ້ຄຣິສຕຽນທີ່ເອເຟໂຊໄດ້ເຕີບໃຫຍ່ໃນຄວາມເຂົ້າໃຈແລະການຮູ້ຈັກພຣະເຈົ້າ (ອຟຊ 1:15-22)) ແລະຮຽກຮ້ອງໃຫ້ຄຣິສຕຽນຈົ່ງອະທິຖານເປັນປະຈຳ (ຟລປ 4:6; ກລຊ 4:2; 1 ທຊລນ 5:17).

<u>ຄຳຖາມ:</u>

1. ທ່ານເຄີຍໄດ້ຮ່ວມໃນການອ້ອນວອນທີ່ເບິ່ງແລ້ວຄ້າຍກັບວ່າທຸກຄົນອ້ອນວອນກັບຜູ້ທີ່ຮ່ວມຢູ່ໃນການອະທິຖານນັ້ນ ແທນທີ່ຈະອ້ອນວອນເຖິງພຣະເຈົ້າ?

2. ມີບາງຄົນເຄີຍເວົ້າເຖິງຄົນທຸກຍາກ ແລະເວົ້າໃນທຳນອງນີ້ "ທຸກຄົນສາມາດທີ່ຈະຊ່ວຍຕົວເອງໄດ້ ຖ້າມີໃຈຢາກ." ທ່ານຈະໂຕ້ຕອບຖ້ອຍຄຳປະເພດນີ້ວິທີໃດ?

3. ທ່ານຄິດວ່າຄຣິສຕະຈັກຈະໄດ້ຮັບຜົນປໂຍດບໍ່ ຖ້າມີການສອນເຣື່ອງການອະທິຖານ? ທ່ານຈະເວົ້າເຣື່ອງຫຍັງແດ່ໃນການຮຽນນີ້?

4. ທ່ານຄິດວ່າການຖືສິນອົດອາຫານຄວນຈະເປັນພາກສ່ວນໃນຊີວິດຄຣິສຕຽນບໍ່?

ສຈ. ສິດນີ ຄານ

# ບົດຮຽນທີ 4
# ຊັບສົມບັດອັນຕລອດໄປ

ຂໍ້ພຣະຄຳພີສຳລັບບົດຮຽນ: ມັດທາຍ 6:19-34
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ມັດທາຍ 6:19-34
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງຮຽກຮ້ອງໃຫ້ພວກເຮົາໄວ້ວາງໃຈໃນພຣະເຈົ້າ ແລະໃຫ້ພວກເຮົາເບິ່ງທິດທາງຂອງພຣະອົງນັ້ນມີຄຸນຄ່າຫລາຍຂຶ້ນຈົນກວ່າພວກເຮົາເນັ້ນຫນັກແລະກັງວົນກັບວັດຖຸສິ່ງຂອງເລັກຫນ້ອຍຖອຍລົງ.
ຄຳຖາມເພື່ອການສຳຣວດ: ສະນັ້ນແມ່ນອັນໃດ - ເງິນຫລືພຣະເຈົ້າ?
ຈຸດປະສົງຂອງບົດຮຽນນີ້: ໃຫ້ໄຈ້ແຍກເບິ່ງອັນໃດສຳຄັນແທ້- ຂ້າພະເຈົ້າຈະມອບຊີວິດຂອງຂ້າພະເຈົ້າໄວ້ກັບວັດຖຸສິ່ງຂອງ ເຊິ່ງເປັນທາງກົງກັນຂ້າມກັບທິດທາງຂອງພຣະເຈົ້າ ຫຼື ຂ້າພະເຈົ້າຈະໄວ້ວາງໃຈໃນພຣະເຈົ້າແລະເບິ່ງທິດທາງຂອງພຣະອົງນັ້ນມີຄຸນຄ່າຫລາຍກວ່າ.

## ບົດຮຽນ

### ຄຳນຳ

ປະຊາຊົນອະເມຣິກາອາດຈະເປັນຄົນຢູ່ໃນສັງຄົມທີ່ມັກທາງດ້ານເສຖກິດຈົນເປັນທີ່ຮູ້ຈັກກັນໃນໂລກນີ້. ເປັນຫຍັງບໍ່ວ່າໃຜກໍຢາກມາຢູ່ປະເທດນີ້? ເພາະວ່າໃຜໆກໍໄຝ່ຝັນນຳຄວາມໄຝ່ຝັນຂອງຊາວອະເມຣິກາ. ຄຸນລັກສະນະຂອງທ່ານຖືກເງິນປ່ຽນໄປໃຫ້ເຫັນເງິນມີຄຸນຄ່າຫລາຍກວ່າ ແທນທີ່ຈະເຫັນຄຸນຄ່າຂອງການເປັນຄຣິສຕຽນແລະຄຣິສຕະຈັກ.

### ພາບພົດຂອງຊັບສົມບັດ (6:19-21)

ພວກສາວົກຂອງພຣະເຢຊູຄົງຈະເປັນຄືກັນກັບພວກເຮົາ ເມື່ອໄດ້ຍິນພຣະອົງກ່າວຄຳວ່າຊັບສົມບັດ ພວກເຂົາກໍພາກັນຫູຕັ້ງໄປຕາມໆກັນ. ຄຳນີ້ປຸກຈິດໃຈຂອງທ່ານໃຫ້ຄຶດເຖິງອັນໃດແດ່? ຫີບເຕັມໄປດ້ວຍເພັດພອຍ, ເງິນ, ຄຳ, ພັນທະນະບັດແລະບັນຊີຮຸ້ນສ່ວນ ແມ່ນບໍ່? ມູນມັງມະຫາສານ, ເຮືອນຊານແລະຣົດລາງໂອ້ໂຖງ ແລະຄວາມຮັ່ງມີຈົນລົ້ນເຫລືອ ອັນນີ້ແມ່ນຄຳສັບທີ່ເຂົ້າມາໃນຄວາມຄຶດຂອງຂ້າພະເຈົ້າ.

ພຣະເຢຊູບໍ່ໄດ້ສາບແຊ່ງ "ຊັບສົມບັດ" ດອກ. ແທນທີ່ຈະເປັນຢ່າງນັ້ນ ພຣະອົງຊົງຮຽກຮ້ອງໃຫ້ພວກສາວົກຂອງພຣະອົງໃຫ້ລະນຶກເຖິງຄວາມສຳຄັນຂອງສິ່ງຂອງອັນໃດອັນນຶ່ງທີ່ມີຄູນຄ່າຂອບເຂດຈຳກັດ ແລະສິ່ງຂອງອັນໃດອັນນຶ່ງທີ່ມີຄຸນຄ່າຢູ່ຕລອດໄປ. ພວກເຮົາຈຳເປັນຈະຕ້ອງລະນຶກຢູ່ສເມີວ່າ ວັດຖຸປະສົງເປັນສິ່ງຂອງ, ມີຕົນຕົວຈັບໄດ້, ມີຄຸນຄ່າໃນປະຣິມານ. ຣົດທີ່ພວກເຮົາຂັບໄປ ເສື້ອຜ້າທີ່ພວກເຮົາໃສ່ ເຮືອນຊານທີ່ພວກເຮົາອາສັຍຢູ່ ແລະອາຫານທີ່ພວກເຮົາກິນ. ຍັງມີສິ່ງທີ່ຈັບບາຍບໍ່ໄດ້ ບໍ່ມີຕົນບໍ່ມີຕົວ ແຕ່ເປັນສິ່ງທີ່ຢູ່ພາຍໃນ ພວກເຮົາເອີ້ນກັນວ່າ ຄວາມສັດຊື່, ການຍືດຖືຄຸນທັມ, ຄວາມເມດຕາ, ຄວາມຮັກ ແລະໃຫ້ຄວາມເປັນທັມ-ຊີວິດອັນຄົບບໍຣິບູນ. ພຣະເຢຊູຕ້ອງການໃຫ້ສາວົກຂອງພຣະອົງແລະພວກເຮົາຮູ້ວ່າອັນໃດເປັນອັນໃດ.

ຄຸນຄ່າໃນປະຣິມານ-ວັດຖຸສິ່ງຂອງໃນໂລກ-ບໍ່ຖາວອນແລະບໍ່ມີພະລັງອຳນາດເຮັດໃຫ້ຊີວິດຂອງພວກເຮົາຄົບບໍຣິບູນ. ເມື່ອເອົາຊີວິດຂອງພວກເຮົາໄປເດີມພັນກັບ "ຊັບສົມບັດໃນໂລກນີ້" ໃຫ້ວັດຖຸເປັນພຣະທຽມ ຜົນຕາມມາໃນຊີວິດຈະເກີດຄວາມຮ່າງເຫີນລະຫວ່າງພວກເຮົາກັບພຣະເຈົ້າແລະຣາຊອານາຈັກຂອງພຣະອົງ. ມອດ, ຂີ້ຫມ້ຽງ, ແລະຂະໂມຍ

ກໍຈະປາກົດຂຶ້ນບໍ່ພຽງແຕ່ໃນສິ່ງຂອງເຊິ່ງພວກເຮົາມີເທົ່ານັ້ນ ແຕ່ກັບຊີວິດຂອງພວກເຮົາອີກດ້ວຍ. ເມື່ອທຽບຊາວອະເມຣິກາສ່ວນໃຫຍ່ກັບປະຊາຊົນຂອງຊົນຊາດອື່ນແລ້ວນັບວ່າມີຄວາມຮັ່ງມີຫລາຍ. ພວກເຮົາມີຊັບສິນບັດຢູ່ໃນໂລກ. ຄໍາຖາມສໍາລັບພວກເຮົາແຕ່ລະຄົນນັ້ນມີຢູ່ວ່າ, ຊັບສິນບັດເປັນນາຍຂອງພວກເຮົາ, ຫລືວ່າພວກເຮົາເປັນນາຍຂອງຊັບສິນບັດ?

ຫລາຍປີຜ່ານມາ ເຮືອນຂອງເພື່ອນພວກຂ້າພະເຈົ້າຖືກໄຟໄຫມ້. ທຸກສິ່ງທຸກຢ່າງຖືກໄຟເຜົາຜານໄປຫມົດ. ໃນຂນະທີ່ພວກເຂົາໄດ້ຮັບການເລົ້າໂລມຈິດໃຈ ຜູ້ເປັນສາມີໄດ້ຕອບພວກຂ້າພະເຈົ້າວ່າ, ແນ່ນອນ ເຈັບປວດຫລາຍເມື່ອເຫັນສິ່ງຂອງທີ່ເຄີຍມີຖືກໄຟກືນກິນຈົນຫມົດ. ຫລາຍສິ່ງຫລາຍຢ່າງທີ່ທ່ານເຫັນກໍເອົາຄືນມາບໍ່ໄດ້-ມູນເກົ່າໆຈາກພໍ່ແມ່ແລະປູ່ຍ່າຕາຍາຍກໍເອົາຄືນມາບໍ່ໄດ້, ຮູບຖ່າຍແຕ່ກ່ອນ, ຂໍ້ມູນທີ່ບັນທຶກໄວ້ກໍເສັຽໄປຫມົດ. ແຕ່ສິ່ງເຫລົ່ານັ້ນເປັນຂອງເກົ່າ. ສິ່ງສໍາຄັນນັ້ນ-ຄວາມຮັກໃນຄອບຄົວແລະກັບພຣະເຈົ້າ-ຍັງຫມັ້ນຄົງຢູ່ ບໍ່ສູນຫາຍໄປຈັກເທື່ອ. ພວກເຮົາອາດຈະເປັນຜູ້ດີກວ່າເກົ່າເພາະວ່າເຫດການທີ່ເກີດຂຶ້ນ.

ເບິ່ງແລ້ວຖືກຕາ (6:22-23)
ຂໍ້ທີ 22-23 ກ່າວເຖິງເຣື່ອງຕາເປັນດວງສະວ່າງຂອງຮ່າງກາຍ. ພຣະທັມສອງຂໍ້ນີ້ໄດ້ຂັ້ນຢູ່ລະຫວ່າງຂໍ້ທີ 19-21 ແລະ25-24. ຄໍາຖາມອາດຈະເກີດຂຶ້ນໃນຂນະທີ່ພວກເຮົາອ່ານຂໍ້ທີ 22-23, ເຣື່ອງຂອງຕາຈະມາພົວພັນຫຍັງກັບເຣື່ອງຊັບສິນບັດ?

ຄົນໃນສມັຍນັ້ນມັກໃຊ້ຄໍາອຸປມາ. ຕາປຽບເຫມືອນກັບຄຸນລັກສະນະຂອງຄົນຜູ້ນຶ່ງ. ໃນສັງຄົມຂອງພວກເຮົາກໍ່ເຊັ່ນກັນບາງຄັ້ງ ພວກເຮົາອາດຈະໄດ້ຍິນພວກເພິ່ນເວົ້າເຖິງຕາແລະຄຸນລັກສະນະ. ທ່ານອາດຈະເຄີຍໄດ້ຍິນຄໍາບອກກ່າວເຖິງຕາລ່ອງລອຍ (having a wandering eye), ຄວາມຫມາຍນັ້ນຄືຕາບໍ່ສັດຊື່ເບິ່ງໄປໂລເລ.
ອີກຄໍານຶ່ງທີ່ຂ້າພະເຈົ້າໄດ້ຍິນ
ຕາຊົ່ວຮ້າຍ (an evil eye) ຫມາຍເຖິງຕາສາບແສ່ງຄົນອື່ນ.

ພວກເຮົາສາມາດຈະເຫັນການເຊື່ອມໂຍງຂໍ້ພຣະທັມຕ່າງໆຈາກຄໍາສອນຂອງພຣະເຢຊູ ຊຶ່ງກ່າວເຖິງເຣື່ອງຂອງຮາກຕຶກສອງຢ່າງ ການສ້າງຕຶກຢູ່ເທິງດານຫີນ ແລະການສ້າງຕຶກຢູ່ເທິງຫາດຊາຍ (7:24-26). ຖ້າຫາກວ່າ "ຕາ" ຂອງພວກເຮົາ-ຄຸນລັກສະນະຂອງພວກເຮົາ - ບໍ່ສາມາດເບິ່ງເຫັນແລະໄຈ້ແຍກວ່າອັນໃດມີຄຸນຄ່າອັນຕລອດໄປແລະອັນໃດເປັນພຽງແຕ່ຊົ່ວຄັ້ງຊົ່ວຄາວເທົ່ານັ້ນ ພວກເຮົາກໍຈະປະເຊີນກັບບັນຫາ.

ພວກເຮົາເຄີຍໃຊ້ຄໍາເວົ້າອອກມາວ່າ ຕາເປັນແສງສະວ່າງຂອງຈິດວິນຍານ. ພຣະເຢຊູຊົງໃຊ້ຄໍາເວົ້າໃຫ້ເຫັນພາບພົດຂອງຕາທີ່ເຫັນແສງສະວ່າງ ໂດຍຫມາຍເຖິງການເບິ່ງໃຫ້ຄັກແນ່ແລະການຕັດສິນໃຈໃຫ້ຖືກຕ້ອງ. ຖ້າຕາຂອງຄົນໃດຫລືຈິດວິນຍານຂອງຄົນໃດມືດມົວ ຄົນຜູ້ນັ້ນກໍບໍ່ສາມາດປັກຕາໃສ່ພຣະເຈົ້າ. ຄົນຜູ້ນັ້ນກໍຈະຖືກຊັກຊວນໃຫ້ປັກຕາໃສ່ກັບຊັບສິນບັດຊຶ່ງເປັນສິ່ງອັນບໍ່ຫມັ້ນຄົງ.

ຄວາມຈົງຮັກພັກດີຖືກແບ່ງແຍກ (6:24)
ເບື້ອງຫລັງໃນພຣະທັມຕອນນີ້ແມ່ນກ່າວເຖິງເຣື່ອງຂອງຂ້ອຍໃຊ້ຄົນນຶ່ງ. ຂ້ອຍໃຊ້ຜູ້ນີ້ໄດ້ອອກແຮງງານໃຫ້ນາຍສອງຄົນ ແລະຕາມປະສົບການແລ້ວພິສູດໃຫ້ເຫັນວ່າແມ່ນບໍ່ໄດ້ຜົນ. ຂ້ອຍໃຊ້ຜູ້ນັ້ນຈະມີຄວາມຈົງຮັກພັກດີຕໍ່ນາຍຜູ້ນຶ່ງແລະລາວຈະບໍ່ມີຄວາມຈົງຮັກພັກດີຕໍ່ອີກນາຍຜູ້ນຶ່ງ. ເມື່ອລາວຖືກດຶງຈາກສອງຝ່າຍການອອກແຮງງານກໍຈະມີຜົນກະທົບກະເທືອນ.

ພຣະທັມຂໍ້ນີ້ເປັນຫົວໃຈຂອງຂໍ້ທີ 19-34. ພຣະເຢຊູມີເຈຕະນາກ່າວຢ່າງສັ້ນໆແລະແຈ່ມແຈ້ງໃຫ້ຮູ້. ເງິນ, ຄວາມຮັ່ງມີ, ຊັບສົມບັດ-ສິ່ງຂອງເຫລົ່ານີ້ເປັນພາກສ່ວນໃນຊີວິດຂອງພວກເຮົາ. ເຖິງຢ່າງໃດກໍຕາມ ພວກເຮົາຈະໄວ້ວາງໃຈໃນສິ່ງຂອງເຫລົ່ານີ້ຈົນຫມົດກໍບໍ່ໄດ້. ສິ່ງຂອງເຫລົ່ານີ້ເປັນພິດໄພຕໍ່ພວກເຮົາກໍໄດ້ ພວກມັນຈະຍາດແຍ່ງຄວາມຈົງຮັກພັກດີຂອງພວກເຮົາທີ່ມີຕໍ່ພຣະເຈົ້າໄປ ພວກມັນຈະເປັນສິ່ງທີ່ຫລອກລວງໃຫ້ພວກເຮົາຫ່າງເຫີນຈາກພຣະເຈົ້າ ເມື່ອເປັນດັ່ງນັ້ນ ພວກເຮົາກໍບໍ່ສາມາດຢັ່ງຮູ້ໄດ້ຈາກສິ່ງປະເສີດຂອງຊີວິດອັນແທ້ຈິງ.

ຜູ້ທີ່ມອບຊີວິດຈິດໃຈໃຫ້ພຣະເຈົ້າຈະເຫັນຄວາມຫມາຍອັນແທ້ຈິງຂອງຄວາມຮັ່ງມີ. ເມື່ອໃຊ້ຄວາມຮັ່ງມີຢ່າງຖືກຕ້ອງກໍເປັນການຖວາຍກຽດໃຫ້ແກ່ພຣະເຈົ້າ.

<u>ຊີວິດຖືກປັ່ນປ່ວນ</u> (6:25-34)
ຄໍາວ່າ "ດ້ວຍເຫດນັ້ນ" ໃນຂໍ້ທີ 25 ເປັນຄໍາເວົ້າທີ່ໃຊ້ຕໍ່ຫົວເຣື່ອງຈາກຂໍ້ທີ 24 ໄປຫາຂໍ້ທີ 25-34 ເພື່ອບັນລະຍາຍໃຫ້ລະອຽດ ເຖິງຄວາມຫມາຍຂອງຂໍ້ທີ 24.

ແມ່ນອັນໃດທີ່ສະແດງອອກມາໃຫ້ເຫັນເຖິງຄວາມຈົງຮັກພັກດີຕໍ່ "ເງິນຄໍາ" (6:24)? ແມ່ນອັນໃດທີ່ຍັບຍັ້ງອາການຂອງການສະແດງອອກຢ່າງນີ້ເພື່ອພວກເຮົາ? ຖ້າຜູ້ທີ່ມາຟັງບໍ່ເຂົ້າໃຈການຂຍາຍຄວາມຂອງພຣະເຢຊູໃນຂໍ້ທີ 24 ພວກເຂົາກໍຄົງຈະເຂົ້າໃຈໃນຄໍາບັນລະຍາຍຂອງພຣະອົງໃນຂໍ້ທີ 25-34. ພຣະທັມຂໍ້ນີ້ເປັນເຣື່ອງລາວທີ່ໄດ້ບັນລະຍາຍກ່ຽວກັບເຣື່ອງຂອງຄວາມຮັ່ງມີ ຊຶ່ງໄດ້ບັນລະຍາຍເປັນກາບກອນໃນພຣະຄັມພີ ເປັນທິດທາງຊ່ອຍໃຫ້ພວກເຮົາເຂົ້າໃຈເຖິງເນື້ອໃນຂອງເຣື່ອງນີ້, ເພື່ອໃຫ້ຮູ້ເຖິງຜົນສະທ້ອນຂອງຄວາມຮັ່ງມີຕໍ່ພວກເຮົາ ແລະໃຫ້ພວກເຮົາຮູ້ຈັກເບິ່ງພາບພົດຂອງຄວາມຮັ່ງມີ.

<u>ຢ່າກະວົນກະວາຍ (6:25).</u> ພຣະເຢຊູຮູ້ພວກເຮົາດີກວ່າພວກເຮົາຮູ້ຕົວຂອງພວກເຮົາເອງ. ພຣະອົງບໍ່ໄດ້ເລີ່ມຕົ້ນດ້ວຍຄໍາຖາມວ່າ <u>ທ່ານກະວົນກະວາຍບໍ່?</u> ພຣະອົງຊົງສັນນິຖານວ່າຄວາມກະວົນກະວາຍເປັນພາກສ່ວນນຶ່ງຂອງຊີວິດ.

ແນ່ນອນ ພຣະເຢຊູບໍ່ໄດ້ສັນນິຖານຜິດ. ພວກເຮົາຢູ່ໃນຈໍາພວກທີ່ຖືກສ້າງຂຶ້ນມາທີ່ມີຄວາມກະວົນກວາຍ. ຜູ້ທີ່ພົວພັນກັບເຣື່ອງສຸຂພາບອານາມັຍຂອງພວກເຮົາກໍມີຫລັກຖານຢັ້ງຢືນໃຫ້ເຫັນເຖິງຜົນສະທ້ອນໃນຄວາມເປັນຫ່ວງໄຍກັບຊີວິດຂອງພວກເຮົາ.

ພຣະເຢຊູຊົງເຕືອນບໍ່ໃຫ້ກະວົນກະວາຍນໍາແມ່ນແຕ່ສິ່ງຈໍາເປັນທີ່ພວກເຮົາເປັນມະນຸດມີ-ອາຫານແລະເສື້ອຜ້າ. ພຣະອົງຮຽກຮ້ອງໃຫ້ພວກເຮົາລະນຶກຢູ່ສເມີວ່າຊີວິດຂອງພວກເຮົາກໍລື່ນກວ່າຂອງເຫລົ່ານັ້ນ.

<u>ພຣະເຈົ້າ, ການຊົງສ້າງ, ແລະພວກເຮົາຫມົດທຸກຄົນ (6:26-31).</u> ພຣະເຢຊູໄດ້ຍົກເອົາຕົວຢ່າງອັນທັນເຫັນກັບຕາມາໃຫ້ເບິ່ງ. ຜູ້ທີ່ມາຟັງພຣະອົງຫລຽວຂຶ້ນໄປທັງເທິງແລະຫລຽວເບິ່ງອ້ອມຂ້າງອ້ອມແອ້ມກໍເຫັນວ່າມີນົກຢູ່ທີ່ນັ້ນ. ນົກມີຢູ່ມີກິນເພື່ອຢູ່ລອດ ແມ່ນການຊົງປະທານມາຈາກພຣະເຈົ້າ. ຫລັກຄໍາສອນຂອງພຣະອົງໄດ້ສອນໃຫ້ຮູ້ວ່າ ແນ່ນອນຖ້າພຣະເຈົ້າຊົງໂຜດປະທານອາຫານໃຫ້ນົກ ແລະໃຫ້ສັດສາວາສິ່ງທີ່ພຣະອົງໄດ້ຊົງສ້າງມານັ້ນ ພຣະອົງຈະປະທານໃຫ້ລູກຂອງພຣະອົງຢ່າງແນ່ນອນ. ຖ້າຄວາມຢາກໄດ້ຂອງພວກເຮົາຫາກເກີນກວ່າຄວາມຕ້ອງການແລ້ວ ຄວາມກະວົນກະວາຍຂອງພວກເຮົາກໍຈະເຮັດໃຫ້ສາຍຕາມືດມົວໄປ ພວກເຮົາກໍຈະບໍ່ເຫັນການຊົງໂຜດປະທານຈາກພຣະເຈົ້າທີ່ຕຽມ

ພ້ອມໄວ້ໃຫ້ພວກຢູ່ສເມີ ບໍ່ແມ່ນບໍ?

ດອກໄມ້ໃນທົ່ງມີສີສັນສວຍງາມ. ພຣະເຈົ້າຊົງປະທານຄວາມສວຍງາມໃຫ້ແກ່ດອກໄມ້ເຫລົ່ານັ້ນ ດ້ວຍການບູຣະນະຮັກສາຂອງການຊົງສ້າງ. ພຣະເຢຊູຊົງໃຫ້ຄຳຖແລງການ. ຖ້າພຣະເຈົ້າຊົງມີພຣະທັຍຮັກສາພືດພັນນາໆຊະນິດ ເຊິ່ງເກີດມາຊົ່ວລະຍະນຶ່ງເທົ່ານັ້ນ, ພຣະອົງຈະບໍ່ເບິ່ງແຍງຮັກສາແລະປະທານໃນສິ່ງທີ່ຕ້ອງການໃຫ້ພວກເຮົາແດ່ບໍ່?
<u>ຢ່າກະວົນກະວາຍ (6:31-32).</u> "ຢ່າກະວົນກະວາຍ" ອັນນີ້ແມ່ນຄຳສັ່ງຂອງພຣະເຢຊູເທື່ອທີສອງ. ວັດຖຸສິ່ງຂອງແລະເສື້ອຜ້າ-ຢ່າໄດ້ກະວົນກະວາຍກັບສິ່ງເຫລົ່ານີ້ເລີຍ. ໃຫ້ພໍໃຈກັບອາຫານທີ່ມີກິນແລະເສື້ອຜ້າທີ່ໄດ້ໃສ່ຢູ່ນັ້ນ, ຢ່າໄດ້ໄປກະວົນກະວາຍໄປວ່າເສື້ອຜ້ານັ້ນຢູ່ໃນສມັຍອັນລ້າສຸດຫລືບໍ່. ຈົ່ງມີຄວາມຮູ້ສຶກຕົວຢູ່ສເມີ ໃນສິ່ງທີ່ພຣະເຈົ້າຊົງປະທານໃຫ້ທ່ານໄດ້ມີຢູ່ມີກິນແຕ່ລະວັນກໍພໍແລ້ວ.

ພວກຕ່າງຊາດ, ຫມາຍເຖິງຜູ້ທີ່ບໍ່ຕິດຕາມພຣະເຈົ້າ ຫລືຜູ້ທີ່ບໍ່ຮູ້ຈັກພຣະເຈົ້າ, ສະແດງອອກໃຫ້ເຫັນວ່າຄຸນຄ່າຊີວິດຂອງພວກເຂົາແມ່ນຂຶ້ນຢູ່ກັບສິ່ງຂອງ. ພວກເຂົາເປັນຫ່ວງວ່າຈະກິນຫຍັງ, ຈະດື່ມຫຍັງ, ແລະຈະນຸ່ງຫຍັງ ແລະເຫັນວ່າສິ່ງເຫລົ່ານີ້ເກີນກວ່າຊີວິດຂອງພວກເຂົາອີກ.

ຄຣິສຕຽນສາມາດຫມັ້ນໃຈໄດ້ວ່າ ບໍ່ຈຳເປັນໄປກະວົນກະວາຍເລີຍ, ພຣະເຈົ້າຊົງໄປນຳຫນ້າພວກເຮົາແລະພຣະອົງຊົງປະທານໄວ້ໃຫ້ພວກເຮົາແລ້ວ.

<u>ແຕ່ກ່ອນອື່ນ (6:33).</u> ພຣະເຢຊູຊົງສອນວ່າ ຊີວິດນີ້ທັມດາງ່າຍແທ້ໆ. ທຸກສິ່ງທຸກຢ່າງມາຈາກສິ່ງນຶ່ງເທົ່ານັ້ນ. ພວກເຮົາສແວງຫາຣາຊອານາຈັກຂອງພຣະເຈົ້າ. ຊອກສແວງຫາຣາຊອານາຈັກຂອງພຣະເຈົ້າ ຫມາຍຄວາມວ່າຊອກຫາພຣະເຈົ້າ. ເມື່ອຮັບເອົາພຣະເຈົ້າແລ້ວ ທຸກສິ່ງທຸກຢ່າງກໍຈະຄ່ອຍເຂົ້າຮູບເຂົ້າຮອຍຂອງມັນເອງ.

<u>ຢ່າກະວົນກະວາຍ (6:34).</u> "ເຫດສັນນັ້ນ" ຫລືວ່າພື້ນຖານຂອງເຣື່ອງທີ່ຍົກມາເປັນຕົວຢ່າງແລະຄວາມສຳຄັນຂອງເນື້ອເຣື່ອງ, ການເລີ້ມຫົວເຣື່ອງ ແລະຕອນມ້ວນທ້າຍຂອງພຣະເຢຊູ, ພຣະອົງຊົງໃຊ້ບົດເທສນາເປັນການສັ່ງສ່ອນກ່ຽວກັບເຣື່ອງວັດຖຸໃຫ້ກັບສາວົກຂອງພຣະອົງ.

ພຣະອົງຊົງໃຊ້ຄຳວ່າ "ຢ່າກະວົນກະວາຍ" ເປັນເທື່ອທີສາມ. ໃຫ້ອ່ານພຣະທັມໃນເຣື່ອງນີ້ອີກເທື່ອນຶ່ງ ແລະໃຫ້ສັງເກດຄຳເວົ້າທີ່ຕາມມາຫລັງຈາກຄຳວ່າ "ຢ່າກະວົນກະວາຍ" ທັງສາມເທື່ອ. ຄຳເວົ້ານີ້ໄດ້ຫວນກັບໄປກັບມາ ເພື່ອຊັກສວນໃຫ້ເອົາໃຈໃສ່ໃນຄຳສອນແລະໃຫ້ຂຍາຍຄວາມກວ້າງອອກໄປ.

<u>ຄຳຖາມ</u>

1. ຄຸນນະພາບຂອງຊີວິດຂອງທ່ານຈະດີຂຶ້ນຢ່າງໃດ ໂດຍປາສຈາກບາງຢ່າງທີ່ທ່ານມີ?
2. ທ່ານຈະໃຫ້ຄຳແນະນຳແກ່ນັກຮຽນທີ່ຈົບມະຫາວິທະຍາລັຍໃຫມ່ໆຢ່າງໃດ ເມື່ອລາວກ່າວວ່າຕາບໃດອາຍຸຂອງລາວຮອດສາມສິບປີ ລາວຈະຕ້ອງຫາເງິນໃຫ້ໄດ້ລ້ານດອນລາ?
3. ໃຫ້ສັງເກດເບິ່ງໃຫ້ຖືກຕ້ອງວ່າ ຄົນທຸກອາດຈະມີບັນຫາຫລາຍເທົ່າກັນກັບຄົນຮັ່ງມີກ່ຽວກັບເຣື່ອງວັດຖຸນິຍົມບໍ່?
4. ທ່ານຈະເອີ້ນທ່ານເອງເປັນເຈົ້າກັງວົນບໍ່? ທ່ານເປັນຫ່ວງນຳອັນໃດ? ທ່ານເຮັດຫຍັງໄດ້ບໍ່ກັບຄວາມເປັນຫ່ວງທີ່ເກີດຂຶ້ນກັບທ່ານ?

ສຈ. ບຸນເຮັ່ງພົງປຣະພັນ

# ບົດຮຽນທີ 5
# ເລືອກເອົາຊີວິດທີ່ຢູ່ໃຕ້ກົດລະບຽບຂອງພຣະເຈົ້າ

---

ຂໍ້ພຣະຄັມພີສໍາລັບບົດຮຽນ: ມັດທາຍ 7:1-27
ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ມັດທາຍ 7:1-27
ຈຸດສໍາຄັນຂອງບົດຮຽນນີ້: ໃຊ້ຊີວິດຢູ່ໃຕ້ກົດລະບຽບຂອງພຣະເຈົ້າໄດ້ຮຽກຮ້ອງໃຫ້ພວກເຮົາສະແດງຄວາມຮັກໃຫ້ກັບຄົນອື່ນ ແລະໃຫ້ເພິ່ງພຣະເຈົ້າໃນສິ່ງທີ່ພວກເຮົາຕ້ອງການ ແທນທີ່ຈະເດີນໄປໃນທາງຜິດ.
ຄໍາຖາມເພື່ອການສໍາຣວດ: ຖ້າພວກເຮົາຕິດຕາມຄໍາສອນຂອງພຣະເຢຊູ ແລ້ວຈະມີຄວາມແຕກຕ່າງຢ່າງໃດໃນສາຍສັມພັນຣະຫວ່າງພວກເຮົາກັບພຣະເຈົ້າແລະກັບຄົນອື່ນ?
ຈຸດປະສົງຂອງບົດຮຽນນີ້: ການຕັດສິນໃຈຈະນໍາຄໍາສອນຂອງພຣະເຢຊູມາປະຕິບັດ

## ບົດຮຽນ

### ຄໍານໍາ

ຈາກຕົວຢ່າງສັ້ນໆຫລາຍເຣື່ອງ ພຣະເຢຊູຊົງປະທານຊ່ອງທາງໃຫ້ຜູ້ທີ່ຈະຕັດສິນອັນໃດລົງໄປ ຫລືໃຫ້ສັງເກດການເບິ່ງສິ່ງທີ່ດີທີ່ສຸດ ແລະສິ່ງທີ່ບໍ່ດີປານໃດ ໃນການໃຊ້ຊີວິດຢູ່ໃນຖານະເປັນສາວົກຂອງພຣະອົງ.

### ການຕັດສິນວ່າກ່າວຄົນອື່ນ (7:1-6)

ໂຄງຮ່າງຂອງພຣະທັມມັດທາຍບົດທີ 7 ປະກອບດ້ວຍຫລາຍເຣື່ອງທີ່ເປັນຕາໜ້າຈັບໃຈສໍາລັບພວກເຮົາ. ຈາກເຣື່ອງນີ້ງຕໍ່ໄປຫາອີກເຣື່ອງນຶ່ງຊຶ່ງມີຫົວຂໍ້ກ່ຽວກັບເຣື່ອງການຕັດສິນວ່າກ່າວ ຫລືການສັງເກດການ.

ຖ້າພວກເຮົາຢຸດຢູ່ແຕ່ຂໍ້ທີ 1 ຂອງບົດທີ 7, "ຢ່າກ່າວໂທດ" ແລ້ວຍຶດເອົາແຕ່ຄໍາດຽວນັ້ນ ພວກເຮົາກໍຈະເຂົ້າໃຈຄວາມໝາຍຂອງພຣະເຢຊູຜິດໄປ.

ໃຫ້ພວກເຮົາມາທໍາຄວາມເຂົ້າໃຈຄວາມໝາຍຂອງພຣະທັມຕອນນີ້ໃຫ້ດີ: <u>ໃນຂນະທີ່ທ່ານຕັດສິນວ່າກ່າວຄົນອື່ນ, ໃຫ້ລະວັງໃຫ້ດີ; ຄົນອື່ນກໍຈະໃຊ້ມາຕະຖານອັນດຽວກັນກັບທ່ານ</u>. ພວກເຮົາສາມາດຈະຍືນຢັດຕໍ່ຄໍາຕິຕຽນຂອງພວກເຮົາເອງຊຶ່ງເຄີຍໃຊ້ຕິຕຽນທ່າທາງຊີວິດຂອງຄົນອື່ນຫລືບໍ່? ທິດທາງຊຶ່ງນໍາພວກເຮົາໄປສູ່ຄວາມຊອບທັມກໍສາມາດຈະຍືນຢັດຕໍ່ເຫດການດັ່ງກ່າວ.

ພຣະເຢຊູຊົງກ່າວເຖິງການສະແດງອອກເຖິງຄວາມຊອບທັມຊຶ່ງພວກຟາຣີຊາຍຕັ້ງຂຶ້ນເອງ ແລ້ວໝິ່ນປມາດຜູ້ທີ່ເຮັດເໝືອນພວກເຂົາບໍ່ໄດ້. ບໍ່ຍາກຈັກໜ້ອຍເລີຍທີ່ຈະພົບພວກຟາຣີຊາຍໃນສມັຍນີ້ ບາງທີຢູ່ໃນທີ່ປະຊຸມຂອງທ່ານກໍໄດ້. ພວກເຂົານໍາກົດເກດທີ່ກໍ່ໃຫ້ເກີດຄວາມລໍາບາກທາງຈິດໃຈແລະທາງຮ່າງກາຍ ທີ່ບໍ່ມີຄວາມຈໍາເປັນເລີຍເຂົ້າມາໃນໂບດ ແລ້ວສ້າງຄວາມສັບສົນເທົ່າໃຫ້ກັບຄົນໃນໂບດ. ພວກເຂົາມັກຈັບຜິດເລັກຈັບຜິດໜ້ອຍໃນບ່ອນບໍ່ຈະເປັນ. ພວກເຂົາຈະຈັບຜິດໃນການແຕ່ງຕົວຂອງຄົນອື່ນ, ເພງໃນການນະມັສການ, ບົດເທສນາ, ແລະອື່ນໆປາສຈາກເຫດຜົນ. ນອກເໜືອໄປກວ່ານັ້ນ ຄໍາທາບທາມຂອງພວກເຂົາຫາຄໍາເສີມສ້າງໜ້ອຍທີ່ສຸດ. ເບິ່ງເໝືອນກັບວ່າພວກເຂົາເປັນຜູ້ແທນຂອງພຣະເຈົ້າຢູ່ໃນໂລກເພື່ອໄວ້ຖ້າຊອກຫາແຕ່ຄວາມຜິດຂອງຄົນອື່ນ.

ໜ້າສັງເວດຫລາຍ ເຫດການດັ່ງກ່າວນີ້ສາມາດນຳມາເປັນເຣື່ອງຜິດຖຽງກັນໃນທີ່ປະຊຸມ ແລ້ວເຮັດໃຫ້ໂບດສູນເສັຽວຽກເສັຽການແລະຊັບສິນຕ່າງໆ ຊ້ຳບໍ່ແລ້ວຍັງເປັນເຫດໃຫ້ສະມາຊິກອອກໜີໄປຈາກໂບດອີກດ້ວຍ. ມີທາງໃດແດ່ທີ່ຈະແກ້ໄຂໄດ້?

ພຣະເຢຊູຊົງປະທານຈຸດເລີ້ມຕົ້ນໃຫ້ດັ່ງນີ້. ກ່ອນອື່ນທັງໝົດ ພວກເຮົາຜູ້ທີ່ສັງເກດເຫັນຄວາມຜິດຂອງຄົນອື່ນຈະຕ້ອງແກ້ໄຂຄວາມຜິດຂອງພວກເຮົາເອງໃຫ້ຂາວສະອາດເສັຽກ່ອນ. ພວກເຮົາອາດຈະແບກໄມ້ທັງທ່ອນ ລາກໄປລາກມາຈົນບັງຄວາມຜິດຂອງພວກເຮົາເອງກໍໄດ້. ແມ່ນອັນໃດທີ່ພວກເຮົາສັນນິຖານໄວ້ກ່ອນ, ຄິດໄວ້ກ່ອນເຫັນ, ຫລືສົມມຸດໄວ້ລ່ວງໜ້າກ່ອນ ເປັນນິສັຍຕິດຕົວໃນຊີວິດປະຈຳວັນຂອງພວກເຮົາແມ່ນບໍ? ສິ່ງທີ່ກ່າວມານີ້ໄດ້ຖືກທົດສອບດ້ວຍພຣະທັມຄັມພີແລະມີການກັ່ນຕອງຜ່ານທາງການອ້ອນວອນແລ້ວບໍ? ຫລາຍຄັ້ງຫລາຍຄາວ ການປະຕິບັດຕາມປະເພນີນັ້ນເປັນຄຳສອນສືບທອດກັນມາໃຫ້ພວກເຮົາຮຽນຮູ້ແລະພວກເຮົາໃຫ່ຢູ່ກັບ ຊຶ່ງພວກເຮົາໃຊ້ເປັນຫລັກໃນການຕັດສິນເປັນພາກປະຕິບັດນອກເໜືອໄປຈາກພຣະຄັມພີແລະບາງຄັ້ງກໍມາຈາກພາກປະຕິບັດຂອງຄົນນອກສາສນາ.

ກ່ອນພວກເຮົາຈະໄປຕັດສິນວ່າກ່າວຄົນອື່ນໃຫ້ພວກເຮົາຕຶກຕອງເບິ່ງກ່ອນວ່າ ພວກເຮົາໄດ້ຕັດສິນຕົວຂອງພວກເຮົາເອງກ່ອນແລ້ວຫລືຍັງໃນກໍຣະນີນັ້ນ ຖ້າພວກເຮົາໄດ້ຕຶກຕອງຄັກແນ່ແລ້ວ ພວກເຮົາຈຶ່ງໄດ້ຮັບອະນຸຍາດໄປຕັດສິນເຂົາ. ສິ່ງສຳຄັນນັ້ນ ພຣະເຢຊູຊົງໃຫ້ພວກເຮົາຮັບຜິດຊອບໂຕ້ຕອບບຸກຄົນທີ່ໄປຕັດສິນຄົນອື່ນນອກແບບນອກທາງຕາມການຕັດສິນຂອງພວກເຂົາ ບຸກຄົນດັ່ງກ່າວມານີ້ ແທນທີ່ຈະໄປຊ່ອຍໃຫ້ພີ່ນ້ອງສະມາຊິກຈະເຣີນຂຶ້ນ ແຕ່ນຳຄວາມເຈັບປວດມາໃຫ້ທີ່ປະຊຸມ. ການຕັດສິນວ່າກ່າວອັນຖືກຕ້ອງເປັນພາກສ່ວນນຶ່ງຂອງພາຣະກິດຂອງຣາຊແຜ່ນດິນຂອງພຣະເຈົ້າ.

ພາຣະກິດຂອງການສ້າງສາວົກ ແມ່ນພະຍາຍາມເສີມສ້າງຄວາມສາມັກຄີທັມໂດຍຜ່ານການຕັດສິນວ່າກ່າວ ເຊິ່ງເປັນພາຣະກິດອັນຍາກ. ຄົນໃດຄົນນຶ່ງຈະກາຍເປັນຜູ້ທີ່ຖືກຕັດສິນວ່າກ່າວໄດ້ຢ່າງງ່າຍດາຍ. ໃຫ້ຣະມັດຣະວັງໃນການຕັດສິນວ່າກ່າວຄົນໃດຄົນນຶ່ງ ພຣະເຢຊູຊົງໃຫ້ຄຳແນະນຳໄວ້ວ່າ ຢ່າໄດ້ໄປຕັດສິນວ່າກ່າວຄົນໃດທີ່ບໍ່ຍອມຟັງແລະບໍ່ຍອມຮັບຄຳເວົ້າຂອງພວກເຮົາຕາມເຫດຜົນ. ພຣະອົງຈຶ່ງໃຊ້ໝາແລະໝູມາເປັນຕົວຢ່າງໃຫ້ເຫັນທັນຕາ. ເມື່ອຖິ້ມອັນໃດອັນນຶ່ງເບິ່ງເໝືອນກັບອາຫານລົງໄປໃນຕ່ອນໜ້າຂອງພວກມັນ ແລ້ວທ່ານຈຶ່ງຟ້າວຫລີກໜີໄປ. ເມື່ອໝາກັດກັນໃນຖ້າມກາງຝູງຂອງມັນ ຖ້າຜູ້ໃດເຂົ້າໄປແຍກມັນອອກ ມັນກໍຈະກັດຜູ້ນັ້ນ. ຕາມທັມດາແລ້ວ ໝູນັ້ນໂຕຂອງມັນໃຫຽ ມັນສາມມາດແລ່ນຕຳທ່ານໃຫ້ລົ້ມແລ້ວກໍຢຽບທ່ານ. ອີກເທື່ອນຶ່ງ ໃຫ້ຕຽມພ້ອມໃນການຕັດສິນວ່າກ່າວ ໃນຂນະດຽວກັນເມື່ອບຸກຄົນນັ້ນຍອມຮັບຟັງກໍເປັນອັນວ່າກຸ້ມຄ່າຫລາຍ.

<u>ການຂໍ ການຊອກ ແລະການເຄາະ</u> (7:7-12)

ພວກເຮົາບໍ່ຈຳເປັນຈະຕ້ອງໄປເອົາໄມ້ທັງທ່ອນອອກ ແລະພວກເຮົາກໍບໍ່ຈຳເປັນຕ້ອງໄປຕັດສິນໃຈວ່າຍາມໃດຫລືວ່າຈະເອົາສິ່ງສັກສິດນີ້ໄປໃຫ້ຄົນອື່ນຮັບເອົາ. ພວກເຮົາຈະຕ້ອງຕັດສິນວ່າກ່າວຈຸດປະສົງແລະການກະທຳຂອງພວກເຮົາ. ພວກເຮົາຕ້ອງການແຮງພະລັງຈາກເບື້ອງເທິງເຂົ້າມາພົວພັນໃນການກະທຳດັ່ງກ່າວ.

ພຣະເຢຊູຊົງກ່າວອ້າງອີງວ່າ ແຫລ່ງຂອງການຕັດສິນວ່າກ່າວອັນຖືກຕ້ອງນັ້ນແມ່ນໄປຫາພຣະເຈົ້າ. ພວກເຮົາຈະຮູ້ໄດ້ຢ່າງໃດວ່າ ອັນໃດແມ່ນນ້ຳພຣະທັຍຂອງພຣະເຈົ້າ? ພວກເຮົາຖາມພຣະເຈົ້າ (ask). ພາສາລາວໃຊ້ຄຳວ່າໝັ່ນຂໍ. ສຳລັບພາສາອັງກິດແລ້ວ ຄຳວ່າ (ask) ມີຄວາມໝາຍສອງຢ່າງ ຖາມ ຫລືວ່າ ຂໍ.
ຕາມຫລັກວັຍຍະກອນແລ້ວ ແມ່ນ

ໝັ່ນຂໍ ຫລືວ່າໝັ່ນຖາມຫາເອົາ. ເພາະເປັນຄຳເວົ້າທີ່ສະແດງອອກເຖິງມີການຕໍ່ເນື່ອງໄປ, ເໝືອນກັບຄຳວ່າ "ໝັ່ນຊອກ" ແລະ "ໝັ່ນເຄາະ". ພວກເຮົາຈະຕ້ອງຮຽນໝັ່ນຂໍ ບໍ່ແມ່ນພຣະເຈົ້າຫູໜັກ. ແຕ່ວ່າໃນຂະນະທີ່ພວກເຮົາໝັ່ນຂໍນັ້ນ ພວກເຮົາຈະເຫັນວ່າພວກເຮົາຖືກຫລໍ່ຫລອມ ການຕອບສນອງຂອງພວກເຮົາໃຫ້ເຂົ້າກັບຄຳຕອບຈາກພຣະອົງ.

ຖ້ອຍຄຳຂອງພຣະເຢຊູໄດ້ເຮັດໃຫ້ພວກເຮົາຄິດວ່າ ບໍ່ວ່າພວກເຮົາຢາກໄດ້ອັນໃດກໍຕາມ, ພວກເຮົາສາມາດທູນຂໍກັບພຣະເຈົ້າ. ປະສົບການໃນການທູນຂໍຂອງພຣະເຢຊູຢູ່ໃນສວນເຄັດເຊມາເນໄດ້ສະແດງໃຫ້ເຫັນວ່າ ພຣະອົງຕ້ອງການໃຫ້ຄວາມລຳບາກເຄື່ອນອອກໄປຈາກພຣະອົງ ແຕ່ບໍ່ໄດ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ. ແຕ່ພຣະອົງໄດ້ຮັບພະລັງ ເພື່ອໃຫ້ພຣະອົງໄດ້ສູ້ທົນກັບຄວາມລຳບາກທີ່ລໍຄອຍພຣະອົງຢູ່ຂ້າງໜ້າ. ອັນນີ້ແຫລະ ແມ່ນຜົນທີ່ໄດ້ຮັບຈາກການທູນຂໍ-ຜູ້ນັ້ນໄດ້ເປີດຕ້ອນຮັບຈາກການຊົງຕອບຂອງພຣະເຈົ້າບໍ່ວ່າຈະມາໃນຮູບໃດກໍຕາມ. ໃນຂະນະທີ່ພວກເຮົາທູນຂໍນັ້ນ ພວກເຮົາສາມາດເຂົ້າໃຈວ່າມີຫລາຍທາງໄປກວ່າຕອນເລີ້ມທູນຂໍ.

ສະນັ້ນພວກເຮົາຈະຕ້ອງ "ໝັ່ນຊອກ" ໃຫ້ທົ່ວເຖິງເພື່ອຈະຮູ້ສິ່ງທີ່ຈະຕ້ອງທຳໃຫ້ແລ້ວຮຽບຮ້ອຍ. ເຮົາຈະຕອບຄືນນີ້ຫລືຄືນນັ້ນວ່າຢ່າງໃດ? ເຮົາຈະເຂົ້າຫາເຂົາໄດ້ຢ່າງໃດ? ການອ້ອນວອນແມ່ນນຳສິ່ງດັ່ງກ່າວນີ້ມາວາງໄວ້ຢູ່ຕໍ່ໜ້າຂອງພຣະເຈົ້າ. ການຊອກມີຄວາມໝາຍວ່າ ຍົກອັນໃດອັນນຶ່ງທີ່ເຫັນວ່າເປັນໄປໄດ້ຂຶ້ນມາ ແລ້ວປີ້ນໜ້າປີ້ນຫລັງເບິ່ງເບິ່ງແຕ່ເທິງຈົນຮອດທາງລຸ່ມ. ໃນຄຳຕອບທີ່ພົບມາແລ້ວ ພວກເຮົາຈະພິຈາຣະນາເບິ່ງຫລາຍທາງໃນການຕອບຮັບຕໍ່ຄຳຕອບນັ້ນ. ຄຳຮັບຮອງຈາກພຣະເຢຊູວ່າພຣະເຈົ້າຊົງຕອບຄຳອ້ອນວອນ. ການອ້ອນວອນອັນເໝາະສົມ ແມ່ນພວກເຮົາສາມາດພ້ອມສເມີ ເຖິງຢ່າງໃດກໍຕາມຄຳຕອບນັ້ນຈະເຮັດໃຫ້ພວກເຮົາມີຮູບສົມແລະມີຄວາມຮູ້ສຶກທີ່ຈະຮູ້ຈັກກັບຄຳຕອບນັ້ນ.

ການທູນຂໍ-ເຂົ້າພົວພັນໃນການສົນທະນາກັບພຣະເຈົ້າ. ການຊອກຫາ-ຈອບເບິ່ງຄ່ອງຄອຍເພື່ອຄຳຕອບ. ຕໍ່ມາພຣະເຢຊູຊົງບອກໃຫ້ພວກເຮົາວ່າ "ໝັ່ນເຄາະ." ຢ່າງໜ້ອຍສາມຢ່າງທີ່ຜູກພັນກັນໄດ້ຖືກແນະນຳມາ. ພວກເຮົາ "ທູນຂໍ," ພວກເຮົາກໍກາງຕໍ່ທີ່ຈະໄດ້ຍິນຄຳຕອບ. ພວກເຮົາ "ຊອກ," ພວກເຮົາກໍກາງຕໍ່ທີ່ຈະໄດ້ພົບຄຳຕອບ. ພວກເຮົາ "ເຄາະ," ພວກເຮົາມີຄວາມຮູ້ສຶກໃນການສໍາຜັດ, ພົວພັນກັບຊີວິດ-ສິ່ງເຫລົ່ານີ້ເປັນສ່ວນປະກອບຂອງການອ້ອນວອນ. ການອ້ອນວອນທີ່ເກີດຜົນນັ້ນຈະບໍ່ໄດ້ມາຈາກການລີ້ຊ່ອນຕົວຢູ່ໃນເງົາມືດ. ແທນທີ່ຈະເປັນຢ່າງນັ້ນ ການອ້ອນວອນໄດ້ສະແດງອອກເຖິງຄວາມກ້າຫານເພື່ອເຂົ້າໄປໃນເຂດແດນເຊິ່ງພວກເຮົາອາດຈະທໍ້ແທ້ມາກ່ອນ. ການອ້ອນວອນມີສິດອຳນາດເຮັດໃຫ້ມີຄວາມກ້າຫານໃນຕົວ. ແຕ່ການອ້ອນວອນອັນຖືກຕ້ອງມີຄວາມຍືນຢັດຢ່າງໝັ້ນແກ່ນ.

<u>ການຕັກເຕືອນແລະການຮັບຮອງ</u> (7:13-27)

<u>ການຕັກເຕືອນ</u>. ໃນພຣະທັມຕອນນີ້ມີຂໍ້ຄຳເຕືອນໄວ້ວ່າ ໃຫ້ລະວັງໄວ້ໃນການດຳເນີນຊີວິດຊອກຫາເດີນທາງສະບາຍທາງນັ້ນແຫລະຈະນຳໄປສູ່ຄວາມຈິບຫາຍ (7:13-14). ໃຫ້ສັງເກດເບິ່ງຜູ້ທີ່ງາມແຕ່ພາຍນອກ ບາງຄັ້ງງາມເກີນໄປ (7:15-23). ພວກເຂົາຈະໃຊ້ທ່ານຈົນໝົດຕົວ ຖ້າທ່ານປ່ອຍໂອກາດໃຫ້ເຂົາ. ທ່ານສາມາດສັງເກດເບິ່ງອອກບໍ່ ຜູ້ທີ່ຕົວະຍົວະປອມທີ່ຊົ່ວທີ່ສຸດໃນໂລກແມ່ນຜູ້ທີ່ອ້າງຕົນວ່າເປັນຜູ້ປະຕິບັດທາງສາສນາໃນຖ້າມກາງພວກເຮົາ? ພວກເຮົາຈະເບິ່ງອອກໄດ້ຢ່າງໃດ ຜູ້ໜ້າໄຫວ້ຫລັງຫລອກ, ບໍ່ພຽງແຕ່ຢູ່ໃນໂບດເທົ່ານັ້ນ ແຕ່ມີຖົມເຖໄປຢູ່ຖ້າມກາງພວກເຮົາ?

<u>ການຮັບຮອງ</u>. ຜູ້ທີ່ໝັ່ນຂໍ, ໝັ່ນຊອກ ແລະໝັ່ນເຄາະຈະໄດ້ພົບທາງແຄບ, ເຊິ່ງເປັນທາງອັນຄົບບໍຣິບູນ. ຟັງເບິ່ງແລ້ວເຫັນວ່າສົມເຫດສົມຜົນ, ຄວາມສັດຊື່ເຮັດໃຫ້ເກີດຜົນ. ຜູ້ທີ່ປະຕິບັດຕາມນ້ຳພຣະທັຍຂອງພຣະເຈົ້າຈະໄດ້ຮັບຣາຊແຜ່ນດິນສວັນ. ເອົາໃຈໃສ່ໃນຄຳຮັບຮອງຈາກພຣະເຢຊູນັ້ນສຳຄັນຫລາຍ. ຊີວິດນັ້ນຈຶ່ງຈະເປັນຊີວິດທີ່ແຂງແກ່ນ

(7:24-27).

<u>ການຮັບຮອງວ່າເປັນທີ່ເຊື່ອຖືໄດ້</u> (7:28-29)
ຜູ້ທີ່ມາຟັງເທສນາຢູ່ຈ້າຍພູນັ້ນ ພວກເຂົາໄດ້ຟັງຈາກພຣະອົງຜູ້ທີ່ກ່າວເຖິງເລື່ອງສ່ວນເລິກຂອງຊີວິດ ແລະເປັນຄຳເວົ້າທີ່ເຂົ້າໃຈຢ່າງງ່າຍໆ. ພວກເຂົາເປັນພະຍານໃຫ້ໄດ້ວ່າ ຣາຊອານາຈັກຂອງພຣະເຈົ້າແມ່ນພຣະເຈົ້າ ຊົງຢູ່ໃນຕົວພຣະອົງ. ຜົນຕາມມາ ພວກເຮົາຈຶ່ງມີຄວາມເກງຂາມພຣະອົງ. ພຣະເຢຊູຊົງສັ່ງສອນດ້ວຍອຳນາດເຊິ່ງມາຈາກພຣະເຈົ້າ. ພຣະອົງບໍ່ຕ້ອງມີໜັງສືຊີວະປະວັດເພື່ອນຳມາສເນີໃຫ້ຜູ້ທີ່ມາຟັງພຣະອົງ ເພື່ອຢັ້ງຢືນວ່າພຣະອົງນັ້ນມີຄຸນນະວຸດທິ ຫລືເປັນຜູ້ຊ່ຽວຊານ. ປະຊາຊົນທີ່ມາຟັງພຣະອົງເຂົ້າໃຈເລື່ອງອຳນາດຂອງພຣະອົງຈາກການຕັດກ່າວຂອງພຣະອົງ.

ພວກເຮົາພົບເຫັນວ່າມີບາງຄົນມີຄຸນລັກສະນະດີ ແລະການສະແດງອອກຂອງພວກເຂົາເຮັດໃຫ້ພວກເຮົາຮູ້ວ່າ ພວກເຂົາເປັນຜູ້ເວົ້າແທ້ທຳຈິງ. ຄວາມສັດຊື່ມີຢູ່ໃນຕົວຂອງພວກເຂົາ. ຄົນປະເພດນີ້ຫາພົບໄດ້ຍາກ ບາງຄັ້ງພວກເຮົາເອງຍັງໄກຈາກພວກເຂົາ. ພວກເຂົາຕ່າງຈາກຄົນອື່ນຫລາຍ ພວກເຂົາຖືກຂົ່ມເຫງນິນທາກ່າວຮ້າຍ ເຫມືອນພຣະເຢຊູເຄີຍກ່າວໄວ້ໃນພຣະທັມມັດທາຍ 5:11-12. ໃຫ້ສັງເກດເບິ່ງແມ ໃນປະວັດສາດຂອງຄຣິສຕະສາສນາ. ຜູ້ທີ່ຍືນຢັດຢູ່ໃນຄວາມຊອບທັມແລະເປັນຄົນດີ, ເຫັນແກ່ຄຸນຄ່າຂອງຣາຊອານາຈັກຂອງພຣະເຈົ້າ ຍ່ອມຈະຖືກຂົ່ມເຫງແລະຖືກຂ້າ. ສລຸບແລ້ວ ຜູ້ທີ່ສະແດງຕົນວ່າເປັນຜູ້ທີ່ເຊື່ອຖືໄດ້ນັ້ນ ຜົນທີ່ໄດ້ຮັບກໍນັບວ່າແສນສາຫັດຫລາຍເຕັມທີ.

ໃນຂໍ້ທີ 28-29. ມັດທາຍໄດ້ຂຽນຄຳບັນລະຍາຍມ້ວນທາຍອັນໜ້າສົນໃຈຂອງບົດເທສນາຂອງພຣະເຢຊູ. ລາວຢາກໃຫ້ຜູ້ອ່ານເຫັນຄຳຕອບສນອງຂອງປະຊາຊົນທີ່ໄດ້ຟັງບົດເທສນາຂອງພຣະເຢຊູ. ບັດນີ້ ພວກເຮົາຈະຕ້ອງຖາມຕົວເອງວ່າ, <u>ຄຳຕອບສນອງຂອງພວກເຮົາຕໍ່ບົດເທສນາຂອງພຣະເຢຊູຈະເປັນເຫມືອນກັບຄຳຕອບສນອງຂອງປະຊາຊົນທີ່ມັດທາຍໄດ້ບັນທຶກໄວ້ບໍ່? ພວກເຮົາຈະຂຽນບັນລະຍາຍເຖິງບົດເທສນາຢູ່ຈ້າຍພູວ່າຢ່າງໃດ? ພວກເຮົາຈະຕອບສນອງຕໍ່ການເຊື້ອເຊີນຂອງພຣະເຢຊູຢ່າງໃດ?</u>

<u>ຄຳຖາມ</u>

1. ໃຫ້ອ່ານພຣະທັມລູກາ 6:20-49 (ໃຫ້ເອີ້ນວ່າ ບົດເທສນາຢູ່ທີ່ທົ່ງພຽງ) ແລະໃຫ້ສົມທຽບກັບເບິ່ງກັບພຣະທັມມັດທາຍບົດທີ 5-7. ພຣະທັມສອງເຫລັ້ມນີ້ໃຫ້ທ່ານເຫັນພາບຜິດອັນໃດໃນຄຳສອນແລະການປະກາດຂອງພຣະເຢຊູ?

2. ມີຕົວຢ່າງອັນໃດຈາກການຕັດສິນວ່າກ່າວທີ່ທຳຮ້າຍການສາມັກຄີທັມຂອງຄຣິສຕຽນ ແລະບາງເຫດການທີ່ມີການຕັດສິນວ່າກ່າວຢ່າງຖືກຕ້ອງຈຶ່ງເປັນການເສີມສ້າງການສາມັກຄີທັມຂອງຄຣິສຕຽນ?

3. ໃຫ້ຄຳນຶງເບິ່ງໃນສິ່ງທີ່ທ່ານຕ້ອງການໃຫ້ຄົນອື່ນເຮັດນຳທ່ານ. ມີສິ່ງໃດທີ່ທ່ານຕ້ອງການໃຫ້ຄົນອື່ນເຮັດນຳທ່ານເພີ່ມເຕີມອີກ (ຢູ່ໃຕ້ຫົວຂໍ້, "ການຂໍ ການຊອກ ແລະການເຄາະ")?

4. ທ່ານຈະບັນລະຍາຍເຖິງ <u>ລັກສະນະຂອງການຮັບຮອງວ່າເປັນຂອງແທ້</u> ຢ່າງໃດ? ທ່ານໄດ້ເຮັດໃຫ້ຜູ້ໃດເຫັນຄຸນສົມບັດຢ່າງນີ້ແດ່?

ສຈ. ບຸນເຮັ່ງ ພົງປຣະພັນ

# ບົດຮຽນທີ 6
# ຖືກເອີ້ນເຂົ້າມາສູ່ການປະກາດຂອງພຣະເຢຊູ

---

ຂໍ້ພຣະຄັມພີສໍາລັບບົດຮຽນ: ມັດທາຍ 9:35-10:15
ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ມັດທາຍ 9:35-10:15
ຈຸດສໍາຄັນຂອງບົດຮຽນນີ້: ພຣະເຢຊູຊົງເອີ້ນໃຫ້ສາວົກຂອງພຣະອົງເຂົ້າພົວພັນ ໃນການປະກາດຂອງພຣະອົງ ແລະພຣະອົງຊົງໂຜດຊີ້ແນະໃຫ້ເພື່ອນໍາໄປປະຕິບັດ.
ຄໍາຖາມເພື່ອການສໍາຫລວດ: ການຊົງເອີ້ນຂອງພຣະເຢຊູໃຫ້ມາເປັນສາວົກຂອງພຣະອົງ ເພື່ອເຂົ້າພາກສ່ວນໃນການປະກາດຂອງພຣະອົງ ນໍາມາໃຊ້ກັບພວກເຮົາໃນສມັຍນີ້ໄດ້ຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊັ່ງຊາເບິ່ງໂບດທີ່ຂ້າພຣະເຈົ້າສັງກັດຢູ່ແລະຂ້າພະເຈົ້າໄດ້ຕອບສນອງຕໍ່ການຊົງເອີ້ນຂອງພຣະເຢຊູ ເພື່ອເຂົ້າພາກສ່ວນໃນການປະກາດຂອງພຣະອົງ.

## ບົດຮຽນ

### ຄໍານໍາ

ຄວາມສົງສານຂອງພຣະເຢຊູທີ່ມີຕໍ່ປະຊາຊົນໄດ້ເສີມຮູບແບບຂອງການຊົງເອີ້ນຂອງພຣະອົງ ເພື່ອເຮັດໃຫ້ພວກສາວົກກາຍມາເປັນອັຄທູດຂອງພຣະອົງໃນການປະກາດ ເພື່ອໃຫ້ຄໍາສອນຂອງພຣະອົງແຜ່ກ້ວາງອອກໄປດ້ວຍວິທີການຂອງພຣະອົງ ຊຶ່ງເປັນການຊົງເອີ້ນໃຫ້ພວກເຮົາໄດ້ແບ່ງເບົາໃນຖານະເປັນຜູ້ຕິດຕາມພຣະຄຣິດໃນສມັຍນີ້.

### ການປະກາດ: ຝູງແກະແລະການເກັບກ່ຽວ (9:35-39)

ພຣະເຢຊູໄດ້ເດີນທາງໄປທົ່ວແຂວງຄາລີເລ ພຣະອົງຊົງສັ່ງສອນ ຊົງປະກາດຂ່າວປະເສີດ ແລະຊົງປິ່ນປົວຄົນເຈັບ (ມັດທາຍ 4:23-25). ຫລັງຈາກມັດທາຍໄດ້ບັນທຶກການເທສນາຂອງພຣະເຢຊູຢູ່ຕາມຈ້າຍພູ ລາວໄດ້ກ່າວເຖິງພຣະອົງຊົງເຮັດໃຫ້ຄົນຂີ້ທູດຜູ້ນຶ່ງຂາວສະອາດ (8:1-4), ຊົງໂຜດຄົນໃຊ້ຂອງນາຍຮ້ອຍທະຫານໃຫ້ດີ (8:5-13), ຊົງຮັກສາແມ່ເຖົ້າຂອງເປໂຕໃຫ້ເຊົາໄຂ້ (8:14-15), ຊົງຫ້າມລົມພະຍຸ (8:23-27), ຊົງຂັບໄລ່ຜີຮ້າຍອອກເສັຽ (8:28-34), ຊົງໂຜດຮັກສາຄົນເປັ້ຽໃຫ້ດີ(9:1-8), ຊົງຮັກສາຜູ້ຍິງເລືອດຕົກໃຫ້ດີ (9:20-22), ຊົງໂຜດໃຫ້ລູກສາວຂອງເຈົ້ານາຍຄົນນຶ່ງໄດ້ຄືນມີຊີວິດ (9:18-19, 24-25), ຄົນຕາບອດສອງຄົນໄດ້ເຫັນຮຸ່ງແລະຄົນປາກກືກກໍເວົ້າໄດ້ (9:27-33). ພຣະເຢຊູຊົງສັ່ງສອນຢູ່ໃນໂຮງທັມມະເທສນາແລະພຣະອົງຊົງເທສນາຢູ່ຕາມຈ້າຍພູ. ຄໍາເວົ້າຂອງພຣະອົງໄດ້ບົ່ງບອກເຖິງພຣະອົງແລະກິຈການຂອງພຣະອົງໄດ້ສະແດງໃຫ້ເຫັນພຣະລັກສະນະຂອງພຣະເຈົ້າ. ຈາກການສັ່ງສອນ, ການເທສນາ, ແລະການປິ່ນປົວພຍາດ ພຣະເຢຊູຊົງສະຖາປະນາສິດອໍານາດຂອງພຣະອົງ ແລະໄດ້ສະແດງໃຫ້ເຫັນເຖິງການປະກາດຂອງພຣະອົງ.

ເຫມືອນກັບແພດຜູ້ວິເສດຊັກຈູງຄົນເຈັບຈາກທຸກທີ່ນທຸກແຫ່ງຢູ່ໃນໂລກນີ້ເຂົ້າມາຫາຕົນ ການປິ່ນປົວຮັກສາຂອງພຣະເຢຊູໄດ້ຊັກຈູງເອົາຜູ້ຍິງແລະຜູ້ຊາຍທີ່ຕ້ອງການກັບການສັມຜັດຂອງພຣະອົງ. ດັ່ງນັ້ນ ເພາະວ່າເນື່ອງຈາກການປິ່ນປົວໃນສາທາຣະນະຊົນ ພຣະອົງຍັງຊົງຊັກຈູງຜູ້ທີ່ຊອກຮູ້ຊອກເຫັນ ແລະຜູ້ທີ່ຊອກສແວງຫາຄວາມລອດພົ້ນ. ເມື່ອພຣະອາຈານແລເຫັນປະຊາຊົນ "ພຣະອົງຊົງສົງສານເຂົາ" (9:36). ຄວາມສົງສານ (Compassion)
(ມີຄວາມຮູ້ສຶກໃນສ່ວນ
ເລິກຂອງຈິດໃຈ ເມື່ອເຫັນຄວາມທຸກລໍາບາກຂອງຄົນອື່ນ) ຄວາມສົງສານຂອງພຣະອົງແມ່ນອອກຈາກພາຍໃນຊຶ່ງ

ເປັນຄວາມຮັກທີ່ມາຈາກພຣະເຈົ້າ ບໍ່ແມ່ນຄວາມສົງສານເກີດຈາກຄວາມອີ່ດູຕົນ (pity).

ປະຊາຊົນບໍ່ພຽງແຕ່ຕ້ອງການຜູ້ນຳເທົ່ານັ້ນ ພວກເຂົາຕ້ອງການຄົນງານນຳພວກເຂົາໃຫ້ເຂົ້າມາຫາພຣະເຈົ້າ. ພວກສິດຂອງພຣະເຢຊູອາດຈະປະຫລາດໃຈໄປວ່າ ເປັນຫຍັງມີຝູງຊົນເປັນຈຳນວນຫລວງຫລາຍຕິດຕາມມາຢູ່ແລ້ວ ພຣະອົງຊີ້ບອກວ່າ "ເຂົ້າທີ່ຈະກ່ຽວນັ້ນກໍຫລາຍແທ້ ແຕ່ຄົນງານມີໜ້ອຍຢູ່" (ມັດທາຍ 9:37). ຝູງຊົນພ້ອມແລ້ວທີ່ຈະຟັງ. ພຣະອົງຊົງສັ່ງໃຫ້ສິດຂອງພຣະອົງອ້ອນວອນ ເພື່ອໃຫ້ພຣະເຈົ້າ "ນຳຄົນງານມາໃນການເກັບກ່ຽວຂອງເພິ່ນເສັງ" (9:38). ພຣະອົງຮູ້ວ່າ ການນຳຜົນຂອງການເກັບກ່ຽວອັນມະຫາສານນັ້ນ ຕ້ອງການໃຫ້ມີຄົນງານຫລາຍພຽງພໍໄປທຳງານດ້ວຍຄວາມລຳບາກແລະຍາວນານ ເພື່ອຈະນຳຜົນສຳເຣັດມາສູ່ພາຣະກິດຂອງພຣະອົງທີ່ໄດ້ຮັບການມອບໝາຍ.

<u>ຜູ້ປ່າວຂ່າວ: ຈາກການເປັນສາວົກທີ່ບໍ່ເຫນັງບໍ່ຕີງກາຍມາເປັນອັຄທູດທີ່ຫ້າວຫັນ</u> (10:1-4)
ໃນສມັຍຂອງພຣະເຢຊູ ພວກນັກທັມໄດ້ກ່າຍພຣະທັມຕ່າງໆໃສ່ໃນໜັງສືມ້ວນດ້ວຍຄວາມລະມັດລະວັງ. ມີແຕ່ຜູ້ນຳທີ່ຮັ່ງມີ, ສູນຮ່ວມທາງສາສນາແລະຫໍສມຸດຈຶ່ງມີໜັງສືເຫລົ່ານີ້. ກ່ອນສມັຍຂອງຣາຄາຂອງປື້ມຈະຖືກລົງຈົນກວ່າຄົນສາມັນທັມມດາສາມາດຊື້ໄດ້ ແລະມີພຽງພໍແລະຄົນສ່ວນຫລາຍສາມາດອ່ານໄດ້ ພວກອາຈານທັງຫລາຍໄດ້ຮວບຮວມລູກສິດຂອງພວກເຂົາ ແລ້ວຖ່າຍທອດຄຳສອນໃຫ້ລູກສິດຂອງພວກເຂົາ ແລະພວກລູກສິດຂອງເຂົາກໍທ່າຍທອດໃຫ້ລູກສິດລຸ້ນຕໍ່ໄປ. ບໍ່ພຽງແຕ່ປັສຍາຈານຂອງຊາວກຣີກ ເຊັ່ນ ໂຊເຄຣຕີ (Socrates) ໃຊ້ວິທີການນີ້ ພຣະເຢຊູຊົງໃຊ້
ວິທີການຢ່າງນີ້ເໝືອນກັນ.

ມັດທາຍແລະຜູ້ບັນທຶກຂ່າວປະເສີດຄົນອື່ນຮັບຮູ້ວ່າພຣະເຢຊູຊົງເອີ້ນເອົາສາວົກສິບສອງຄົນ. ເຖິງຢ່າງໃດກໍຕາມການຮຽບຮຽງຊື່ຂອງພວກອັຄສາວົກຕ່າງກັນໄປໜ້ອຍນຶ່ງ (ໃຫ້ເບິ່ງພຣະທັມ ມາຣະໂກ 3:14-19; ລູກາ 6:13-16; ກິຈການ 1:13).

ແຕ່ພຣະເຢຊູຊົງຮຽກຮ້ອງຈາກພວກສາວົກຂອງພຣະອົງລື່ນກວ່າອານຈານໃຫຣ່ຄົນອື່ນໆ ຊຶ່ງໄດ້ຮຽກຮ້ອງຈາກສິດຂອງພວກເຂົາ. ພຣະອົງຊົງໃຊ້ພວກເຂົາອອກໄປດຳເນີນພາຣະກິດເຊິ່ງໄດ້ຊົງມອບໄວ້ ຄືການປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າ (ມັດທາຍ 10:1-2). ມັດທາຍໃຊ້ສອງຄຳແຕກຕ່າງກັນເມື່ອກ່າວເຖິງສິດສິບສອງຄົນ. ມັດທາຍຮ້ອງພວກເຂົາວ່າສາວົກ (disciples) ມີຄວາມໝາຍວ່າຜູ້ທີ່ຮຽນ (10:1). ຕໍ່ມາ ລາວໃຊ້ຄຳວ່າ ອັຄທູດ (apostle)
<u>ພຣະຄຣິສຕະທັມຄັມພີ ພາກ ພຣະສັນຍາໃໝ່ ສະບັບ 1973</u> ໃຊ້ຄຳວ່າ ອັຄສາວົກ, ແຕ່<u>ພຣະຄັມພີຂອງຊາວຄຣິດ</u> <u>ພາສາຂອງຄົນທົ່ວໄປ</u> ໃຊ້ຄຳວ່າ ອັຄທູດ ໝາຍຄວາມວ່າຜູ້ທີ່ຖືກສົ່ງໄປຕາງໜ້າ ເພື່ອໄປເຈຣະຈາເຣື່ອງ (10:2). ພວກສາວົກໄວ້ນຳສິ່ງທີ່ພຣະເຢຊູສອນພວກເຂົາໄປປະກາດ ແລະພວກເຂົາກາຍເປັນອັຄທູດຂອງພຣະອົງ. ພວກເຂົາຈຳເປັນຈະຕ້ອງເຂົ້າໃຈໃນຖ້ອຍຄຳຂອງພຣະອົງ ພວກເຂົາຈຶ່ງຈະກາຍເປັນຜູ້ນຳຖ້ອຍຄຳທີ່ມີຄວາມຮ້ອນຮົນໄປປະກາດໃຫ້ຄົນອື່ນຟັງ. ພວກສິດທີ່ອ້ອນວອນຂໍໃຫ້ພຣະເຈົ້າສົ່ງຄົນງານມາໃນການເກັບກ່ຽວ ໃນທີ່ສຸດ ພວກເຂົາກໍເລີຍກາຍເປັນຜູ້ເກັບກ່ຽວເອງ (9:38).

<u>ຄຳສອນ: "ຣາຊອານາຈັກສວັນມາໃກ້ແລ້ວ</u> (10:5-8)
ພວກເຮົາອາດຈະຄິດວ່າຈາກພຣະທັມມັດທາຍ 10:5-8 ແມ່ນການຊົງສັ່ງຄັ້ງທຳອິດ ເມື່ອທຽບກັບການຊົງສັ່ງຄັ້ງຍິ່ງໃຫຣ່ຈາກພຣະທັມ ມັດທາຍ 28:19-20. ການຊົງສັ່ງຄັ້ງທຳອິດ ພຣະເຢຊູຊົງຈຳກັດເຂດແດນ ພຣະອົງບໍ່ໄດ້ສັ່ງໃຫ້

ພວກອັຄທູດຂອງພຣະອົງອອກໄປທຸກທົ່ວມຸມໂລກ. ແທນທີ່ຈະເປັນດັ່ງນັ້ນ ພຣະອົງຊົງບອກໃຫ້ພວກເຂົາໄປຫາ "ຝູງແກະທີ່ເສັຽແລ້ວ ຄືກະກຸນອິສຣາເອນ" (10:6). ເມື່ອພຣະບຸດຂອງພຣະເຈົ້າສະເດັດມາໃນໂລກກໍເພື່ອຈະໄຖ່ມະນຸດທຸກຄົນ ເປັນຫຍັງພຣະອົງຈຶ່ງໃຫ້ໄປຫາແຕ່ຄົນຢິວເທົ່ານັ້ນ?

ພຣະເຢຊູຊົງສເນີບອກໃຫ້ຄົນກຸ່ມນຶ່ງເປັນກຸ່ມນ້ອຍແຜນການທີ່ມອບຫມາຍດ້ວຍຈຸດປະສົງອັນເຈາະຈົງ. ພຣະອົງຕັ້ງໃຈເອົາຊາວຢິວກ່ອນ. ຈາກນັ້ນກໍຂຍາຍວົງກວ້າງອອກໄປຈົນເຖິງຄົນບໍ່ເປັນຢິວ. ໂປໂລໄດ້ວາງໂຄງຮ່າງຂອງການປະກາດທີ່ໄດ້ຮັບມອບຫມາຍໃຫ້ ຊຶ່ງຄ້າຍຄືກັນກັບຂອງພຣະອົງຕາມພຣະທັມໂຣມ, "... ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນ ພວກຢິວກ່ອນແລະພວກຕ່າງຊາດດ້ວຍ" (ໂຣມ 1:16). ເຖິງແມ່ນວ່າ ພຣະອົງບໍ່ທັນພ້ອມເທື່ອທີ່ຈະຂຍາຍວົງກ້ວາງຂອງການປະກາດນອກເຫນືອຈາກກຸ່ມຊາວຢິວກ່ອນ ພຣະອົງກໍຍັງຊົງຮັກສາລູກສາວຂອງຜູ້ຍິງຊາວການາອານເພາະວ່າລາວມີຄວາມເຊື່ອອັນໃຫຍ່ຫລວງ (ມັດທາຍ 15:22-28). ໃນໂລກປະຈຸບັນນີ້ ພວກເຮົາອາດຈະບົ່ງບອກໄດ້ວ່າ ການມອບຫມາຍຄັ້ງທໍາອິດເປັນໂຄງການລະຍະສັ້ນ ແລະການມອບຫມາຍຄັ້ງຍິ່ງໃຫຍ່ເປັນໂຄງການລະຍະຍາວ.

ໃນການມອບຫມາຍການປະກາດຄັ້ງທໍາອິດນັ້ນ ພຣະເຢຊູຊົງໃຫ້ພວກສາວົກຂອງພຣະອົງປະກາດດ້ວຍຄໍາເວົ້າທີ່ມີຂໍ້ຄວາມຈໍາກັດ ແລະເປັນຄໍາເວົ້າທັມມະດາ, "ຣາຊອານາຈັກສວັນມາໃກ້ແລ້ວ" (10:7). ຂໍ້ຄວາມທີ່ປະກາດເປັນຂ່າວສານເທົ່າທຽມກັນໃນຂ່າວປະເສີດເຫລັ້ມອື່ນ "ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ" (ມາຣະໂກ 1:15; ລູກາ 9:2). ມັດທາຍເປັນຊາວຢິວ ລາວຂຽນໃຫ້ຄຣິສຕຽນຊາວຢິວອ່ານ ລາວຮູ້ວ່າຈິດໃຈຂອງພວກເຂົາບໍ່ສະບາຍເມື່ອໃຊ້ຄໍາວ່າ "ພຣະເຈົ້າ" ຈະຂຽນອອກມາຫລືວ່າຈະເວົ້າອອກມາກໍຕາມ ເພາະວ່າພວກເຂົາຖືວ່າເປັນຄໍາທີ່ສັກສິດ. ສະນັ້ນລາວຈຶ່ງໃຊ້ຄໍາວ່າ "ສວັນ" ມາແທນຄໍາວ່າ "ພຣະເຈົ້າ". ເມື່ອພຣະເຢຊູຊົງຊີ້ແນະໃຫ້ພວກສາວົກຂອງພຣະອົງຍົກຍໍສັຣເສີນຣາຊອານາຈັກຂອງພຣະເຈົ້າ ພຣະອົງເລັ່ງລັດພວກເຂົາໃຫ້ປະກາດການປົກຄອງຂອງພຣະເຈົ້າມາໃກ້ແລ້ວ ແລະດ້ວຍຄວາມຈໍາເປັນຈະຕ້ອງຍອມຢູ່ໃຕ້ອໍານາດການປົກຄອງຂອງພຣະເຈົ້າອົງສູງສຸດ ຄືຜູ້ຊົງເປັນກະສັດອັນຕລອດໄປເປັນນິດ.

ພຣະເຢຊູຊົງກໍ່ຕັ້ງກອງປະກາດອັນຈໍາເປັນນີ້. ເຖິງແມ່ນວ່າພວກອັຄທູດປະກາດຂ່າວສານຈະເປັນຂໍ້ຄວາມທັມມະດາກໍຕາມ ພຣະເຢຊູຊົງປະທານອໍານາດໃຫ້ເປັນແຮງພະລັງໃນຂໍ້ຄວາມນັ້ນ. ພຣະອົງຊົງໃຫ້ພວກເຂົາສາມາດ "ຄົນເຈັບໄຂ້ຈົ່ງເຮັດໃຫ້ດີ ຄົນຕາຍແລ້ວຈົ່ງໃຫ້ເປັນຄືນມາ ຄົນຂີ້ທູດຈົ່ງໃຫ້ດີສະອາດ ແລະຈົ່ງຂັບໄລ່ຜີຮ້າຍອອກເສັຽ" (ມັດທາຍ 10:8) ພວກເຂົາສືບຕໍ່ໃນສິ່ງທີ່ພຣະອົງຊົງໄດ້ກະທໍາມາແລ້ວ. ພວກເຂົາໄດ້ຮັບອໍານາດນີ້ລ້າໆ ແລະພຣະອົງຊົງປາຖນາໃຫ້ພວກເຂົາໃຊ້ຮັກສາຄົນທົ່ວໄປລ້າໆ (10:8).

ຕໍ່ມາ ພຣະເຈົ້າຊົງປັ້ນຊີວິດຂອງຄຣິສຕະຈັກເລັ້ມແລກ ໃຫ້ເປັນເຫມືອນພຣະກາຍທີ່ໄດ້ຂ່າວເຣື່ອງລາວຂອງພຣະຄຣິດໃຫ້ຮັບໃຊ້ຜູ້ທີ່ຂັດສົນ ແລະໃຫ້ສົ່ງຜູ້ປະກາດຂ່າວປະເສີດ ເຊັ່ນໂປໂລແລະບາຣະນາບາ. ພຣະຜູ້ຍິ່ງໃຫຍ່ປາຖນາໃຫ້ຜູ້ທີ່ໄດ້ຮັບຂອງພຣະຣາຊທານຂອງຄວາມລອດພົ້ນລ້າໆໃຫ້ຖວາຍຕົວແລະແຫລ່ງຊັບຂອງພວກເຂົາລ້າໆ. ພຣະເຢຊູຊົງປັ້ນການປະກາດແລະການຮັບໃຊ້ຂອງພວກເຮົາໃນທໍານອງດຽວກັນ. ພຣະອົງປາຖນາໃຫ້ພວກເຮົາປະກາດຂ່າວເຣື່ອງຣາຊອານາຈັກຂອງພຣະອົງ ຮັບໃຊ້ຜູ້ທີ່ຂັດສົນ ແບ່ງປັນສິ່ງຂອງພວກເຮົາ ແລະສົ່ງຜູ້ປະກາດຂ່າວປະເສີດອອກໄປ. ພຣະບິດາຊົງຮຽກຮ້ອງພວກເຮົາຈົ່ງໃຫ້ລ້າໆ ເພາະວ່າພວກເຮົາໄດ້ຮັບລ້າໆ.

<u>ວິທີການ: ຮັບເອົານໍາຫນ້ອຍແຕ່ໃຫ້ຫລາຍ</u> (10:9-15)

ພຣະເຢຊູຊົງສັ່ງສາວົກຂອງພຣະອົງບໍ່ໃຫ້ຖືອັນໃດອາດຈະເປັນສິ່ງທີ່ຖ່ວງດຶງການປະກາດຂອງພວກເຂົາ. ພວກເຂົາບໍ່

ຕ້ອງພົກ "ເງິນ ຄຳ ຫລືທອງແດງ" ໄປນຳ (10:9). ເວົ້າຕາມພາສາຂອງສມັຍນີ້ ພຣະອົງອາດຈະກ່າວວ່າ ໃຫ້ປະເງິນແລະບັດຊື້ເງິນເຊື່ອ (credit cards) ໄວ້ທີ່ບ້ານ. ພຣະອົງສັ່ງບອກພວກເຂົາບໍ່ໃຫ້ຖືຖົງໄປໄວ້ໃສ່ອາຫານແລະເຄື່ອງໃຊ້ ເສື້ອຜ້າ ເກີບ ແລະໄມ້ເທົ້າ (10:10).

ໃນເຣື່ອງດຽວກັນ ພຣະທັມລູກາບໍ່ໄດ້ກ່າວເຖິງເສື້ອ ຫລືໄມ້ເທົ້າ ແຕ່ໄດ້ບົ່ງບອກວ່າ "ເມື່ອເຮົາໄດ້ໃຊ້ທ່ານທັງຫລາຍອອກໄປໂດຍບໍ່ມີກະເປົາເງິນ ບໍ່ມີຖົງ ຫລືບໍ່ມີເກີບນັ້ນ" (ລູກາ 22:35). ມາຣະໂກໄດ້ບັນທຶກຖ້ອຍຄຳຂອງພຣະເຢຊູໄວ້ວ່າ "ໃຫ້ໃສ່ເກີບ ແຕ່ບໍ່ໃຫ້ໃສ່ເສື້ອສອງໂຕ" (ມາຣະໂກ 6:9). ເບິ່ງເຫມືອນກັບວ່າ ຄົນເຮົາເຂົ້າໃຈໃນຄຳເວົ້າຄຳດຽວແຕກຕ່າງກັນ ມັດທາຍ ມາຣະໂກ ແລະລູກາໄດ້ຮັບຂໍ້ມູນຕ່າງກັນ ແຕ່ພວກເຂົາຮູ້ຈັກຄວາມຕັ້ງໃຈຂອງພຣະອົງ. ກົດລະບຽບທິດທາງຂອງການປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າຄັ້ງທຳອິດນັ້ນ ແມ່ນໃຫ້ການເດີນທາງໄດ້ວ່ອງໄວແລະຫມູນໃຈໃຫ້ໄວ້ວາງໃຈເພິ່ງໃນພຣະເຈົ້າ.

## ການວັດແທກ: ຜູ້ປ່າວຂ່າວເຂົ້າສູ່ການມອບຫມາຍ

ພວກອັຄທູດຂອງພຣະເຢຊູເປັນໄປດັ່ງທີ່ພຣະອົງຄາດຫມາຍໄວ້ຫລືບໍ່? ພວກເຂົາເພິ່ງພຣະອົງໃຫ້ເປັນຜູ້ຊ່ຽວຊານຂອງພວກເຂົາຫລືບໍ່? ພວກເຂົາໄດ້ທຳຫນ້າທີ່ຂອງພວກເຂົາໃຫ້ສຳເຣັດຫລືບໍ່?

ພຣະເຢຊູຊົງເອີ້ນເອົາສິບສອງຄົນໃຫ້ຕາມພຣະອົງ. ພຣະອົງຊົງໃຫ້ພວກເຂົາຮຽນຮູ້ຈາກພຣະອົງໃນການເປັນສາວົກແລະຮຽນອະທິຖານກ່ອນພວກເຂົາຈະໄດ້ເປັນອັຄທູດຂອງພຣະອົງ. ເຖິງແມ່ນວ່າວິທີທາງອາດຈະແຕກຕ່າງກັນກໍຕາມພຣະອົງຊົງເອີ້ນຢູ່ໃນວັນນີ້ເຫມືອນເດີມ. ພວກອັຄທູດຂອງພຣະອົງມີຄວາມແຕກຕ່າງກັນ ບາງທ່ານກາຍເປັນຜູ້ທີ່ມີຄົນຮູ້ຈັກຈົນຊ່າລືໄປທົ່ວທຸກທີ່ນທຸກແຫ່ງ ບາງທ່ານກໍບໍ່ໄດ້ຍິນຊື່ສຽງຂອງພວກເຂົາ ພຣະເຈົ້າໃຊ້ໄດ້ຫມົດທຸກຄົນ ສຳລັບຜູ້ທີ່ຕິດຕາມພຣະອົງດ້ວຍຄວາມຈິງຮັກພັກດີ.

ພວກເຮົາໄດ້ອ້ອນວອນດ້ວຍໃຈບໍຣິສຸດຫລືບໍ່ ເພື່ອໃຫ້ "ຜູ້ເປັນເຈົ້າຂອງນາ ໃຫ້ຈຳຄົນງານມາໃນການກ່ຽວຂອງເພິ່ນ" (ມັດທາຍ 9:38)? ພວກເຮົາຍອມເປັນຄົນງານຂອງພຣະເຈົ້າເປັນຜູ້ທີ່ໄດ້ຖືກອ້ອນວອນໃຫ້ພຣະອົງສົ່ງມາຫລືບໍ່? ເມື່ອພຣະເຈົ້າຊົງເອີ້ນ ພວກເຮົາຈະເລືອກເປັນສາວົກຜູ້ທີ່ບໍ່ເຫນັງຕີງ ຫລືຈະເປັນອັຄທູດຜູ້ທີ່ເອົາການເອົາງານ?

## ຄຳຖາມ

1. ສາວົກແລະອັຄທູດມີຄວາມແຕກຕ່າງກັນຢ່າງໃດ?

2. ໂບດພວກເຮົາຈະສ້າງສາວົກກັບພວກເດັກນ້ອຍ ພວກຄົນຫນຸ່ມແລະພວກຜູ້ໃຫຍ່ຢ່າງໃດ ພວກເຂົາຈຶ່ງຈະກາຍເປັນທູດດ້ວຍໃຈອັນຮ້ອນຮົນ.

3. ພວກເຮົາຈະເປັນແວ່ນແຍງໃຫ້ຄົນອື່ນເຫັນຄວາມຮ້ອນຮົນຂອງພຣະເຢຊູໄດ້ຢ່າງໃດ?

4. ແມ່ນອັນໃດເປັນສິ່ງທີ່ກີດກັ້ນໃນການຕອບສນອງຕໍ່ການຊົງເອີ້ນຂອງພຣະເຈົ້າເພື່ອປະຕິບັດຕໍ່ການມອບຫມາຍໃຫ້ໃນທ້ອງຖິ່ນແລະທົ່ວໂລກ?

5. ພວກເຮົາສາມາດຊ່ອຍເຮັດອັນໃດແດ່ ເພື່ອນຳຄົນງານເຂົ້າມາໃນການເກັບກ່ຽວ? ສຈ. ບຸນເຮັ່ງ ພົງປຣະພັນ

# ເຊື່ອເທົ່ານັ້ນ

# ບົດຮຽນບົດທີ່ 7

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 10:16-42

<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> ມັດທາຍ 10:16-42

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າຄຣິສຕຽນຈຳຕ້ອງເຮັດຕາມແບບຢ່າງພຣະເຢຊູ

<u>ຄຳຖາມເພື່ອການສຳຣວດ:</u> ເຮົາຈະເຮັດຕາມແບບຢ່າງພຣະເຢຊູໄດ້ຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອເຮົາບໍ່ເຫັນແກ່ຕົນເອງ ແຕ່ເພື່ອເຫັນແກ່ຄົນທັງປວງຢ່າງພຣະເຢຊູ

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ພຣະເຢຊູບອກເຕືອນຜູ້ຮັບໃຊ້ຂອງພຣະອົງວ່າຜູ້ຮັບໃຊ້ຂອງພຣະອົງຈະພົບກັບອຸປສັກນາໆປະການ, ດ້ວຍເຫດນີ້ໃຫ້ຜູ້ຮັບໃຊ້ທັງຫລາຍຈົ່ງຕັ້ງສະຕິຣະວັງຕົວຢູ່ທຸກໂອກາດ. ດ້ວຍວ່າເຂົາຈະຫາເຣື່ອງໃສ່ຜູ້ຮັບໃຊ້ພຣະອົງເປັນຄວາມບໍ່ຈິງນາໆປະການ ຈົນລາງຄົນໃນພວກຜູ້ຮັບໃຊ້ຈຳຕ້ອງຕິດຄຸກ ແລະລາງຄົນກໍອາດຈະເສັຽຊີວິດດ້ວຍ ພຣະເຢຊູຊົງເຕືອນອີກວ່າ ຜູ້ໃດທີ່ທົນໄດ້ເຖິງທີ່ສຸດຜູ້ນັ້ນຈະໄດ້ລອດພົ້ນ.

<u>ຊົງຕັກເຕືອນວ່າຈະພົບອັນຕະລາຍ</u> 10:16-25

ຫາກເຮົາຄິດທວນຄືນໃນມັດທາຍ 9:36 ຕອນປາຍກ່າວວ່າ "ເຫມືອນຝູງແກະທີ່ບໍ່ມີຜູ້ລ້ຽງ". ບໍ່ວ່າແຕ່ໂຕແກະເລີຽແມ່ນແຕ່ໂຕແບ້ທີ່ຫນ້າຄີ້ຫາກບໍ່ມີຜູ້ລ້ຽງມັນກໍຈະມີອາຍຸສັ້ນ ຫລືບໍ່ດັ່ງນັ້ນມັນກໍຈະບໍ່ມີຜູ້ເຝົ້າຮັກສາເອົາຫຍ້າໃຫ້ມັນກິນ. ສ່ວນ ແກະນັ້ນຍິ່ງເປັນສັດຟັງຄວາມ ແລະຍັງເປັນສັດທີ່ບໍ່ຕໍ່ສູ້ຫລືທຳຮ້າຍຜູ້ໃດ ຂົນຂອງມັນຍັງສາມາດເຮັດເປັນເສື້ອກັນຫນາວເພື່ອໃຫ້ຄົນອົບອຸ່ນອີກຊ້ຳ. ພຣະເຢຊູຊົງບອກພວກສາວົກຂອງພຣະອົງວ່າ "ເຮົາໃຊ້ພວກທ່ານໄປເຫມືອນດັ່ງແກະຢູ່ຖ້າມກາງຝູງຫມາໄນ" (ຂໍ້ 16ກ). ມີຄວາມຫມາຍວ່າຜູ້ຮັບໃຊ້ພຣະເຈົ້າເປັນເຫມືອນໂຕແກະ ສ່ວນຄົນທັງຫລາຍເປັນເຫມືອນພວກຫມາໄນເປັນຝູງກັນຢູ່.

ຂ້າພະເຈົ້າຂໍຫມາຍສີແດງຕັກເຕືອນຊຶ່ງກັນແລະກັນກ່ຽວກັບການເວົ້າເຣື່ອງຂອງຫມາ, ອີງຕາມສັງຄົມວັດທະນະທຳຂອງຄົນເອເຊັຽເຮົາມີຄວາມຄິດຕ່າງກັນຊາວຕາເວັນຕົກ. ສົມມຸດເຮົາວ່າຫມາໃຫ້ຜູ້ໃດຜູ້ນຶ່ງໃນກຸ່ມຄົນລາວພວກເຮົາແລ້ວ ເພິ່ນຈະຄຽດຫລາຍ ເພາະວ່າລາວເຮົາຖືວ່າຫມາແມ່ນສັດທີ່ຕ່ຳຊ້າບໍ່ຮູ້ຈັກຄວາມ, ພວກຜູ້ເຖົ້າມັກດ່າລູກຫລານຂອງຕົນວ່າ "ຊົ່ວຄືຫມາ" ພວກລູກຫລານກໍຄຽດຢ່າງໃຫຍ່ເລີຽ ແຕ່ເຮົາບໍ່ເຂົ້າໃຈແນ່ນອນວ່າຫມານັ້ນມັນຊົ່ວແນວໃດ?

ສຳລັບຊາວຕາເວັນຕົກແລ້ວ ຖືວຫມາເກືອບທຽບເທົ່າກັນຄົນ, ຜູ້ໃດມີຫມາໃນບ້ານຕ້ອງເອົາໃຈໃສ່ຮັກເບິ່ງແຍງຫມາ ພາໄປຫາຫມໍເປັນປະຈຳ, ຫມາຫລາຍໂຕຍັງມີຊີວິດດີກວ່າຄົນອີກຫລາຍຄົນອີກຊ້ຳ. ດັ່ງນັ້ນຫາກເວົ້າເຣື່ອງຫມາກັບຄົນລາວເຮົາຈຶ່ງຣະມັດຣະວັງ ໂດຍສະເພາະເວົ້າກັບຜູ້ທີ່ຍັງບໍ່ທັນເຊື່ອພຣະເຈົ້າເທື່ອ.

ເມື່ອເຮົາໄປໃນຖ້ຳມກາງຝູງຫາໄນ (ຄຳວ່າຝູງແປວ່າຫລາຍໂຕ) ພຣະເຢຊູສອນຊ້ຳອີກວ່າ "ຈົ່ງສລາດເຫມືອນງູ ແລະອ່ອນສຸພາບເຫມືອນນົກເຂົາ" (ຂໍ້ 16ຂ). ໃນພຣະທັມປະຖົມມະການກ່າວວ່າ "ງູເປັນສັດທີ່ຫັກແຫລມກວ່າສັດທັງຫລາຍ" (ປຖກ 3:1). ນົກເຂົາເປັນສັນຍາລັກແຫ່ງສັນຕິສຸກ, ໃນພຣະທັມໂຢຮັນ2:14-16 ກ່າວເຖິງຄົນທັງຫລາຍໄປຂາຍນົກເຂົາທີ່ພຣະວິຫານເພື່ອຄົນທີ່ເຂົ້າໄປນະມັສການໃນພຣະວິຫານຈະໄດ້ຊື້ນົກເຂົານັ້ນເປັນເຄື່ອງບູຊາໄຖ່ໂທດຄວາມຜິດບາບຂອງເຂົາ. ດັ່ງນັ້ນຄຣິສຕຽນຄວນສລາດຄືງູ ແລະສຸພາບຄືນົກເຂົາ ບໍ່ໄດ້ຫມາຍຄວາມວ່າເຂົ້າບ້ານຕາລິ່ວໃຫ້ລິ່ວຕາຕາມ ສຸພາບບໍ່ຫມາຍຄວາມວ່າເປັນຄົນສຸພາບຮຽບຮ້ອຍເຮັດທຸກຢ່າງຕາມເພິ່ນ. ຈົ່ງຈຳສເມີວ່າທ່ານທັງຫລາຍເປັນແກະທີ່ມີຜູ້ລ້ຽງທີ່ດີ ຄືເພິ່ນຈະປົກປ້ອງຄຸ້ມຄອງທ່ານໆຈະບໍ່ມີອັນຕະລາຍໃດໆຫາກພຣະອົງບໍ່ອະນຸຍາດໃຫ້ເກີດຂື້ນກັບທ່ານ ດັ່ງນັ້ນແຕລະຜູ້ຮັບໃຊ້ພຣະເຈົ້າຈຳຕ້ອງອົດທົນຕໍ່ການທັງປວງ ດ້ວຍພຣະອົງຊົງກ່າວວ່າ "ຜູ້ໃດທີ່ທົນໄດ້ເຖິງທີ່ສຸດຜູ້ນັ້ນຈະໄດ້ລອດພົ້ນ" (ຂໍ້ 22). ຈົ່ງສລາດເຫມືອນງູຄືບໍ່ຊອກຫາເຣື່ອງ, ບໍ່ເຮັດຜິດຕໍ່ເພິ່ນ ແລະບໍ່ເຮັດຜິດຕໍ່ກົດຕ່າງໆຂອງບ້ານເມືອງ, ຈົ່ງອ່ອນສຸພາບຄືນົກເຂົາຄືຊອກສແວງຫາຄວາມສງົບສຸກກັບຄົນທັງປວງ.

ຄຳວ່າ "ທີ່ທົນໄດ້ເຖິງທີ່ສຸດ" ບໍ່ໄດ້ຫມາຍຄວາມວ່າອົດທົນໃຫ້ເຂົາຂົ່ມເຫງຈົນຕາຍ ດ້ວຍພຣະອົງກ່າວວ່າ "ເມື່ອເຂົາຂົ່ມເຫງພວກທ່ານໃນເມືອງນີ່ງ ຈົ່ງຫນີໄປຍັງເມືອງອື່ນ" (ຂໍ້ 23). ອັນນີ້ກໍແມ່ນສລາດເຫມືອນງູທີ່ພຣະເຢຊູຊົງກ່າວ, ດັ່ງເຮົາຢ່າເປັນເຫມືອນເດັກນ້ອຍທີ່ຖືກມົດແດງກັດແລ້ວຍືນໃຫ້ຢູ່ຂວຍມົດແດງໂດຍບໍ່ຮູ້ຈັກຫນີຈາກຂວຍມົດ. ພຣະເຢຊູຊົງກ່າວອີກວ່າ "ສິດບໍ່ໃຫຍ່ກວ່າຄຣູ ແລະຂ້ອຍໃຊ້ບໍ່ໃຫຍ່ກວ່ານາຍຂອງຕົນ ຖ້າສິດຈະສເມີຄຣູ ແລະຂ້ອຍໃຊ້ສເມີນາຍຂອງຕົນກໍພໍດີແລ້ວ" (ຂໍ້ 25). ມີຄວາມຫມາຍວ່າ ເຂົາຂົ່ມເຫງພຣເຢຊູຫລາຍເທົ່າໃດ ເຂົາກໍຈະບໍ່ຂົ່ມເຫງເຮົາທັງຫລາຍໆໄປກວ່າພຣະອົງ "ເຂົາເອີ້ນເຈົ້າເຮືອນວ່າ ເບເອນເຊບູນ" (ຂໍ້ 25ກ). ແປວ່າເຂົາເອີ້ນວ່າພຣະອົງວ່າ ເບເອນເຊບູນ ໃນພຣະຄັມພີໃຫມ່ແປວ່າ Prince of devil ຫົວຫນ້າຊາຕານ (ອ່ານມາຣະໂກ 3:2, ມັດທາຍ 12:22-32) "ເຂົາກໍຈະ ເອີ້ນໄທເຮືອນຫລາຍກວ່ານັ້ນອີກຫລາຍເທົ່າໃດ" (ຂໍ້ 25ຂ). ເຈົ້າເຮືອນຫມາຍເຖິງພຣະເຢຊູເອງ ສ່ວນໄທເຮືອນຫມາຍເຖິງຜູ້ຮັບໃຊ້ທີ່ຖືກໃຊ້ໄປຖືວ່າເປັນຄົນເຮືອນດຽວກັນ.

<u>ຢ້ານພຣະເຈົ້າດີກວ່າ</u> 10:26-33

ເມື່ອຟັງເບິ່ງອັນຕະລາຍທີ່ຜູ້ຮັບໃຊ້ຈະຕ້ອງປະເຊີນແລ້ວກໍເປັນຕາຢ້ານແທ້ໆ ຈົນຜູ້ຮັບໃຊ້ລາງຄົນກໍທໍ້ໃຈຈົນບໍ່ສາມາດຮັບໃຊ້ພຣະເຈົ້າໄດ້ດັ່ງຄວາມຕັ້ງໃຈໄວ້ ດ້ວຍເຫດນີ້ພຣະເຢຊູຈຶ່ງສອນຕໍ່ໄປອີກວ່າ "ເຫດສັນນັ້ນຢ່າຊູ່ຢ້ານເຂົາ" (ຂໍ້ 26ກ). ພຣະອົງບໍ່ໄດ້ຫມາຍຄວາມວ່າບໍ່ໃຫ້ຢ້ານຢຳເກງຜູ້ໃດ ຫລືຢາກເຮັດຫຍັງກໍເຮັດໂລດ, ແຕ່ພຣະອົງຫມາຍຄວາມວ່າຢ່າຊູ່ຢ້ານໃນການທີ່ຈະເວົ້າຄວາມຈິງຕໍ່ພວກເຂົາ ໃຫ້ບອກເຕືອນເຂົາເຖິງການຊົ່ວຮ້າຍຕ່າງໆທີ່ທຸກຄົນເຮັດໃນທີ່ລັບລີ້ໃນວັນນີ້ຈະຖືກເປີດເຜີຽໃນວັນຫນ້າ "ເພາະວ່າບໍ່ມີສິ່ງໃດປົກບັງໄວ້ທີ່ຈະບໍ່ເປີດເຜີຍ" (ຂໍ້ 26ຂ). ພຣະອົງຊົງກ່າວຕໍ່ໄປວ່າ "ສິ່ງທີ່ເຮົາກ່າວແກ່ພວກທ່ານໃນທີ່ມືດ ພວກທ່ານຈົ່ງກ່າວໃນທີ່ແຈ້ງ ແລະສິ່ງທີ່ພວກທ່ານໄດ້ຍິນຈາກສຽງຊິ່ມ (ເວົ້າຄ່ອຍ) ຈົ່ງປ່າວປະກາດເທິງຫລັງຄາເຮືອນ" (ຂໍ້ 27). ມີຄວາມຫມາຍວ່າຂ່າວປະເສີດທີ່ພຣະເຢຊູຊົງກ່າວແກ່ພວກສາວົກກຸ່ມນ້ອຍຈົ່ງ ພ້ອມທັງສຽງທີ່ເຄີຽໄດ້ຍິນຄ່ອຍເບົາ ຈົ່ງປະກາດໃຫ້ທຸກຄົນໄດ້ຍິນບໍ່ໃຫ້ປິດບັງສິ່ງໃດໄວ້ອີກຕໍ່ໄປ ຈົ່ງປ່າວປະກາດດ້ວຍໃຈກ້າຫານ.

ການຈັດຕັ້ງຂອງຄະນະປົກຄອງແຕ່ລະບ້ານເມືອງນຍ່ອມມີອຳນາດສັ່ງການຕ່າງໆ ຕລອດເຖິງສັ່ງປະຫານຊີວິດໄດ້ ເຫມືອນດັ່ງເຂົາໄດ້ສັ່ງປະຫານພຣະເຢຊູແລ້ວ ເຂົາໄດ້ປະຫານພຣະອົງທີ່ບົນໄມ້ກາງແຂນແທ້ ແຕ່ພຣະອົງຊົງຟື້ນພຣະຊົນຄືນມາອີກໃນວັນຖ້ວນສາມ ພວກເຂົາບໍ່ສາມາດຂ້າແມ່ນແຕ່ພຣະກາຍພຣະອົງເລີຍ ສ່ວນເຮົາຜູ້ທີ່ພຣະອົງຊົງໃຊ້ໄປໃນຖ້າມກາງຝູງຫມາໄນ ລາງເທື່ອເຂົາອາຈຂ້າເຮົາເຫມືອນດັ່ງຂ້າພຣະອົງມາກ່ອນນັ້ນ, ພຣະອົງຊົງເລົ້າໂລມໃຈເຮົາວ່າ "ຢ່າຊູ່ຢ້ານຜູ້ທີ່ຂ້າໄດ້ແຕ່ຮ່າງກາຍ ແຕ່ຈະຂ້າຈິດວິນຍານບໍ່ໄດ້ ແຕ່ຈົ່ງຢ້ານພຣະອົງຜູ້ຊົງຣິດທີ່ອາດໃຫ້ທັງຈິດວິນຍານແລະຮ່າງກາຍຈິບຫາຍໃນຫມໍ້ນາຮົກ" (ຂໍ້ ໒8). ມະນຸດເຮົາມາສາດຂ້າກັນໄດ້ທຸກເວລາ ແຕ່ບໍ່ມີຜູ້ໃດທີ່ມີອຳນາດຂ້າຈິດວິນຍານໄດ້ ມີແຕ່ພຣະເຈົ້າເທົ່ານັ້ນທີ່ມີອຳນາດ ອາດໃຫ້ທັງຈິດວິນ ຍານແລະຮ່າງກາຍຈິບຫາຍ. ດ້ວຍເຫດນີ້ ພຣະເຢຊູຈຶ່ງສອນວ່າ ແຕ່ຈົ່ງຢ້ານພຣະອົງຜູ້ຊົງຣິດທີ່ອາດໃຫ້ທັງຈິດວິນຍານແລະຮ່າງກາຍຈິບຫາຍໃນຫມໍ້ນາຮົກ.

ໃນຂໍ້ ໒9-33 ເບິ່ງຄືພຣະເຢຊູປ່ຽນໄປອີກເຣື່ອງນຶ່ງຫາກເຮົາເບິ່ງຕາມທຳມະຂອງມຸດ, ພຣະເຢຊູກຳລັງຍົກຕົວຢ່າງນົກຈອກສອງໂຕເຂົາຂາຍໃນຣາຄາອັດນຶ່ງຊຶ່ງເປັນຣາຄາຕ່ຳທີ່ສຸດໃນທ້ອງຕລາດ ເຖິງແມ່ນຣາຄາມັນຕ່ຳເຖິງປານນັ້ນຫາກ ພຣະເຈົ້າບໍ່ພໍພຣະທັຍນົກນັ້ນຈະບໍ່ຕ້ອງຖືກຂາຍຫລືຕາຍເລີຍ, ຈາກນັ້ນພຣະເຢຊູຊົງປຽບທຽບເສັ້ນຜົມໃນຫົວຂອງເຮົາ ອີກ ເພິ່ນບອກວ່າເສັ້ນຜົມທີ່ມີໃນຫົວເຮົາໆເອງຍັງບໍ່ຮູ້ວ່າມີຈັກເສັ້ນ ແຕ່ພຣະອົງຊົງຮູ້ວ່າມີຈັກເສັ້ນກັນແທ້. ເຣື່ອງນີ້ມີ ຄວາມຫມາຍວ່າ ພຣະເຈົ້າຊົງຫ່ວງໃຍແມ່ນແຕ່ນົກທີ່ເປັນສັດເດັຽຣະສານຣາຄາຖືກ, ເສັ້ນຜົມນ້ອຍໆໃນຫົວຂອງເຮົາພຣະອົງກໍຊົງຫ່ວງໃຍ. ເພິ່ນເວົ້າເຣື່ອງນົກຈອກແລະເສັ້ນຜົມມາກໍເພື່ອເລົ້າໂລມໃຈບໍ່ໃຫ້ຢ້ານຕໍ່ການຖືກຂົ່ມເຫງຍ້ອນ ຂ່າວປະເສີດ "ເຫດສັນນັ້ນຢ່າຊູຢ້ານ ຝ່າຍທ່ານກໍປະເສີດກວ່ານົກຈອກຫລາຍໂຕ" (ຂໍ້ 31). ຫາກເຮົາຢ້ານກໍເທົ່າກັບ ວ່າເຮົາປະຕິເສດການຊົງໃຊ້ທີ່ພຣະເຢຊູຊົງໃຊ້ເຮົາໄປ ອ່ານຂໍ້ 3໒-33.

<u>ບຳເໜັດຜູ້ຮັບໃຊ້</u> 10:34-4໒

ໃນພຣະທັມຕອນນີ້ບັນດາອາຈານ, ຄຣູສອນພຣະຄັມພີ ຕລອດເຖິງຜູ້ອ່ານຄວນຣະມັດຣະວັງໃນການໃຊ້ພຣະທັມນີ້ ແມ່ນແຕ່ພວກຢິວໃນສມັຍນັ້ນກໍຍັງເຂົ້າໃຈຜິດແລະຜິດຫວັງເມື່ອພຣະເຢຊູກ່າວວ່າ "ຢ່າຄຶດວ່າເຮົາມາເພື່ອນຳຄວາມສງົບສຸກມາສູ່ໂລກ ເຮົາບໍ່ໄດ້ມາເພື່ອນຳຄວາມສງົບມາໃຫ້ ແຕ່ເຮົາມາເພື່ອຈະໃຫ້ມີດາບ ເພາະເຮົາມາເພື່ອເຮັດໃຫ້ລູກຊາຍບໍ່ຖືກກັນກັບພໍ່, ລູກຍິງບໍ່ຖືກກັນກັບແມ່, ແລະລູກໄພ້ບໍ່ຖືກກັບແມ່ຍ່າຂອງຕົນ ແລະຜູ້ຢູ່ຮ່ວມເຮືອນດຽວກັນກໍຈະເປັນສັດຕຣູກັນ" (ຂໍ້ 34-36). ຈົ່ງສັງເກດຄຳວ່າ ແຕ່ເຮົາມາເພື່ອຈະໃຫ້ມີດາບ ມີຄວາມຫມາຍວ່າຂ່າວປະເສີດຈະເປັນເໝືອນດາບສອງຄົມທີ່ຕັດຂາດໃນຣະວ່າງຄົນທີ່ເຊື່ອໃນພຣະເຢຊູໃຫ້ຂາດຈາກຝ່າຍໂລກ ຄືຄົນທີ່ເຊື່ອໃນພຣະອົງນັ້ນຈະບໍ່ມີຄວາມຄິດຈິດໃຈຕລອດເຖິງການກະທຳເໝືອນແຕ່ກ່ອນ, ພໍ່ແມ່ພີ່ນ້ອງທີ່ເຄີຽມີຄວາມສຳພັນຢ່າງໂລກນີ້ຈະແຍກຕົວຈາກພວກທ່ານ ແຖມຍັງຊອກຈຳຄວາມຜິດທ່ານອີກ, ສ່ວນຜູ້ທີ່ເຊື່ອຈຳຕ້ອງເປັນຝ່າຍອົດທົນຕໍ່ເຫດການໆປອງຮ້າຍນີ້ ດ້ວຍວ່າຄົນຝ່າຍໂລກຈະເປັນສັດຕຣູກັບຄົນທີ່ເຊື່ອໃນຂ່າວປະເສີດ ດ້ວຍເຫດນີ້ແຫລະພຣະອົງຈຶ່ງຊົງກ່າວວ່າ ຢ່າຄຶດວ່າເຮົາມາ ເພື່ອນຳຄວາມສງົບສຸກມາສູ່ໂລກ ພຣະອົງຊົງກ່າວເຖິງເຫດການທີ່ຈະເກີດຂຶ້ນໄວ້ລ່ວງໜ້າແລ້ວ ແລະເຣື່ອງກໍເປັນດັ່ງນັ້ນແທ້.

"ຜູ້ໃດຮັກພໍ່ແມ່ຫລາຍກວ່າເຮົາ ຜູ້ນັ້ນກໍບໍ່ສົມຄວນກັບເຮົາ" (ຂໍ້ 37) ຢ່າເຂົ້າໃຈຜິດວ່າພຣະເຢຊູສອນໃຫ້ຊັງພໍ່ຊັງແມ່ດັ່ງທີ່ເຄີຽໄດ້ຍິນຄົນຈົ່ມວ່າ ບໍ່ໃຫ້ລູກໄປໂບດ ເພາະວ່າໂບດສອນລູກໃຫ້ຊັງພໍ່ຊັງແມ່ວ່າຊັ້ນ. ເຣື່ອງນີ້ເປັນການເຂົ້າໃຈຜິດແລ້ວ ພຣະເຢຊູພໍ່ເຄີຍສອນໃຫ້ລູກຊັງພໍ່ແມ່ຫລືໃຫ້ຮັກພໍ່ແມ່ນ້ອຍລົງແຕ່ຢ່າງໃດເລີຍ ກົດບັນຍັດຂອງເພິ່ນແມ່ນສອນໃຫ້ລູກໆຮັກ ແລະນັບຖືພໍ່ແມ່ <u>ຕົວຢ່າງ;</u> ພຣະທັມອົບພະຍົບ ໒0:1໒, ພຣະບັນຍັດສອງ 5:16, ມັດທາຍ 15:4, 19:19, ມາຣະໂກ 7:10, 10:19, ລູກາ 18:໒0, ເອເຟໂຊ 6:໒ ເຫລົ່ານີ້ເປັນຕົ້ນ.

ທີ່ພຣະອົງຊົງກ່າວນັ້ນມີຄວາມໝາຍວ່າພຣະອົງເອງຊົງເປັນໃຫຍ່ໄປກວ່າສິ່ງໃດທັງປວງ ແມ່ນແຕ່ພໍ່ແລະແມ່ຂອງເຮົາພຣະອົງກໍຊົງເປັນໃຫຍ່ກວ່າອີກ ດ້ວຍວ່າພໍ່ແລະແມ່ຂອງເຮົາກໍເກີດມາຈາກສີພຣະຫັດຂອງພຣະອົງເອງ, ຄຳວ່າ ຜູ້ໃດຮັກພໍ່ແມ່ຫລາຍກວ່າເຮົາ ຜູ້ນັ້ນກໍບໍ່ສົມຄວນກັບເຮົາ ມີຄວາມໝາຍວ່າໃຫ້ເຮົາຮັກແລະນັບຖືພຣະເຈົ້າສູງກວ່າພໍ່ແມ່ຝ່າຍໂລກນີ້.

ພຣະອົງຊົງກ່າວອີກວ່າ "ແລະຜູ້ໃດທີ່ບໍ່ຮັບເອົາໄມ້ກາງແຂນຂອງຕົນຕາມເຮົາມາຜູ້ນັ້ນກໍບໍ່ສົມກັບເຮົາ" (ຂໍ້ 38) ໄມ້ກາງແຂນເປັນບ່ອນພວກທະຫານໂຣມັນຂ້າພວກນັກໂທດທັງຫລາຍໃນສມັຍນັ້ນ ພຣະເຢຊູປຽບທຽບໄມ້ກາງແຂນໃສ່ຄວາມທຸກຍາກລຳບາກ ພ້ອມທັງການໃສ່ຮ້າຍປ້າຍສີຂອງອຳນາດຕ່າງໆ ຍິ່ງໄປກວ່ານັ້ນຍາດພີ່ນ້ອງທີ່ກ່າວມາຂ້າງເທິງນັ້ນຍັງປະຕິເສດລູກຫລານຂອງຕົນທີ່ເປັນຜູ້ທີ່ພຣະເຢຊູຊົງໃຊ້ໄປອີກ ດັ່ງນັ້ນຫາກຜູ້ຮັບໃຊ້ບໍ່ໄດ້ຮັບຄວາມທຸກຍາກລຳບາກເຫມືອນພຣະອົງກໍບໍ່ເຫມາະສົມກັບພຣະອົງ ດ້ວຍວ່າພຣະອົງຊົງລຳບາກ, ຖືກປະຕິເສດແລະຖືກປະຫານທີ່ໄມ້ກາງແຂນ. ຜູ້ຮັບໃຊ້ທຸກຄົນຈຳຕ້ອງແບກກາງແຂນຂອງຕົນ ແປວ່າຄວາມທຸກຍາກໃນການຮັບໃຊ້ ຂອງຕົນຢ່າງທີ່ພຣະເຢຊົງຮັບມາກ່ອນແລ້ວ ແຕ່ຈະບໍ່ມີສິ່ງໃດເກີດຂຶ້ນກັບເຮົາເກີນກວ່າເກີດຂຶ້ນໃນພຣະອົງ ຂໍ້ 24-25.

"ຜູ້ໃດທີ່ຈະເອົາຊີວິດຂອງຕົນໄວ້ຕ້ອງເສັຽຊີວິດ ແຕ່ຜູ້ທີ່ຍອມເສັຽຊີວິດຂອງຕົນເພາະເຫັນແກ່ເຮົາ ກໍຈະພົ້ນຊີວິດ" (ຂໍ້ 39). ຫມາຍຄວາມວ່າຜູ້ທີ່ຮັກຊີວິດຊົ່ວຄາວໃນໂລກແລະບໍ່ກັບໃຈຈາກການກະທຳບາບຜູ້ນັ້ນຈະບໍ່ໄດ້ຊີວິດນິຣັນໃນຟ້າສວັນ. ດັ່ງນັ້ນຜູ້ທີ່ຮັກຊີວິດຂອງຕົນຄວນຍອມຮັບເອົາພຣະເຢຊູມາເປັນພຣະຜູ້ຊ່ອຍແລ້ວຜູ້ນັ້ນກໍຈະພົ້ນຈາກຊີວິດອັນອານິຈັງແລະພົບຊີວິດນິຣັນດອນໃນຟ້າສວັນ.

ລາງວັນຂອງຜູ້ປະກາດພຣະທັມແລະຜູ້ຕ້ອນຮັບຜູ້ປະກາດພຣະທັມແມ່ນບຳເໜັດຢ່າງດຽວກັນ, ເຮົາຮູ້ຢູ່ແລ້ວວ່າຜູ້ປະກາດພຣະທັມແນ່ນອນໄດ້ຮັບບຳເໜັດຢູ່ແລ້ວ ແຕ່ບໍ່ຄ່ອຍໄດ້ຍິນວ່າຜູ້ຕ້ອນຮັບຜູ້ປະກາດພຣະທັມຈະໄດ້ຮັບບຳເໜັດຢ່າງດຽວກັນກັບຜູ້ປະກາດພຣະທັມ, ພຣະອົງຊົງກ່າວວ່າ "ຜູ້ທີ່ຮັບຕ້ອນຜູ້ປະກາດພຣະທັມ ເພາະເປັນຜູ້ປະກາດພຣະທັມກໍຈະໄດ້ບຳເໜັດເໝືອນຜູ້ປະກາດພຣະທັມ" (ຂໍ້ 41). ຍິ່ງໄປກວ່ານັ້ນພຣະເຢຊູຍັງຊົງບອກອີກວ່າ "ຖ້າຜູ້ໃດຈະເອົານ້ຳແຕ່ຈອກດຽວໃຫ້ແກ່ຄົນເລັກນ້ອຍຜູ້ນຶ່ງໃນຈຳພວກນີ້ດື່ມເພາະເປັນສິດ ຜູ້ນັ້ນກໍຈະບໍ່ຂາດບຳເໜັດຂອງຕົນຈັກເທື່ອ" (ຂໍ້ 42).

ຄຳຖາມ:

1. ພຣະເຢຊູຊົງກ່າວວ່າ "ເຮົາໃຊ້ພວກທ່ານໄປເຫມືອນດັ່ງ ແກະຢູ່ຖ້າມກາງຝູງຫມາໄນ" (ຂໍ້ 16ກ). ໝາຍຄວາມວ່າຢ່າງໃດ?

2. ພຣະອົງຊົງສອນວ່າ ຈົ່ງສລາດເຫມືອນງູ ແລະ ອ່ອນສຸພາບເຫມືອນນົກເຂົາ" (ຂໍ້ 16ຂ). ທ່ານເຂົ້າໃຈຢ່າງໃດ?

3. ເຮັດແນວໃດເຮົາຈື່ງຈະສລາດເຫມືອນງູ ແລະ ອ່ອນສຸພາບເຫມືອນນົກເຂົາ?

4. ສິດບໍ່ໃຫຍ່ກວ່າຄຣູ ແລະຂ້ອຍໃຊ້ບໍ່ໃຫຍ່ກວ່ານາຍຂອງຕົນ ທີ່ພຣະເຢຊູກ່າວເພີ່ນຫມາຍເຖີງອັນໃດ?

5. ສິ່ງທີ່ເຮົາກ່າວແກ່ພວກທ່ານໃນທີ່ມືດ ພວກທ່ານຈົ່ງກ່າວໃນທີ່ແຈ້ງ ແລະສິ່ງທີ່ພວກທ່ານໄດ້ຍິນຈາກສຽງຊື່ມຈົ່ງປ່າວປະກາດເທິງຫລັງຄາເຮືອນ" (ຂໍ້ 27). ແມ່ນພຣະເຢຊູເວົ້າຫຍັງ?

6. ຢ່າຊູ່ຢ້ານຜູ້ທີ່ຂ້າໄດ້ແຕ່ຮ່າງກາຍ ແຕ່ຈະຂ້າຈິດວິນຍານບໍ່ໄດ້ ແຕ່ຈົ່ງຢ້ານພຣະອົງຜູ້ຊົງຣິດທີ່ອາດໃຫ້ທັງຈິດວິນຍານແລະຮ່າງກາຍຈິບຫາຍໃນໜົ້ມະຣົກ " (ຂໍ້ 28) ທ່ານເຂົ້າໃຈຢ່າງໃດ?

7. ພຣະເຢຊູຊົງກ່າວວ່າ "ຢ່າຄຶດວ່າເຮົາມາເພື່ອນໍາ ຄວາມສງົບສຸກມາສູ່ໂລກ ເຮົາບໍ່ໄດ້ມາເພື່ອນໍາຄວາມສງົບມາໃຫ້ ແຕ່ເຮົາມາເພື່ອຈະໃຫ້ມີດາບ ເພາະເຮົາມາເພື່ອເຮັດໃຫ້ລູກຊາຍບໍ່ຖືກກັນກັບພໍ່, ລູກຍິງບໍ່ຖືກກັນກັບແມ່,ແລະລູກໄພ້ບໍ່ຖືກກັບແມ່ຍ່າຂອງຕົນ ແລະຜູ້ຢູ່ຮ່ວມເຮືອນດຽວ ກັນກໍຈະເປັນສັດຕຣູກັນ (ຂໍ້ 34-36)ທ່ານຈະອະທິບາຍຢ່າງໃດແກ່ຕົນເອງແລະແກ່ຜູ້ທີ່ຍັງບໍ່ເຊື່ອ?

8. ຜູ້ໃດທີ່ບໍ່ຮັບເອົາໄມ້ກາງແຂນຂອງຕົນຕາມເຮົາມາຜູ້ນັ້ນກໍບໍ່ສົມກັບເຮົາ " (ຂໍ້ 38) ທີ່ພຣະເຢຊູຊົງກ່າວນັ້ນທີ່ຄວາມສໍາຄັນອັນໃດສໍາລັບທ່ານ? ແບກກາງແຂນແປວ່າຫຍັງ?

9. ລາງວັນຂອງຜູ້ປະກາດພຣະທັມ ແລະລາງວັນຂອງຜູ້ຕ້ອນຮັບຜູ້ປະກາດພຣະທັມແຕກຕ່າງກັນຢ່າງໃດ?

ສຈ. ທູນພັນ ວົງສຸຣິດທ໌

## <u>ບົດຮຽນບົດທີ 8</u>
## <u>ເມື່ອເວລາເກັບກ່ຽວມາເຖິງ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 13:1-23
<u>ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:</u> ມັດທາຍ 13:1-23
<u>ຈຸດສຳຄັນຂອງບົດຮຽນນີ້:</u> ການເກັບກ່ຽວໃນພັນທະກິດຂອງພຣະຄຣິດເປັນສິ່ງທີ່ແນ່ນອນແລະອຸດົມສົມບູນ, ການຕອບຮັບພຣະເຢຊູຂອງຄົນທັງຫລາຍຈະບອກເຖິງຖານະຂອງແຕ່ລະຄົນໃນການເກັບກ່ຽວນັ້ນ.

<u>ຄຳຖາມເພື່ອການສຳຣວດ:</u> ອີງໃສ່ໂລກໃນປັດຈຸບັນນີ້, ແມ່ນຫຍັງນໍຈະເກີດຂຶ້ນກັບພັນທະກິດຂອງພຣະຄຣິດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອພິຈາຣະນາເບິ່ງໜ້າທີ່ຂອງຕົວເອງໃນພັນທະກິດອັນແນ່ນອນຂອງພຣະຄຣິດ.

### <u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດເພື່ອຊ່ວຍຄວາມຕ້ອງການດ້ານຮ່າງກາຍ, ດ້ານຈິດວິນຍານ, ແລະດ້ານຄວາມຮູ້ສຶກ.
- ແບ່ງປັນຂ່າວປະເສີດເຣື່ອງພຣະຄຣິດກັບທຸກໆຄົນ.

## <u>ຄຳນຳ</u>

ຄຳອຸປມາເຣື່ອງຜູ້ຫວ່ານສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບສ່ວນຕົວໃນການຕອບຮັບພຣະເຢຊູສີ່ປະເພດ, ຊຶ່ງເລີ້ມແຕ່ການປະຕິເສດຈົນເຖິງການຍອມມອບຕົວທຸກຢ່າງ ເພື່ອຈະມີສ່ວນໃນການເກັບກ່ຽວອັນສວຍງາມຂອງພຣະຄຣິດ. ການສຶກສາເບື້ອງຫລັງແລະສາກຕ່າງໆ ຈະຊ່ວຍຜູ້ອ່ານໃຫ້ເຂົ້າໃຈຄຳສອນອັນສຳຄັນຂອງພຣະເຢຊູໃນພຣະທັມມັດທາຍ 13 ນີ້ຢ່າງລະອຽດ.

<u>ເບື້ອງຫລັງສາກ</u> (13:1-2)
ຄົນທັງຫລາຍຕິດຕາມພຣະເຢຊູເພາະພວກເຂົາໄດ້ເຫັນການອັສຈັນ ແລະເຫັນຣິດອຳນາດໃນການສອນຂອງພຣະອົງ. ຄັ້ງທີນຶ່ງ, ພຣະເຢຊູໄດ້ສອນແນວທາງໃໝ່ໃນບົດເທສນາທີ່ຈ້າຍພູ (ມັດທາຍ 5--7). ຄັ້ງທີສອງ, ພຣະອົງໄດ້ເອີ້ນເອົາສາວົກສິບສອງຄົນແລະສັ່ງສອນພວກເຂົາໃຫ້ເປັນອັຄສາວົກເພື່ອເຮັດພັນທະກິດຂອງພຣະອົງ. ໃນມັດທາຍ 11--12, ພຣະເຢຊູໄດ້ເດີນທາງໄປທົ່ວເຂດຄາລີເລເພື່ອໄປສັ່ງສອນແລະປ່າວປະກາດ, ແຕ່ພວກຜູ້ນຳທາງສາສນາແລະຄົນອື່ນໆພາກັນເລີ້ມຕໍ່ຕ້ານພຣະອົງ. ໂຢຮັນບັບຕິສະໂຕຜູ້ຢູ່ໃນຄຸກໄດ້ສົ່ງລູກສິດໄປຖາມພຣະເຢຊູວ່າພຣະອົງແມ່ນພຣະເມຊີອາຫລືບໍ່, ຕອນນີ້ເລີຍເປັນໂອກາດໃຫ້ພຣະເຢຊູໄດ້ບອກກັບຄົນທັງຫລາຍທີ່ໄດ້ປະຕິເສດບໍ່ຍອມຮັບໂຢຮັນ ໃຫ້ເຂົ້າໃຈວ່າໂຢຮັນບັບຕິສະໂຕຜູ້ນີ້ຄືເອລີຢາຜູ້ທີ່ຜູ້ປະກາດພຣະທັມໄດ້ທຳນວາຍເອົາໄວ້ (ມັດທາຍ 11:2-19).

ພຣະຜູ້ໂຜດໄດ້ຊົງ ຕິຕຽນເມືອງຕ່າງໆເພາະພວກເຂົາບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃໝ່,ໂດຍສະເພາະເມືອງໂຂຣາຊິນ, ເມືອງເບດຊາອີດາ, ແລະເມືອງກາເປນາອູມທີ່ພຣະອົງໄດ້ຊົງກະທຳການອິດທິຣິດ (11:20-24). ຫລັງຈາກໄດ້ຊົງຕິຕຽນເມືອງເຫລົ່ານັ້ນແລ້ວ ພຣະເຢຊູໄດ້ຊົງເອີ້ນໃຫ້ພວກຜູ້ຟັງທັງຫລາຍໃຫ້ຕິດຕາມພຣະອົງ (11:25-30).

ການຕໍ່ສູ້ພຣະເຢຊູໄດ້ມີເພີ່ມຂຶ້ນທຸກໆວັນເຊັ່ນການຕໍ່ສູ້ຂອງພວກຟາຣີຊາຍເຣື່ອງວັນຊະບາໂຕ (12:1-13), ພວກຟາຣີຊາຍວາງແຜນຈະຂ້າພຣະອົງ (12:14), ພວກຟາຣີຊາຍຖາມເຖິງເຣື່ອງອຳນາດຂອງພຣະຄຣິດໃນການໄລ່ຜີອອກຄົນປ່ວຍ (12:22-45), ແລະທ້າຍສຸດເຣື່ອງພຣະຜູ້ໂຜດຊົງບອກວ່າຄອບຄົວທີ່ແທ້ຂອງພຣະອົງແມ່ນ ຜູ້ທີ່ "ເຮັດຕາມນ້ຳພຣະທັຍຂອງພຣະບິດາຜູ້ຊົງສະຖິດໃນສວັນ" (12:50).

ເມື່ອພຣະອົງສະເດັດອອກຈາກເຮືອນທີ່ພຣະອົງໄດ້ຊົງກ່າວກັບຄົນທັງຫລາຍນັ້ນ, ຝູງຊົນກໍພາກັນຕິດຕາມພຣະອົງໄປເຖິງແຄມຝັ່ງທະເລ (13:1). ເມື່ອຄົນທັງຫລາຍຫຍັບມາໃກ້ພຣະອົງ, ພຣະເຢຊູໄດ້ສເດັດປະທັບຢູ່ໃນເຮືອເພື່ອພວກເຂົາທັງໝົດຈະໄດ້ເຫັນແລະໄດ້ຍິນພຣະອົງ. ພຣະເຢຊູໄດ້ຊົງສອນບົດຣຽນອັນສຳຄັນຕໍ່ໄປນີ້ໃຫ້ກັບພວກເຂົາ ຊຶ່ງເປັນການສອນຄັ້ງທີສາມ (13:2).

<u>ເນື້ອເຣື່ອງ</u> (13:3-9)

ຫລັງຈາກການຕໍ່ສູ້ກັບພວກຟາຣີຊາຍແລ້ວ, ພຣະເຢຊູພຍາຍາມທີ່ຈະເວົ້າກັບຄົນກຸ່ມອື່ນໆ ໂດຍສະເພາະແມ່ນພວກອັຄສາວົກ ແລະພວກປະຊາຊົນທີ່ສາມາດສັງເກດຮູ້ຄວາມຈິງເຣື່ອງພຣະອົງ. ພຣະອົງເລີ້ມເວົ້າກັບພວກເຂົາໂດຍການໃຊ້ຄຳອຸປມາ (13:3). ຄຳອຸປມາສ່ວນຫລາຍຈະມີຄຳສອນສຳຄັນຢ່າງນຶ່ງເປັນຈຸດໃຫຍ່ ແຕ່ບາງຄັ້ງຄຳອຸປມາອາດຈະປະ ກອບດ້ວຍຄຳສອນປີກຍ່ອຍເຖິງສອງຫລືສາມຢ່າງ. ຜູ້ເວົ້າຈະໃຊ້ເຣື່ອງສົມມຸດຫລືຄຳປຽບທຽບໃນຊີວິດປະຈຳວັນຊຶ່ງຈະເຮັດໃຫ້ຜູ້ຟັງມີຄວາມສົງສັຍ ແລະຈະຕ້ອງຕີຄວາມໝາຍໃນວິທີທາງໃໝ່. ຄຳອຸປມາຊ່ວຍໃຫ້ຄົນຟັງໄດ້ເຂົ້າໃຈເນື້ອເຣື່ອງຢ່າງແຈ່ມແຈ້ງ ແລະຍັງເອີ້ນໃຫ້ຜູ້ຟັງມີການຕອບຮັບໃນສິ່ງທີ່ຕົນໄດ້ຍິນ.

ພຣະເຢຊູຊົງເລືອກເອົາເຣື່ອງການປູກພືດຊຶ່ງເປັນເຣື່ອງທີ່ຄົນຮູ້ດີໃນຄຳອຸປມາບົດທຳອິດຂອງພຣະອົງ. ວິທີປູກພືດຂອງຊາວນາໃນສມັຍພຣະຄັມພີແຕກຕ່າງກັບການປູກພືດໃນສມັຍນີ້. ແທນທີ່ຈະໄຖກ່ອນແລ້ວຈຶ່ງຫວ່ານ, ພວກເຂົາຫວ່ານພືດລົງດິນກ່ອນແລ້ວຈຶ່ງມີການໄຖໜ້າດິນ. ໃນຄຳອຸປມານີ້, ພຣະເຢຊູຊົງເວົ້າເຖິງວ່າແມ່ນຫຍັງກຳລັງຈະເກີດຂຶ້ນກັບເມັດປູກ. ລາງເມັດກໍຕົກຕາມທາງ; ນົກກໍມາກິນກ່ອນທີ່ຈະແຕກຮາກ. ລາງເມັດກໍຕົກໃສ່ດິນທີ່ມີຫີນຫລາຍ; ເມື່ອປົ່ງຂຶ້ນເລັກນ້ອຍກໍເລີຍຕາຍໄປເພາະບໍ່ມີດິນພໍ (13:5-6). ລາງເມັດກໍຕົກລົງກາງພຸ່ມໜາມ; ໜາມກໍປົ່ງຂຶ້ນຫຸ້ມເສັຽ (13:7). ແຕ່ສ່ວນເມັດທີ່ຕົກໃສ່ດິນດີກໍເກີດຜົນ "ເມັດນຶ່ງຮ້ອຍຕໍ່, ຫົກສິບຕໍ່, ແລະສາມສິບຕໍ່" (13:8).

ສຳລັບຝູງຊົນທີ່ກຳລັງຟັງພຣະເຢຊູຢູ່ນັ້ນ, ການປູກຝັງປະເພດນີ້ຄົງຈະເປັນເຣື່ອງທີ່ໜ້າອອນຊອນ; ໃນສມັຍນັ້ນຖ້າປູກໄດ້ 25 ເທົ່າກໍຖືວ່າດີທີ່ສຸດແລ້ວ. ແຕ່ໃນຄຳອຸປມາຂອງພຣະເຢຊູນີ້ ປາກົດວ່າເປັນເຣື່ອງໜ້າອັສຈັນເພາະສາມາດປູກໄດ້ເຖິງ 100 ເທົ່າ, 60 ເທົ່າ, ຫລື 30 ເທົ່າ. ທີ່ຈິງແລ້ວພຣະເຢຊູເວົ້າໃຫ້ພວກເຂົາໄດ້ຄິດ; ພຣະອົງປ່ອຍໃຫ້ພວກຜູ້ຟັງຕີຄວາມໝາຍເອົາເອງ. "ຜູ້ໃດມີຫູ ຈົ່ງຟັງເອົາ" (13:9). ພຣະເຈົ້າຊົງປະທານຫູໃຫ້ທຸກຄົນ; ແຕ່ການຟັງ, ການໄດ້ຍິນ, ແລະການເຂົ້າໃຈບໍ່ແມ່ນພາຣະຂອງພຣະອົງ ແຕ່ເປັນໜ້າທີ່ຂອງພວກເຂົາ.

<u>ຄວາມເລິກລັບ</u> (13:10-17)

ພວກອັຄສາວົກຮູ້ສຶກວ່າຫລາຍຄົນໃນພວກຜູ້ຟັງອາດຈະບໍ່ເຂົ້າໃຈຄຳອຸປມານີ້; ພວກເຂົາຈຶ່ງທູນຖາມພຣະອົງວ່າ, "ເຫດສັນໃດທ່ານຈຶ່ງກ່າວກັບເຂົາເປັນຄຳອຸປມາ." ພຣະອົງຊົງອະທິບາຍວ່າ ຄວາມເລິກລັບເຣື່ອງຣາຊອານາຈັກຂອງພຣະອົງຈະຕ້ອງຖືກເປີດເຜີຍແລະບໍ່ແມ່ນເຣື່ອງທີ່ຈະນຳມາສອນ. ມະນຸດບໍ່ໄດ້ຄົ້ນພົບພຣະເຈົ້າ, ແຕ່ພຣະເຈົ້າຊົງເປີດເຜີຍພຣະອົງເອງໃຫ້ຄົນໄດ້ຮູ້. ພຣະເຈົ້າຊົງປະທານຄວາມເຂົ້າໃຈໃຫ້ກັບຜູ້ທີ່ເປີດຈິດໃຈຕໍ່ຄວາມຈິງ (13:11). ຜູ້ທີ່ມີຢູ່ແລ້ວຈະເພີ່ມເຕີມໃຫ້ອີກ ແຕ່ຜູ້ທີ່ປິດໃຈໄວ້ ສິ່ງທີ່ເຂົາມີເລັກນ້ອຍກໍຈະຖືກຍົກໄປເສັຽຈາກເຂົາ (13:12).

ໃນມັດທາຍ 13:14-15, ພຣະເຢຊູຊົງກ່າວເຖິງຄຳທຳນວາຍຂອງຜູ້ປະກາດພຣະທັມເອຊາຢາຊຶ່ງຂຽນໄວ້ໃນ ເອຊາຢາ 6:9-10. ເພາະມະນຸດມີຈິດໃຈທີ່ຕໍ່ຕ້ານພຣະເຈົ້າ, ເຖິງພວກເຂົາຈະໄດ້ຍິນ ແຕ່ພວກເຂົາກໍບໍ່ສາມາດເຂົ້າໃຈໄດ້. ພຣະເຢຊູຊົງປະທານແສງໄຟຂອງຄວາມຈິງ, ແຕ່ເມື່ອແສງໄຟນັ້ນໄດ້ມາໃກ້ພວກເຂົາ ພວກເຂົາຍິ່ງພາກັນປິດຕາໄວ້. ພຣະເຢຊູຊົງຕຽມພ້ອມທີ່ຈະປິ່ນປົວພວກເຂົາຖ້າເຂົາຍອມເປີດຕາອອກ. ພຣະເຢຊູຊົງກ່າວກັບພວກສາວົກວ່າ ພວກເຂົາເປັນຜູ້ທີ່ໄດ້ຮັບພຣະພອນ ເພາະພວກເຂົາຕັດສິນໃຈຕິດຕາມພຣະອົງ. ພວກເຂົາໄດ້ເຫັນແລະໄດ້ຍິນສິ່ງທີ່ພວກຜູ້ມີສິນທັມທັງຫລາຍປາຖນາເອົາໄວ້ແຕ່ບໍ່ເຄີຍໄດ້ພົບເລີຍ (13:1-17).

<u>ຜູ້ຫວ່ານ, ເມັດພືດ, ແລະດິນ</u> (13:18-23)

ໃນຄຳອຸປມາເຣື່ອງຜູ້ຫວ່ານໃນມັດທາຍ 13, ຊາວນາຜູ້ນີ້ມີທົ່ງນາອັນກວ້າງໃຫຍ່; ລາວບໍ່ໄດ້ປູກພືດເທື່ອລະເມັດ ແຕ່ລາວຫວ່ານເມັດລົງໄປ. ໃນການອະທິບາຍຄຳອຸປມາ, ພຣະເຢຊູຊົງບອກວ່າ ເມັດພືດຄື "ເຣື່ອງຣາຊອານາຈັກ," ແລະດິນຄືຜູ້ທີ່ໄດ້ຍິນໄດ້ຟັງພຣະທັມຂອງພຣະເຈົ້າ (13:18-23). ພຣະເຈົ້າຊົງສົ່ງພຣະທັມອອກໄປເພື່ອທຸກຄົນເໝືອນດັ່ງຊາວນາທີ່ຫວ່ານເມັດໄປທົ່ວໜ້າດິນ. ພຣະເຈົ້າຊົງຫວ່ານເມັດພືດຊະນິດດຽວໄປທຸກຫົນທຸກແຫ່ງ. ການຕອບຮັບພຣະທັມກໍຈະແຕກຕ່າງກັນ ເໝືອນການຕອບຮັບເມັດພືດໃນຄຳອຸປມານັ້ນ.

ເມັດທີ່ຕົກລົງຕາມທາງກໍຖືກນົກກິນໄປ; ມານຮ້າຍຍາດເອົາເມັດທີ່ຫວ່ານໃນໃຈຄົນນັ້ນ, ເຂົາຈຶ່ງປະຕິເສດພຣະທັມ (13:9). ເມັດທີ່ຕົກລົງບ່ອນມີຫີນຫລາຍກໍແຕກຂຶ້ນພຽງຊົ່ວຄາວ (13:20-21); ບາງຄົນໄດ້ຍິນພຣະທັມແລ້ວກໍຮັບເອົາດ້ວຍຄວາມຊົມຊື່ນຍິນດີ ແຕ່ພໍປະສົບບັນຫາຫລືຖືກຕໍ່ຕ້ານຈາກຄອບຄົວຫລືເພື່ອນຝູງ ເຂົາກໍປະຖິ້ມຄວາມເຊື່ອໄປເສັຽ. ໂລກແລະຄວາມຫລອກລວງແຫ່ງຊັບສິນບັດຫຸ້ມຮັດພຣະທັມບໍ່ໃຫ້ເກີດຜົນໃນຊີວິດຂອງຜູ້ເຊື່ອຫລາຍຄົນ (13:22). ໃນທີ່ສຸດ, ເໝືອນເມັດທີ່ຕົກໃສ່ດິນດີ, ຫລາຍຄົນໄດ້ຮັບເອົາພຣະທັມດ້ວຍຄວາມຈິງໃຈ ແລະພວກເຂົາ "ກໍເກີດຜົນໄດ້ຮ້ອຍຕໍ່ແດ່, ຫົກສິບຕໍ່ແດ່, ແລະສາມສິບຕໍ່ແດ່" (13:23).

<u>ຄວາມສຳເຣັດ</u>

ພຣະເຢຊູບໍ່ໄດ້ຊົງວັດແທກຄວາມສຳເຣັດຂອງພຣະອົງໃນໂລກນີ້ດ້ວຍຕົວເລກ ຫລືຄວາມນິຍົມຊົມຊອບຈາກຜູ້ອື່ນ, ແຕ່ພຣະອົງຊົງວັດແທກດ້ວຍຈິດໃຈຂອງຜູ້ທີ່ຕິດຕາມພຣະອົງ. ເຖິງຈະມີການຕອບຮັບຫລາຍໆປະເພດ ແລະການຕໍ່ຕ້ານຂ່າວປະເສີດ, ການປະກາດເຣື່ອງຣາຊອານາຈັກສວັນຈະຕ້ອງສຳເຣັດແນ່ນອນ. ພວກອັຄສາວົກຜູ້ຕິດຕາມພຣະເຢຊູຕ້ອງການເຂົ້າໃຈຄວາມຍິ່ງໃຫຍ່ເຣື່ອງອະນາຄົດຂອງພຣະຣາຊອານາຈັກຂອງພຣະເຈົ້າ. ພວກເຂົາໄດ້ເຫັນການຕໍ່ຕ້ານພຣະເຢຊູຂອງພວກຟາຣີຊາຍ ແລະພວກຜູ້ນຳສາສນາ. ພວກເຂົາໄດ້ເຫັນຝູງຊົນຕິດຕາມພຣະເຢຊູເພື່ອຢາກເຫັນສິ່ງອັສຈັນ. ພວກສາວົກຮູ້ດີວ່າພວກເຂົາບໍ່ສາມາດທີ່ຈະເພິ່ງຄົນພວກນັ້ນໃຫ້ສນັບສນູນພຣະຜູ້ໂຜດຂອງພວກເຂົາ. ສິ່ງທີ່ພວກເຂົາຕ້ອງການຄືຄວາມໝັ້ນໃຈວ່າພຣະເຢຊູຈະໄດ້ຮັບຊັຍຊະນະໃນຄາວສຸດທ້າຍ.

ຄຣິສຕະຈັກໃນສມັຍແລກກໍພົບກັບການຕໍ່ຕ້ານຢ່າງຮ້າຍແຮງ. ພວກເຂົາຖືກການຂົ່ມເຫງ. ຄຣິສຕຽນທັງຫລາຍຈຳຕ້ອງຍົກຍ້າຍເປັນປະຈຳເພື່ອຫລີກເວັ້ນການກົດຂີ່ຂົ່ມເຫງ. ສານສູງສັ່ງຂ້າຊະເຕຟາໂນໂດຍການຄວ່າງຫີນ ເພາະລາວ

ຕິດຕາມ ແລະເປັນພຍານເຣື່ອງພຣະຄຣິດ (ກຈກ 6:8--7:0). ການປະຫານຊະເຕຟາໂນເປັນຈຸດເລີ້ມຕົ້ນຂອງການຂົ່ມເຫງຄຣິສຕະຈັກ; ພວກລູກສິດພາກັນແຕກກະຈັດກະຈາຍໄປທົ່ວແຂວງຢູດາຍແລະແຂວງຊາມາເລັຽ (ກຈກ 8:1-2).

ພວກເຮົາໃນສມັຍນີ້ບໍ່ໄດ້ຖືກການຕໍ່ຕ້ານປະເພດດຽວກັບພວກລູກສິດຂອງພຣະເຢຊູໃນສມັຍນັ້ນ. ການຕໍ່ຕ້ານຂອງພວກເຮົາອາດຈະເປັນໃນຮູບໃໝ່ ເຊັ່ນຄວາມຫຍຸ້ງຍາກໃນວຽກງານ ຫລືການມົວເມົາກັບວັດຖຸຊຶ່ງຈະຫຸ້ມຮັດເຮົາໄວ້ບໍ່ໃຫ້ເກີດຜົນ. ຄຳອຸປມາເຣື່ອງຜູ້ຫວ່ານສະແດງໃຫ້ເຫັນວ່າການຕັດສິນໃຈທີ່ຈະຕິດຕາມແລະເປັນພຍານໃຫ້ພຣະຄຣິດເປັນການຕອບຮັບສ່ວນຕົວ. ແຕ່ລະຄົນຈະຕ້ອງເປີດຕາ, ເປີດຫູ, ແລະເປີດໃຈຂອງຕົວເອງເພື່ອຮັບເຣື່ອງເອົາຣາຊອານາຈັກສວັນ. ທ່ານໄດ້ເຫັນ, ໄດ້ຍິນ, ແລະໄດ້ເຂົ້າໃຈຄຳອຸປມາຂອງພຣະຄຣິດເໝືອນກັບພວກສາວົກບໍ່?

<u>ຄຳຖາມ</u>

1. ທ່ານຄິດວ່າເປັນຫຍັງພວກຟາຣີຊາຍ ແລະພວກຜູ້ນຳສາສນາຈຶ່ງພາກັນຕໍ່ຕ້ານພຣະເຢຊູ?

2. ຄົນໃນສມັຍນີ້ໃຊ້ເຫດຜົນຫຍັງແດ່ເພື່ອຕໍ່ຕ້ານພຣະຄຳຂອງພຣະຄຣິດ?

3. ທ່ານຄິດວ່າເປັນຫຍັງພຣະເຢຊູຈຶ່ງເວົ້າຢ່າງນີ້ (13:11), "ຂໍ້ຄວາມເລິກລັບເຣື່ອງຣາຊອານາຈັກສວັນຊົງໂຜດໃຫ້ທ່ານທັງຫລາຍຮູ້ໄດ້ ແຕ່ຄົນເຫລົ່ານັ້ນບໍ່ຊົງໂຜດໃຫ້ຮູ້" ?

4. ທ່ານຈະເວົ້າແນວໃດກັບບຸກຄົນທີ່ເຊື່ອວ່າພຣະເຈົ້າຊົງເລືອກຜູ້ທີ່ຈະຕອບຮັບພຣະອົງ ຫລືກັບຜູ້ທີ່ເວົ້າວ່າຖ້ອຍຄຳຂອງພຣະເຢຊູທີ່ວ່າ, "ຜູ້ໃດມີຢູ່ແລ້ວຈະຊົງເພີ່ມເຕີມໃຫ້ແກ່ຜູ້ນັ້ນອີກ ແລະຜູ້ນັ້ນຈະມີບໍຣິບູນ ແຕ່ຜູ້ທີ່ບໍ່ມີນັ້ນເຖິງແມ່ນສິ່ງທີ່ຕົນມີຢູ່ ກໍຈະຊົງຍຶກເອົາໄປຈາກຜູ້ນັ້ນເສັຽ" ເປັນຄຳເວົ້າທີ່ຍຸດຕິທັມບໍ່?

5. ການສອນຂອງພຣະເຢຊູໂດຍການໃຊ້ຄຳອຸປມາສາມາດແຍກຜູ້ທີ່ຕັ້ງໝັ້ນ ແລະຜູ້ບໍ່ຕັ້ງໝັ້ນໄດ້ແນວໃດ?

ສຈ. ສິດນີ ຄານ

# ບົດຮຽນບົດທີ 9
# ທ່ານຈະອົດທົນບໍ່?

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ມັດທາຍ 13:24-43
ຂໍ້ພຣະຄັມພີສໍາລັບສໍາລັບເບື້ອງຫຼັງ: ມັດທາຍ 13:24-52
ຈຸດສໍາຄັນຂອງບົດຮຽນນີ້: ໃນຂະນະທີ່ພວກເຮົາກໍາລັງມີສ່ວນໃນພັນທະກິດຂອງພຣະຄຣິດ, ໃຫ້ພວກເຮົາຮຽນມີຄວາມອົດທົນ ແລະມີຄວາມຕັ້ງໃຈເໝືອນດັ່ງພຣະເຈົ້າທີ່ຈະເຫັນງານນັ້ນສໍາເຣັດ.

ຄໍາຖາມເພື່ອການສໍາຣວດ: ພວກເຮົາຈະເຮັດຢ່າງໃດເວລາວຽກງານບໍ່ເກີດຜົນ ຫລືບໍ່ຖືກກັບເວລາທີ່ເຮົາຕ້ອງການ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ວ່າສິ່ງໃດໃນຊີວິດທີ່ຈໍາເປັນຈະຕ້ອງມີຄວາມອົດທົນແລະມີຄວາມເອົາໃຈໃສ່ໃນພັນທະກິດຂອງພຣະຄຣິດ ກ່ອນຈະໄດ້ເຫັນຜົນດີ.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຄົນອື່ນທາງດ້ານຮ່າງກາຍ, ຈິດໃຈ, ແລະຄວາມຮູ້ສຶກ.
- ສັ່ງສອນຄົນໃຫ້ເປັນຜູ້ນໍາປະເພດຮັບໃຊ້.

## ຄໍານໍາ

ໃນຄໍາອຸປມາເຣື່ອງເຂົ້ານົກ, ເຣື່ອງເມັດພັກກາດ, ແລະເຣື່ອງເຊື້ອແປ້ງ, ພຣະເຢຊູຊີ້ແນໃສ່ການອົດທົນ--ການລໍຄອຍເປັນສິ່ງຈໍາເປັນໃນການແຍກຜູ້ຕິດຕາມທີ່ແທ້ຈາກຜູ້ຕິດຕາມພຽງເພີນໆ ແລະເວລາເປັນສິ່ງຈໍາເປັນເພື່ອການເຕີບໃຫຍ່ຂອງຣາຊອານາຈັກສວັນ.

ທ່ານຄິດຢາກລ່ວງໄຟສັນຍານສີແດງບໍ່ ເວລາທ່ານຖືກໄຟແດງໄປແລ້ວຕັ້ງສອງສາມຄັ້ງ? ເວລາທ່ານໄປຮ້ານຂາຍສິ່ງຂອງ, ທ່ານໄປເຂົ້າແຖວທີ່ສັ້ນທີ່ສຸດບໍ່ ເພື່ອຈະຈ່າຍເງິນ? ທ່ານຫລຽວເບິ່ງໂມງເລື້ອຍໆບໍ່ເວລາທ່ານລໍຄອຍຢູ່ໃນແຖວ? ຄົນສ່ວນຫລາຍກໍເປັນເຊັ່ນນັ້ນ; ພວກເຮົາບໍ່ມັກລໍຖ້າ. ຄວາມອົດທົນເປັນຄຸນງາມຄວາມດີສນິດນຶ່ງ; ພຣະເຈົ້າຕຽມພ້ອມທີ່ຈະລໍຄອຍ, ຕຽມພ້ອມທີ່ຈະຕັ້ງໃຈໃສ່ທີ່ຄວາມສໍາເຣັດຄັ້ງສຸດທ້າຍໃນພັນທະກິດຂອງພຣະອົງ.

ອົດທົນ: ການລໍຄອຍຈະມາເຖິງ

ສາວົກຂອງພຣະເຢຊູແລະຄຣິສຕຽນໃນສມັຍແລກຄົງຈະມີບັນຫາເຣື່ອງການລໍຄອຍ. ຄຳອຸປມາສາມເຣື່ອງທຳອິດໃນພຣະທັມມັດທາຍສະແດງເຖິງຄຸນຄ່າຂອງຄວາມອົດທົນ. ເໝືອນໃນຄຳອຸປມາອື່ນໆ, ພຣະຄຣິດຊົງໃຊ້ເຣື່ອງໃນໂລກນີ້ຮຽງຂ້າງກັບຄວາມໝາຍເຣື່ອງຟ້າສວັນ. ຈຸດສຳຄັນຂອງແຕ່ລະເຣື່ອງບໍ່ແມ່ນທີ່ເນື້ອງເຣື່ອງແຕ່ຢູ່ທີ່ຄວາມໝາຍ.

ມັດທາຍ 13 ແມ່ນບົດສົນທະນາເທື່ອທີສາມຂອງພຣະເຢຊູ. ບົດສົນທະນາເທື່ອທີນຶ່ງຂອງພຣະເຢຊູແມ່ນ ຕອນພຣະອົງເທສນາຢູ່ຈ້າຍພູ (ມທ 5--7). ບົດສົນທະນາເທື່ອທີສອງແມ່ນຕອນພຣະຄຣິດຊົງເອີ້ນເອົາອັດສາວົກສິບສອງຄົນ (ມທ 10). ໃນຣະຫວ່າງບົດສົນທະນາທີສອງແລະທີສາມ, ພຣະເຢຊູຊົງເດີນທາງພາຍໃນແຂວງຄາລີເລເພື່ອສັ່ງສອນ, ເທສນາ, ແລະປິ່ນປົວພະຍາດ (ມທ 11--12). ບົດຮຽນທີ 8 ທີ່ຜ່ານມາໄດ້ໃຫ້ລາຍຣະອຽດໃນຕອນນີ້.

<u>ອົດທົນ: ການພິພາກສາຈະມາເຖິງ</u> (13: 24-30, 34-43)

ພຣະເຢຊູແລະສາວົກເຂົ້າໃຈດີເຣື່ອງເຂົ້ານົກ. ເຂົາເຈົ້າຮູ້ອັນຕະລາຍແລະການທຳລາຍຂອງເຂົ້ານົກ. ໃນພາກຕົ້ນຂອງມັດທາຍ 13, ພຣະເຢຊູໃຊ້ຄຳອຸປມາເຣື່ອງຜູ້ຫວ່ານ, ພຣະອົງຊົງເວົ້າເຖິງເມັດພືດ ແລະດິນປະເພດຕ່າງໆເພື່ອເປັນຕົວຢ່າງເຣື່ອງການຕອບຮັບພຣະອົງສີ່ປະເພດ. ໃນພາກທ້າຍຂອງພຣະທັມມັດທາຍນີ້, ພຣະອົງຍັງຊົງເວົ້າເຣື່ອງນາແຕ່ຊົງປ່ຽນບົດຮຽນ. ພຣະເຢຊູຊົງໃຊ້ຄຳປຽບທຽບໃນຄະນະທີ່ພຣະອົງກຳລັງປຽບເຣື່ອງຣາຊອານາຈັກສວັນກັບຄົນທີ່ຫວ່ານພືດເມດດີໃນນາຂອງຕົນ (13:24). ໃນເວລາກາງຄືນສັດຕຣູຂອງຜູ້ຫວ່ານໄດ້ນຳເຂົ້ານົກມາຫວ່ານໃສ່ຖ້າມກາງເຂົ້າດີ (13:25).

ເມື່ອພວກຂ້ອຍໃຊ້ຂອງເຈົ້າຂອງນາສັງເກດເຫັນເຂົ້ານົກເກີດຂຶ້ນມາຖ້າມກາງເຂົ້າດີ, ພວກເຂົາກໍມາແຈ້ງຄວາມແກ່ນາຍ. ທີ່ຈິງແລ້ວພວກຂ້ອຍໃຊ້ຄົງຮູ້ດີວ່າເຈົ້ານາຍຂອງເຂົາບໍ່ໄດ້ຫວ່ານເຂົ້ານົກປົນໃສ່ເຂົ້າດີ (13:27). "ນາຍເອີຍທ່ານໄດ້ຫວ່ານເຂົ້າດີໃນນາຂອງທ່ານບໍ່ແມ່ນຫລື ແລ້ວເຂົ້ານົກມາແຕ່ໃສ?" ພວກເຂົາບອກນາຍຂອງຕົນວ່າຈະພາກັນໄປເກັບເຂົ້ານົກອອກຈາກນາ (13:28); ແຕ່ເຈົ້ານາຍເປັນຄົນມີຄວາມອົດທົນແລະພ້ອມທີ່ຈະລໍຄອຍ, ເພາະການຫລົກເຂົ້ານົກຈະນຳຄວາມເສັຍຫາຍມາໃສ່ເຂົ້າດີດ້ວຍ (13:27). ແຕ່ຖ້າພວກເຂົາລໍຖ້າຈົນເຖິງຣະດູກ່ຽວ, ເຂົາສາມາດເກັບເຂົ້ານົກນັ້ນກ່ອນ ແລະນຳໄປເຜົາໄຟເສັຍ ແລ້ວຈຶ່ງມາເກັບເຂົ້າດີເພື່ອຈະນຳໄປໂຮມໄວ້ໃນເລົ້າຕໍ່ໄປ (13:30).

ຫລັງຈາກພຣະເຢຊູເວົ້າຄຳອຸປມາສອງເຣື່ອງ (13:31-33), ພຣະອົງຊົງສະເດັດອອກໄປຈາກຝູງຊົນ; ພຣະອົງແລະສາວົກຜູ້ໃກ້ຊິດໄດ້ເຂົ້າໄປໃນບ້ານ. ພວກສາວົກໄດ້ຂໍຮ້ອງໃຫ້ພຣະເຢຊູອະທິບາຍຄຳອຸປມາເຣື່ອງເຂົ້ານົກໃຫ້ພວກເຂົາຟັງ (13:36). ພວກສາວົກຄົງຈະເຂົ້າໃຈຄຳອຸປມາຫລາຍເຣື່ອງທີ່ຜ່ານມາເພາະພວກເຂົາຂໍຟັງຄຳອະທິບາຍພຽງສອງເຣື່ອງຄືເຣື່ອງຜູ້ຫວ່ານແລະເຣື່ອງເຂົ້ານົກ. ສາວົກມັດທາຍຜູ້ຂຽນພຣະທັມເຫຼັ້ມນີ້ ໄດ້ອ້າງເຖິງຄຳທຳນວາຍໃນບົດເພງສັຣເສີນ 78:2 ທີ່ພຣະເຢຊູໄດ້ຊົງເຮັດໃຫ້ສຳເຣັດຖ້າມກາງພວກເຂົາ. "ເຮົາຈະອ້າປາກເປັນຄຳອຸປມາ ເຮົາຈະບອກຂໍ້ຄວາມທີ່ປົກອຳໄວ້..." (13:35).

ໃນຄຳອຸປມາເຣື່ອງຜູ້ຫວ່ານ, ຄົນຫວ່ານອາດຈະເປັນພຣະເຢຊູ ຫລືບຸກຄົນທີ່ໄປປະກາດຂ່າວປະເສີດຫລືເມັດພືດ. ດິນໝາຍເຖິງບຸກຄົນທີ່ໄດ້ຍິນເຣື່ອງຣາຊອານາຈັກສວັນແລະການຕອບຮັບຂອງເຂົາ (13:3-23). ໃນຄຳອຸປມາເຣື່ອງເຂົ້ານົກ, ຜູ້ຫວ່ານແມ່ນພຣະຄຣິດພຣະບຸດຂອງພຣະເຈົ້າ (13:37); ນາແມ່ນແຜ່ນດິນໂລກນີ້; ເມັດດີແມ່ນ "ໄພ່ພົນຂອງພຣະເຈົ້າ"; ສ່ວນເມັດບໍ່ດີແມ່ນ "ພົລເມືອງຂອງມານ." ຜູ້ກ່ຽວຄືພວກເທວະດາທີ່ຈະມາແຍກເຂົ້ານົກ ແລະເຂົ້າດີອອກຈາກກັນ. ເຂົ້ານົກຈະຖືກນຳໄປເຜົາໄຟ ແລະ "ທີ່ນັ້ນຈະມີການຮ້ອງໄຫ້ກັດແຂ້ວຄ້ຽວຟັນ" (13:39).

ພຣະຜູ້ເປັນເຈົ້າຊົງມີພຣະປະສົງທີ່ຈະໃຫ້ທຸກຄົນເຂົ້າມາຢູ່ໃນຣາຊອານາຈັກຂອງພຣະອົງ, ແຕ່ຊາຕານພຍາຍາມທີ່ຈະທຳລາຍຈຸດປະສົງແລະແຜນການຂອງພຣະເຈົ້າສຳລັບແຕ່ລະຊີວິດ. ພວກເຮົາທັງຫລາຍກຳລັງຢູ່ໃນໂລກທີ່ປະຕິເສດພຣະເຢຊູ. ບາງຄັ້ງເຮົາບໍ່ສາມາດທີ່ຈະແຍກກັນໄດ້ວ່າໃຜເປັນຄຣິສຕຽນ ແລະໃຜບໍ່ໄດ້ເປັນຄຣິສຕຽນ ເໝືອນດັ່ງຊາວນາທີ່ກຳລັງສັງເກດເບິ່ງທົ່ງນາວ່າເຂົ້າໃດແມ່ນເຂົ້າດີ ແລະເຂົ້າໃດແມ່ນເຂົ້ານົກ. ສິ່ງນຶ່ງທີ່ແນ່ນອນຄື ພຣະເຈົ້າຈະແຍກຄວາມດີອອກຈາກຄວາມຊົ່ວ, ແລະຖ້າພວກເຮົາອົດທົນລໍຄອຍພວກເຮົາກໍຈະໄດ້ເຫັນຄຣິສຕຽນທີ່ແທ້ແຍກອອກຈາກຄຣິສຕຽນຈອມປອມ, ດັ່ງພຣະທັມມັດທາຍ 13:43 ບອກໄວ້ວ່າ, "ພວກສິນທັມຈະຮຸ່ງເຮືອງໃນຣາຊແຜ່ນດິນພຣະບິດາ."

<u>ອົດທົນ: ການເຕີບໃຫຍ່ຈະມາເຖິງ</u> (13:31-35)

ພຣະເຢຊູປຽບທຽບຣາຊອານາຈັກສວັນໃສ່ແກ່ນຜັກກາດເມັດນຶ່ງທີ່ຊາວນາໄດ້ນຳໄປຫວ່ານໄວ້ໃນສວນ(13:31).ເມື່ອເຖິງເວລາເມັດນັ້ນກໍງອກຂຶ້ນ ແລະກາຍເປັນຕົ້ນໄມ້ທີ່ນົກສາມາດເຮັດຄອນອາສັຍຢູ່ຕາມກິ່ງກ້ານຂອງມັນ (13:32). ຝູງຊົນທີ່ກຳລັງຟັງພຣະເຢຊູຮູ້ດີວ່າແກ່ນຜັກກາດເມັດນ້ອຍໆສາມາດທີ່ຈະກາຍເປັນຕົ້ນໄມ້ໃຫຍ່ສູງໄດ້ເຖິງ6 ຟຸດ. ນອກນັ້ນພວກເຂົາເຈົ້າຍັງຮູ້ດີວ່າຕົ້ນຜັກກາດສາມາດເກີດໄດ້ໃນທຸກທົ່ນທຸກແຫ່ງ; ຕົ້ນຜັກກາດສາມາດທົນທານກັບແມງໄມ້ ແລະສາມາດເກີດໄດ້ໂດຍບໍ່ເລືອກດິນຟ້າອາກາດ. ເໝືອນດັ່ງເມັດຜັກກາດ ຣາຊອານາຈັກສວັນສາມາດເກີດແລະເຕີບໃຫຍ່ໄດ້ໂດຍບໍ່ເລືອກອາກາດຫລືສະຖານທີ່.

ໃນຄຳອຸປມາເຣື່ອງເຊື້ອແປ້ງ, ພຣະເຢຊູຊົງປຽບທຽບຣາຊອານາຈັກສວັນໃສ່ກັບເຊື້ອແປ້ງ "ທີ່ຜູ້ຍິງຄົນນຶ່ງເອົາປົນໃສ່ໃນແປ້ງສາມຜອງ ຈົນແປ້ງນັ້ນຟູຂຶ້ນທັງໝົດ" (13:33). ເມື່ອໃຫ້ເວລາ, ເຊື້ອແປ້ງເລັກນ້ອຍສາມາດເຮັດໃຫ້ແປ້ງຕັ້ງຫລວງຫລາຍຟູຂຶ້ນ. ຣາຊອານາຈັກສວັນກໍເຊັ່ນດຽວກັນ, ຖ້າໃຫ້ເວລາຣາຊອານາຈັກຂອງພຣະເຈົ້າຊຶ່ງເລີ້ມຈາກກຸ່ມຄົນນ້ອຍໆກໍຈະເຕີບໃຫຍ່ແລະ ແຜ່ກວ້າງອອກໄປເຖິງຊີວິດຂອງຄົນທັງຫລາຍ.

<u>ອົດທົນ: ຊັບອັນລ້ຳຄ່າຈະມາເຖິງ</u> (13:44-45)

ໃນຄຳອຸປມາເຣື່ອງທີສີ່ຂອງບົດຮຽນນີ້, ພຣະເຢຊູຄຣິດປຽບທຽບຣາຊອານາຈັກຂອງພຣະອົງໃສ່ກັບ "ຊັບທີ່ເຊື່ອງໄວ້ໃນທົ່ງນາ" (13:44). ພວກເຮົາບໍ່ຮູ້ວ່າເປັນຫຍັງຊັບອັນມາຄ່ານັ້ນຈຶ່ງມາຢູ່ໃນນາ ຫລືເປັນຫຍັງເຈົ້າຂອງນາຈຶ່ງບໍ່ຮູ້ເຣື່ອງຊັບນີ້ແລະອ້າງກັມສິດ. ແຕ່ພວກເຮົາຮູ້ວ່າຜູ້ທີ່ພົບຊັບນັ້ນໄດ້ເຊື່ອງຊັບໄວ້ ແລະເຂົາໄດ້ໄປຂາຍທຸກຢ່າງທີ່ຕົນມີຢູ່ເພື່ອຈະມາຊື້ນານັ້ນ (13:44).

ໃນຄຳອຸປມາອີກເຣື່ອງນຶ່ງ, ພຣະເຢຊູໄດ້ຊົງປຽບທຽບຣາຊອານາຈັກຂອງພຣະອົງໃສ່ກັບພໍ່ຄ້າຜູ້ນຶ່ງທີ່ຊອກຫາຊື້ໄຂ່ມຸກ ຢ່າງດີ (13:45). ເມື່ອເຂົາໄດ້ພົບໄຂ່ມຸກທີ່ມີຄ່າ, ຊາຍຄົນນັ້ນກໍໄປຂາຍທຸກຢ່າງທີ່ຕົນມີຢູ່ ແລ້ວໄປຊື້ໄຂ່ມຸກນັ້ນ (13: 46).

ຄຳອຸປມາສອງເຣື່ອງນີ້ສອນຄ້າຍຄືກັນ. ຄວາມໝາຍສຳຄັນສິ່ງນຶ່ງຄື ຣາຊອານາຈັກສວັນມີຄຸນຄ່າຫລາຍ, ແລະພວກເຮົາສົມຄວນທີ່ຈະເສັຽສະລະທຸກຢ່າງເພື່ອຈະໄດ້ສົມບັດອັນມີຄ່ານີ້. ພວກເຮົາຄວນມອບຕົວໃຫ້ພຣະຄຣິດທັງໝົດ. ທີ່ຈິງແລ້ວພວກເຮົາຄົງບໍ່ມີເງິນພຽງພໍທີ່ຈະຊື້ຊັບອັນມີຄ່າທີ່ເຊື່ອງໄວ້ໃນທົ່ງນາ ຫລືໄຂ່ມຸກທີ່ມີຄ່າແພງ. ແຕ່ພວກເຮົາສາມາດທີ່ຈະໄປຢູ່ຟ້າສວັນນຳພຣະເຈົ້າໄດ້ດ້ວຍພຣະຄຸນທາງຄວາມເຊື່ອ. ພຣະເຢຊູຊົງຖາມສາວົກຂອງພຣະອົງໃນຕອນນຶ່ງວ່າ "ຜູ້ນັ້ນຈະນຳເອົາສິ່ງໃດໄປແລກເອົາຊີວິດອັນແທ້ຂອງຕົນກັບຄືນມາ" (ມທ 16:26). ພວກເຮົາບໍ່ສາມາດຈະໃຫ້ສິ່ງໃດໄດ້, ແຕ່ພຣະເຢຊູຊົງໃຫ້ທຸກຢ່າງແລ້ວ.

ອົດທົນ: ອານາຈັກສະຫວັນຈະມາເຖິງ

ຫລາຍໆຄັ້ງຄຣິສຕຽນໃນສມັຍນີ້ພາກັນຂາດຄວາມອົດທົນ ຫລືທໍ້ຖອຍໃນພັນທະກິດຂອງພຣະຄຣິດ. ແຕ່ພວກເຮົາສາມາດວາງໃຈໃນພຣະສັນຍາໃນເຣື່ອງອຸປມາທີ່ຜ່ານມາ. ຈາກຄຳສອນໃນຄຳອຸປມາເຣື່ອງເຂົ້ານົກແລະເຂົ້າດີ, ຖ້າພວກເຮົາລໍຄອຍ, ໃນວັນພິພາກສາ ພຣະອົງຈະແຍກສາວົກແທ້ອອກຈາກພວກຜູ້ເຊື່ອທີ່ບໍ່ໄດ້ຈິງໃຈ. ຈາກຄຳສອນເຣື່ອງເມັດຜັກກາດທີ່ເຕີບໂຕເປັນຕົ້ນໄມ້ໃຫຍ່, ຖ້າພວກເຮົາລໍຄອຍ, ອານາຈັກຈະເຕີບໃຫຍ່ໄປທົ່ວໂລກ. ຈາກຄຳສອນໃນຄຳອຸປມາເຣື່ອງເຊື້ອແປ້ງທີ່ເຮັດໃຫ້ແປ້ງທັງໝົດຟູຂຶ້ນ, ຖ້າພວກເຮົາລໍຄອຍ, ໄພ່ພົນຂອງພຣະເຈົ້າຈະຈເຣີນເຕີບໃຫຍ່ແລະປ່ຽນແປງໂລກທັງໝົດໄດ້.

ພຣະເຢຊູຊົງສະລະພຣະຊົນເພື່ອຊື້ເອົາຊັບສົມບັດອັນມີຣັນໄວ້ເພື່ອພວກເຮົາ. ພວກເຮົາຈະເຮັດວຽກເພື່ອປະກາດພຣະທັມດ້ວຍຄວາມອົດທົນບໍ່? ຫລືພວກເຮົາຈະປ່ອຍໃຫ້ຄວາມອິດເມື່ອຍມາເປັນອຸປສັກໃນການທີ່ຈະເຮັດພັນທະກິດທີ່ພຣະອົງໄດ້ຊົງເອີ້ນພວກເຮົາໃຫ້ເຮັດ?

ຄຳຖາມ:

1. ອີງຕາມຄຳອຸປມາເຣື່ອງເຂົ້ານົກ, ຄຣິສຕຽນຄວນຣະວັງໃນການພິພາກສາຄົນອື່ນບໍ່?

2. ເມື່ອຫລຽວເບິ່ງເມັດຜັກກາດ, ພວກເຮົາໄດ້ເຫັນຄວາມແຕກຕ່າງແນວໃດແດ່ຣະຫວ່າງເມັດຜັກນ້ອຍໆ ແລະຕົ້ນໄມ້ທີ່ມີຄວາມສູງເຖິງ 6 ຟຸດ?

3. ປຽບທຽບລະຫວ່າງເຊື້ອແປ້ງ ແລະຄຣິສຕະຈັກ. ຄຣິສຕະຈັກຂອງທ່ານໄດ້ປ່ຽນແປງສັງຄົມດ້ວຍພຣະຄຣິດບໍ່?

4. ມີຫຍັງບໍ່ ທີ່ທ່ານຈະຍອມຂາຍທຸກໆສິ່ງທີ່ມີຢູ່ເພື່ອຈະຊື້ເອົາມາເປັນເຈົ້າຂອງ?

5. ທ່ານຕ້ອງການມີຄວາມອົດທົນໃນເຣື່ອງໃດແດ່ໃນຊີວິດ?

6. ທ່ານຈະເປັນຕົວຢ່າງເຣື່ອງຄວາມອົດທົນໃຫ້ກັບເດັກອະນຸບານ, ເດັກນ້ອຍ, ເຍົາວະຊົນ, ແລະຊາວໜຸ່ມໄດ້ຢ່າງໃດ?

ສຈ. ສີດາ ຄາມ

## ບົດຮຽນບົດທີ 10
## ຕົວທ່ານແລະ "ພວກເດັກນ້ອຍ"

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 18:1-14
ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ: ມັດທາຍ 18:1-14
ຈຸດສຳຄັນຂອງບົດຮຽນນີ້: ຖ່ອມຕົວເພື່ອຜູ້ອື່ນ, ໂດຍບໍ່ເລືອກຊັ້ນວັນນະ, ຄືອຸປນິສັຍພາຍໃນກຸ່ມຄຣິສຕຽນ.

ຄຳຖາມເພື່ອການສຳຣວດ: ໃຜຄືບຸກຄົນສຳຄັນໃນຄຣິສຕະຈັກຂອງທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຫາຊ່ອງທາງແກ້ໄຂການເນັ້ນເຣື່ອງຖານະຊຶ່ງຈະສ້າງບັນຫາໃນຄຣິສຕະຈັກ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ສົ່ງເສີມຄອບຄົວໃຫ້ເຂັ້ມແຂງ.
- ຈັດຕຽມຄົນທັງຫລາຍໃຫ້ເປັນຜູ້ນຳທີ່ມີຄຸນລັກສນະຂອງຜູ້ຮັບໃຊ້.

### ຄຳນຳ

ພຣະເຈົ້າຊົງນຳຄົນຫລາຍປະເພດມາໄວ້ໃນຄຣິສຕະຈັກ. ບົດຮຽນນີ້ຈະຊ່ວຍພວກເຮົາໃຫ້ຮູ້ວິທີທີ່ຈະນັບຖືກັນແລະກັນຢ່າງສເມີພາບດ້ວຍຄວາມຮັກຂອງພຣະເຈົ້າ.

ໃຜເປັນໃຫຍ່? (1:1)

ໃນມັດທາຍ 18, ພຣະເຢຊູກຳລັງສັ່ງສອນພວກສາວົກຂອງພຣະອົງ. ການສັ່ງສອນໃນຕອນນີ້ແມ່ນເລີ້ມມາ ຈາກຄຳຖາມຂອງພວກສາວົກ. ຕອນຢູ່ໃນເມືອງກາຍຊາເຣັຽຟີລິບປອຍ (ມທ 16:13-20), ພຣະເຢຊູເຄີຍຖາມພວກສາວົກວ່າ, "ຄົນທັງຫລາຍເວົ້າກັນວ່າບຸດມະນຸດແມ່ນຜູ້ໃດ? ສາວົກຫລາຍຄົນກໍໄດ້ໃຫ້ຄຳຕອບ. ແລ້ວພຣະເຢຊູຍ້ອນຖາມພວກເຂົາວ່າ, "ແລ້ວຝ່າຍພວກທ່ານເດ ວ່າເຮົາແມ່ນໃຜ" (16:15). ໃນເທື່ອນີ້ແມ່ນເປໂຕເປັນຄົນຍອມຮັບວ່າພຣະເຢຊູຄືພຣະຄຣິດ. ພຣະເຢຊູໄດ້ຊົງບອກເປໂຕວ່າເຂົາເວົ້າຖືກແລ້ວ; ພຣະອົງຊົງສັ່ງພວກສາວົກບໍ່ໃຫ້ບອກເຣື່ອງນີ້ກັບຄົນອື່ນໆ. ຄຳຖາມສຳລັບມື້ນີ້ແມ່ນ, "ໃຜເປັນໃຫຍ່ໃນຣາຊອານາຈັກສວັນ" (18:1). ນີ້ເປັນຄຳຖາມທີ່ດີ. ພຣະເຢຊູເຄີຍເວົ້າໃຫ້ສາວົກຟັງເຣື່ອງຣາຊອານາຈັກ ຊຶ່ງປາກົດວ່າທຸກຢ່າງປີ້ນກັນກັບເຣື່ອງໃນໂລກນີ້. ຕົວຢ່າງ: ໃນມັດທາຍ 16:21-26, "ຖ້າຜູ້ໃດຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽ ແລ້ວຮັບແບກໄມ້ກາງແຂນຂອງຕົນ ແລ້ວຕິດຕາມເຮົາມາ.

ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສັຽຊີວິດ ແຕ່ຜູ້ໃດຈະເສັຽຊີວິດເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະໄດ້ຊີວິດ." ໃນຕອນນີ້ ພວກເຮົາຮູ້ວ່າພວກສາວົກຄົງຈະມີຄວາມສັບສົນເຕັມທີ ຄວາມຈິງແລ້ວ, ພວກເຂົາເຈົ້າຢາກຈະຮູ້ລາຍລະອຽດວ່າ ແຕ່ລະຄົນຈະເຮັດແນວໃດເພື່ອຈະໄດ້ເປັນໃຫຽ່ໃນສວັນ? ພວກເຂົາຢາກຮູ້ວ່າທຸກຢ່າງເປັນແນວໃດຢູ່ໃນສວັນ? ພຣະເຢຊູເຄີຍໃຫ້ຄຳຕອບເຣື່ອງຄວາມຍິ່ງໃຫຽ່ໃນຕອນພຣະອົງຊົງເທສນາຢູ່ຈ້າຍພ(ມທ 5--7). ພວກສາວົກຄົງຈະພາກັນນັ່ງຢູ່ແຖວໜ້າ, ແຕ່ພວກເຂົາບໍ່ໄດ້ເຂົ້າໃຈໃນເຣື່ອງນີ້ເລີຍ. ແທ່ນທີ່ຈະເວົ້າເຣື່ອງເກົ່າໃຫ້ຟັງອີກ, ພຣະເຢຊູຊົງຕ້ອງການທີ່ຈະສະແດງໃຫ້ພວກເຂົາໄດ້ເຫັນ.

<u>ຮຽນຮູ້ຈາກເດັກນ້ອຍ</u> (18:2)

ພຣະເຢຊູຊົງເອີ້ນເດັກນ້ອຍຄົນນຶ່ງໃຫ້ມາຫາພຣະອົງ. ພຣະອົງຊົງນຳເດັກນ້ອຍຄົນນັ້ນໃຫ້ມາຢູ່ຖ້າມກາງພວກເຂົາ (18:2), ແລ້ວພຣະອົງຊົງກ່າວວ່າ, "ຖ້າພວກທ່ານບໍ່ກັບໃຈ ແລະກາຍເປັນເໝືອນເດັກນ້ອຍ ທ່ານຈະເຂົ້າຣາຊແຜ່ນດິນສວັນບໍ່ໄດ້ຈັກເທື່ອ" (18:3). ໃນຕອນນີ້, ພວກສາວົກອາດຈະຄິດໃນໃຈວ່າ: <u>ເດັກນ້ອຍຈະເປັນໃຫຽ່ໃນສວັນໄດ້ຢ່າງໃດ? ເດັກນ້ອຍຍັງອ່ອນແຮງຢູ່. ເດັກນ້ອຍຍັງບໍ່ຮູ້ຫລາຍພໍ. ພວກເຂົາບໍ່ໄດ້ໄປໂຮງຮຽນ. ພວກເຂົາເປັນຜູ້ຕ່ຳຕ້ອຍໃນສັງຄົມ. ພວກເຂົາເຮັດວຽກງານຍັງບໍ່ໄດ້. ພວກເຂົາມີແຕ່ຮ້ອງໃຫ້ວຸ້ນວາຍ...</u>

ໃນທີ່ສຸດ ພວກສາວົກກໍເລີ້ມເຂົ້າໃຈວ່າ ຣາຊແຜ່ນດິນສວັນບໍ່ໄດ້ຖືກສ້າງດ້ວຍມືຂອງມະນຸດ. ພວກເຂົາເລີ້ມເຂົ້າໃຈວ່າເປັນຫຍັງຜູ້ນຳຂອງພວກເຂົາຈຶ່ງບອກໃຫ້ພວກຕົນຈຶ່ງເປັນເໝືອນ "ເດັກນ້ອຍ" (18:3). ໃນພາກຕໍ່ໄປພວກເຮົາຈະໄດ້ເຫັນຄຳຕອບຂອງພຣະເຢຊູຄິດກ່ຽວກັບຄວາມຄິດຕ່າງໆຂອງພວກສາວົກ.

<u>ການເປັນໃຫຍ່ທີ່ແທ້</u> (18:3-5)

ຄວາມຍິ່ງໃຫຽ່ທີ່ແທ້ບໍ່ໄດ້ຢູ່ທີ່ການຖືກຮັບຮູ້ຈາກຄົນທັງຫລາຍ, ການມີກຳລັງແລະຮູບຮ່າງໃຫຍ່, ການເວົ້າເກັ່ງ, ຫລືການສາມາດເອົາຊະນະຄົນອື່ນ. ຊີວິດພວກເດັກນ້ອຍມີບົດຮຽນເຣື່ອງການເປັນໃຫຽ່ທີ່ແທ້ຈິງ ເພາະເດັກນ້ອຍມີຄວາມສາມາດປ່ຽນແປງໄດ້ງ່າຍ, ມີການຍອມຮັບຄຳສອນ, ມີການຍອມເພິ່ງຜູ້ອື່ນ, ມີການພ້ອມທີ່ຈະຮັບ, ແລະມີການຕຽມພ້ອມທີ່ຈະຮັບໃຊ້ຄົນອື່ນໆ.

ພຣະເຢຊູຊົງເຊື່ອວ່າຖ້າພວກສາວົກຂອງພຣະອົງກາຍເປັນເໝືອນດັ່ງເດັກນ້ອຍ (18:3), ພວກເຂົາຈະສາມາດເປັນຜູ້ນຳແບບຮັບໃຊ້. ເວລາພວກເຂົາຮູ້ຄວາມບົກພ່ອງຂອງຕົນເອງ, ເຂົາຈະສາມາດ "ຖ່ອມຕົວລົງເໝືອນເດັກນ້ອຍ" (18:4). ແມ່ນຫຍັງຄືສິ່ງທີ່ຈະພິສູດວ່າພວກສາວົກໄດ້ປ່ຽນແປງແທ້? ຖ້າຜູ້ໃດຈະຮັບເດັກນ້ອຍ, ຜູ້ນັ້ນກໍໄດ້ຮັບພຣະເຢຊູ (18: 5). ຢ່າລືມວ່າພຣະເຢຊູຊົງຍອມເປັນເດັກນ້ອຍເພື່ອພວກເຮົາແລະເພື່ອໂລກທັງໝົດ. ພຣະອົງຊົງຍອມເປັນຜູ້ອ່ອນແອ ແລະເປັນຜູ້ບໍ່ມີຊື່ສຽງ. ພຣະເຢຊູໄດ້ຊົງເຮັດທຸກຢ່າງທີ່ພຣະອົງໄດ້ຊົງບອກໃຫ້ພວກສາວົກເຮັດໃນຕອນນີ້.

<u>ດູແລ "ພວກເດັກນ້ອຍ"</u> (18:6-9)

ການສົນທະນາປ່ຽນຈາກການເປັນເດັກນ້ອຍຝ່າຍເນື້ອໜັງມາເຖິງເຣື່ອງການເປັນເດັກນ້ອຍໃນຄວາມເຊື່ອ. ພວກຄຣິສຕຽນຈະລ້ຽງດູຜູ້ທີ່ມາເຊື່ອໃໝ່ແນວໃດ? ພຣະເຢຊູຊົງເອີ້ນຄົນພວກນີ້ວ່າ "ເດັກນ້ອຍ" (18:6), ເພາະພວກເຂົາຍັງອ່ອນໃນຄວາມເຊື່ອ ແລະອາດຈະຖືກຫລອກໄດ້ງ່າຍ. ເໝືອນຕົ້ນໄມ້ທີ່ເກີດໃໝ່, ພວກເຂົາຕ້ອງການການລ້ຽງດູແບບໃກ້ຊິດ. ພຣະເຢຊູຊົງເຕືອນວ່າເດັກນ້ອຍພວກນີ້ມີ "ໂອກາດທີ່ຈະຫລົງຜິດ" ແລະຊົງເຕືອນພວກຄຣິສຕຽນທີ່ເຕີບໃຫຍ່ແລ້ວບໍ່ໃຫ້ພາກັນເປັນເຫດໃຫ້ເດັກນ້ອຍເກີດການຫລົງຜິດ. ພຣະເຢຊູຊົງເຕືອນຜູ້ທີ່ເປັນຕົ້ນເຫດໃຫ້ຫລົງຜິດວ່າ "ວິບັດ

ແກ່ຜູ້ທີ່ກໍ່ເຫດໃຫ້ເກີດການຫລົງຜິດ" (18:7). ຜູ້ທີ່ເຕີບໃຫຍ່ແລ້ວຈະຕ້ອງພຍາຍາມດໍາເນີນຊີວິດດ້ວຍຄວາມລະມັດລະວັງເພື່ອຈະບໍ່ໄດ້ເປັນຕົ້ນເຫດໃຫ້ຜູ້ເຊື່ອໃໝ່ຫລົງຜິດ.

<u>ເມື່ອ "ພວກເດັກນ້ອຍ" ຫລົງຜິດໄປ</u> (18:10-14)

ຄຣິສຕະຈັກຄວນຈະເຮັດແນວໃດເມື່ອ "ພວກເດັກນ້ອຍ" ຫລົງຜິດໄປ? ກ່ອນອື່ນພຣະເຢຊູຊົງເຕືອນວ່າ, "ຢ່າຄິດດູໝິ່ນເດັກນ້ອຍຈັກຄົນ" (18:10). ພວກເຮົາຜູ້ທີ່ເປັນຜູ້ໃຫຍ່ແລ້ວບໍ່ຄວນນັ່ງເສີຍເມື່ອເຫັນພວກເຂົາກໍາລັງຈະຕົກ. ຢ່າໃຫ້ພວກເຮົາປະພຶດຕົນເໝືອນດັ່ງພວກຄົນທີ່ຢູ່ນອກຣາຊອານາຈັກ ເພາະພວກເຂົາມັກຈະວາງຕົວຢູ່ເໜືອທຸກຄົນທີ່ຫລົງຜິດ ແລະມັກຈະເບິ່ງຄົນອື່ນວ່າຕໍ່າຕ້ອຍສເມີ.

ພຣະເຢຊູຊົງບອກພວກສາວົກວ່າ "ພວກເດັກນ້ອຍ" ມີ "ເທວະດາ" ຄອຍເຝົ້າພວກເຂົາຢູ່ສເມີ (18:10). ຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າຜູ້ຊົງຢູ່ທຸກຫົນທຸກແຫ່ງບໍ່ໄດ້ຊົງປະຕາຂອງພຣະອົງອອກຈາກໄພ່ພົນຂອງພຣະອົງຜູ້ທີ່ກໍາລັງດີ້ນຣົນຢູ່. ຖ້າພຣະເຈົ້າເຫັນວ່າ "ພວກເດັກນ້ອຍ" ມີຄວາມສໍາຄັນ, ພວກເຮົາຄວນຈະເບິ່ງຂ້າມພວກເຂົາບໍ່? ເພື່ອຄວາມເຂົ້າໃຈຂອງພວກເຮົາ, ພຣະເຢຊູໄດ້ຊົງເລົ່າເຣື່ອງຜູ້ລ້ຽງແກະທີ່ພວກເຮົາຄຸ້ນເຄີຍດີ. ພຣະອົງຊົງກ່າວວ່າ, "ຖ້າຜູ້ນຶ່ງມີແກະຢູ່ຮ້ອຍໂຕ ແລະໂຕນຶ່ງຫລົງເສັຽໄປຈາກຝູງ ຜູ້ນັ້ນຈະບໍ່ປະແກະເກົ້າສິບໄວ້ຢູ່ພູ ແລ້ວໄປຊອກຫາໂຕທີ່ເສັຽໄປນັ້ນຫລື?" (18:12). ພຣະເຢຊູຊົງບອກພວກສາວົກແລະພວກເຮົາໃນສມັຍນີ້ວ່າພວກເຮົາຈະຕ້ອງປະທຸກຢ່າງເພື່ອໄປຊອກຫາລູກແກະຂອງພຣະເຈົ້າທີ່ຫລົງທາງໄປ. ພຣະເຈົ້າບໍ່ໄດ້ຊົງມີພຣະປະສົງທີ່ຈະ "ໃຫ້ຜູ້ນ້ອຍເຫລົ່ານີ້ຈິບຫາຍແມ່ນແຕ່ຄົນດຽວ" (18:14). ລູກແກະມີຄວາມປອດພັຍດີເມື່ອພວກເຂົາຢູ່ໃນພຣະເຈົ້າ.

<u>ຄໍາຖາມ:</u>

1. ທ່ານຮູ້ສຶກວ່າບາງຄົນໃນຄຣິສຕະຈັກໄດ້ຮັບກຽດຈົນເກີນໄປບໍ່? ທ່ານຄິດວ່າມີວິທີໃດແດ່ທີ່ຈະບໍ່ໃຫ້ສິ່ງນີ້ເກີດຂຶ້ນໃນຄຣິສຕະຈັກຂອງທ່ານ? ຫລືໃນຊີວິດຂອງທ່ານ?
2. ທ່ານຮູ້ວິທີໃດແດ່ທີ່ຈະສອນໃຫ້ "ພວກເດັກນ້ອຍ" ໄດ້ຕຽມພ້ອມເຣື່ອງຝ່າຍຈິດວິນຍານ?
3. ລັກສະນະຂອງຜູ້ນໍາແບບຮັບໃຊ້ມີແນວໃດແດ່?
4. ທ່ານມີຄວາມຮັບຜິດຊອບແນວໃດແດ່ກັບຜູ້ທີ່ຍັງອ່ອນໃນຄວາມເຊື່ອ? ແມ່ນຫຍັງແດ່? ທ່ານຮູ້ຜູ້ໃດແດ່ທີ່ໄດ້ເປັນຄຣິສຕຽນມາແລ້ວນ້ອຍກວ່ານຶ່ງປີ? ມີຫຍັງແດ່ທີ່ທ່ານຈະຊ່ວຍລາວໄດ້?
5. ທ່ານເຄີຍເຮັດຫຍັງບໍ່ ທີ່ເຮັດໃຫ້ຄຣິສຕຽນໃໝ່ເກີດສະດຸດ? ທ່ານຈະແກ້ໄຂແນວໃດ?

ສຈ. ສິດນີ ຄານ

# ບົດຮຽນບົດທີ 11
# ການປະຕິບັດກັບຜູ້ເຮັດຜິດ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ມັດທາຍ 18:15-35
ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້: ມັດທາຍ 18:15-35
ຈຸດສໍາຄັນຂອງບົດຮຽນນີ້: ເພື່ອສອນໃຫ້ເຂົ້າໃຈວ່າການປະຕິບັດກັບຜູ້ເຮັດຜິດບາງຄັ້ງອາດຈະໃຊ້ກົດພຣະຄັມພີ ໃນການກ່າວເຕືອນຕາມພຣະເມດຕາຈາກເບື້ອງເທິງ
ຄໍາຖາມເພື່ອການສໍາຣວດ: ເຮົາຈະເຮັດແນວໃດເມື່ອເຫັນຄຣິສຕຽນກັດແຂ້ວຕໍ່ສູ້ກັນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າຄວາມຮັກແພງກັນໃນໂບດເປັນການສະແດງອອກການເປັນຄຣິສຕຽນທີ່ແທ້ຈິງ.

ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ຄົນໃນຄຣິສຕະຈັກ (ໂບດ) ເປັນຄອບຄົວຂອງພຣະເຈົ້າໃນໂລກນີ້, ດັ່ງນັ້ນໃນບົດຮຽນນີ້ຈະຊ່ອຍທ່ານໃຫ້ເປັນຄອບຄົວທີ່ເຂັ້ມແຂງຫາກທ່ານໃຊ້ພຣະທັມພຣະເຈົ້າເປັນເຄື່ອງວັດແທກຄວາມຍຸຕິທັມໃນການດໍາຣົງຊີວິດຢ່າງຜູ້ເຊື່ອ. ພຣະເຢຊູໄດ້ສອນສາວົກຂອງພຣະອົງແລະສອນພວກເຮົາເຊັ່ນດຽວກັນ ຄືເຮົາທັງຫລາຍຕ້ອງຮຽນຮູ້ຈັກກັນ, ຍອມຮັບຄວາມຄິດຈິດໃຈທີ່ແຕກຕ່າງກັນຈຶ່ງຈະຢູ່ນໍາກັນໄດ້. ຈິງຢູ່ພຣະຄັມພີສອນເຮົາໃຫ້ເປັນນໍ້າໜຶ່ງໃຈດຽວກັນ ແຕ່ການເປັນນໍ້າໜຶ່ງໃຈດຽວນັ້ນບໍ່ສາມາດເປັນໄດ້ຊົ່ວພິບຕາ, ດັ່ງນັ້ນຄຣິສຕຽນເຮົາຄວນຍອມຮັບຄວາມແຕກຕ່າງກັນ ເຊັ່ນວ່າເພິ່ນຫາກເປັນຄົນແນວນັ້ນຢ່າຊາເພິ່ນ, ຍອມຜ່ອນສັ້ນຜ່ອນຍາວໃຫ້ເປັນເໝືອນຄອບຄົວໃນພຣະເຈົ້າແລ້ວໂບດເຮົາຈຶ່ງຈະເຂັ້ມແຂງດີຫາກເຮົາຫາກປະຕິບັດຕໍ່ກັນຢ່າງນັ້ນຄວາມເປັນນໍ້າໜຶ່ງໃຈດຽວກັນກໍຈະມີມາພາຍຫລັງ.

ວິທີການໂອ້ລົມ 18:15-17

ພຣະເຢຊູເລີ້ມຕົ້ນດ້ວຍຄໍາວ່າ "ຖ້າ" ພີ່ນ້ອງຂອງທ່ານເຮັດຜິດບາບ (ຜິດໃຈທ່ານ)" ທັງນີ້ກໍດ້ວຍວ່າໃນໂບດມີຄົນທຸກປະເພດຕລອດເຖິງຊົນຊັ້ນປັນຍາຊົນ ດ້ວຍເຫດນີ້ການບໍ່ຖືກໃຈຊຶ່ງກັນແລະກັນຍ່ອມຈະເກີດຂຶ້ນສເມີເປັນຂອງທັມດາຝ່າຍໂລກ, ສໍາລັບຄຣິສຕຽນແລ້ວທຸກຄົນເປັນລູກຍິງລູກຊາຍຂອງພຣະເຈົ້າ ດັ່ງນັ້ນພຣະເຢຊູຈຶ່ງສອນວ່າ "ຖ້າພີ່ນ້ອງພີ່

ນ້ອງຂອງທ່ານເຮັດຜິດບາບ (ຕໍ່ທ່ານ) ຈົ່ງໄປແຈ້ງຄວາມຜິດນັ້ນແກ່ເພິ່ນສອງຕໍ່ສອງເທົ່ານັ້ນ ຖ້າເພິ່ນຍອມຟັງທ່ານກໍໄດ້ພີ່ນ້ອງຄືນມາ" (ຂໍ້ 15). ພຣະເຢຊູສອນໃຫ້ໄປໂອ້ລົມກັນໃຫ້ເຂົ້າໃຈກັນດ້ວຍວ່າຄົນໃນຄອບຄົວແຫ່ງຄວາມເຊື່ອຈໍາ

ຕ້ອງປອງດອງກັນ, "ຈົ່ງໄປແຈ້ງຄວາມຜິດນັ້ນແກ່ເພິ່ນສອງຕໍ່ສອງເທົ່ານັ້ນ" ເປັນວິທີທີ່ດີທີ່ສຸດດ້ວຍວ່າເຣື່ອງເລັກ ນ້ອຍແຖມຍັງເປັນເຣື່ອງສ່ວນຕົວສົມຄວນຈະເກັບໄວ້ສ່ວນຕົວ ດ້ວຍວ່າເຣື່ອງນີ້ບໍ່ສົມຄວນໃຫ້ຜູ້ອື່ນຮູ້. "ຖ້າເພິ່ນຍອມ ຟັງ ທ່ານກໍໄດ້ພີ່ນ້ອງຄືນມາ" ໝາຍຄວາມວ່າທໍາຄວາມເຂົ້າໃຈກັນໄດ້ຄວາມຂັດເຄືອງໃຈກໍຈະບໍ່ມີຕໍ່ໄປ "ແຕ່ຖ້າເພິ່ນ ບໍ່ຍອມຟັງທ່ານ ຈົ່ງເອົາຄົນນຶ່ງຫລືສອງຄົນໄປນໍາໃຫ້ເປັນພຍານ" (ຂໍ້ 16). ໝາຍຄວາມ ວ່າຫາກຕົກລົງກັນບໍ່ໄດ້ຫລື ເວົ້າບໍ່ເຂົ້າໃຈກັນໃຫ້ເຊີນເອົາຜູ້ນຶ່ງຫລືສອງຄົນໄປນໍາເພື່ອໃຫ້ເພິ່ນຟັງເຫດຟັງຜົນທັງສອງຝ່າຍ ສ່ວນຜູ້ທີ່ຈະໄປນໍານັ້ນ ຄວນເປັນຄົນທີ່ໜ້ານັບຖືສາມາດສັ່ງສອນຕາມຫລັກຂອງພຣະເຈົ້າໄດ້ ແລະຕ້ອງເປັນຄົນທີ່ບໍ່ພ້ອມຝ່າຍໃດຝ່າຍນຶ່ງອີກ.

ເຖິງຢ່າງໃດກໍດີເຮົາຄວນຄໍານຶງເບິ່ງຕົວເຮົາເອງກ່ອນໆຈະໄປຕໍານິຕິຕຽນຄົນອື່ນ, ດ້ວຍວ່າຄົນສ່ວນຫລາຍຈະເຫັນ ຄວາມຜິດຄົນອື່ນ. ພຣະເຢຊູຊົງກ່າວວ່າ "ເປັນຫຍັງທ່ານຈຶ່ງຫລຽວເຫັນຂີ້ເຫຍື້ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງ ທ່ອນທີ່ຢູ່ໃນຕາຂອງຕົນທ່ານບໍ່ຮູ້ສຶກ" (ມັດທາຍ 7:4). ດ້ວຍເຫດນີ້ເຣື່ອງທີ່ເກີດຂຶ້ນບາງທີ່ເປັນຄວາມຜິດຂອງເຮົາກໍ ເປັນໄດ້. ສົມມຸດວ່າ ທ່ານຮູ້ວ່າເປັນຄວາມຜິດຂອງທ່ານແທ້ ທ່ານຈະໄປໂອ້ລົມກັບເພິ່ນແນວໃດ? ຈະເລີ້ມຕົ້ນແນວໃດ? ຈະໄປລົມກັນຢູ່ໃສ? ເອົາເວລາໃດດີ? ເປັນຄໍາຖາມທີ່ທ່ານຈະຕ້ອງຄຶດແລະວາງແຜນກ່ອນຈະໄປ. ແນ່ນອນຄຣິສຕຽນ ຈໍາຕ້ອງອ້ອນວອນກ່ອນໄປ ແຕ່ບໍ່ແມ່ນອ້ອນວອນເພື່ອເປັນພິທີ ແຕ່ແມ່ນການອ້ອນວອນຂໍການຊົງນໍາ. ສ່ວນເວລານັ້ນ ແລະສຖານທີ່ນັ້ນຄວນຫາບ່ອນເໝາະສົມທີ່ບໍ່ມີການຣົບກວນ. ສໍາລັບການເລີ້ມຕົ້ນນັ້ນພຣະເຢຊູໄດ້ສອນໃນພຣະທັມລູ ກາເຣື່ອງບຸດຫລົງຫາຍກັບຄືນຫາພໍ່, ລາວເວົ້າກັບພໍ່ວ່າ "ພໍ່ເອີຍ, ລູກໄດ້ເຮັດຜິດຕໍ່ສວັນແລະຕໍ່ພໍ່ແລ້ວ" (ລູກາ 15:18ກ) ດັ່ງເຮົາຄວນເລີ້ມຕົ້ນວ່າ "ຂ້ອຍໄດ້ຜິດຕໍ່ເຈົ້າແລ້ວ ຂໍຍົກໂທດໃຫ້ຂ້ອຍດ້ວຍ" <u>ຢ່າເວົ້າວ່າ ຫາກຂ້ອຍຜິດແທ້ຂ້ອຍຂໍໂທດ ນໍາເຈົ້າເນີ"</u> ຄໍາເວົ້ານີ້ສະແດງວ່າເຮົາບໍ່ຍອມຮັບຜິດນັ້ນເອງ.

"ຖ້າເພິ່ນບໍ່ຍອມຟັງຄົນເຫລົ່ານັ້ນ ຈົ່ງແຈ້ງຄວາມຕໍ່ຄຣິສຕະຈັກ ແລະຖ້າເພິ່ນບໍ່ຍອມຟັງຄຣິສຕະຈັກອີກ ກໍໃຫ້ຖືເສັຽວ່າ ເພິ່ນເປັນເໝືອນຄົນນອກສາສນາແລະຄົນເກັບພາສີ" (ຂໍ້ 17). ໝາຍຄວາມວ່າຖ້າເພິ່ນບໍ່ຍອມຟັງສອງຄົນທີ່ໄປນໍາແລ້ວ ໃຫ້ນໍາເອົາເຣື່ອງທີ່ໄປນັ້ນມາຍັງພວກເຖົ້າແກ່ແລະອາຈານ ເພື່ອເພິ່ນຈະກັບໄປໂອ້ລົມອີກເປັນຄັ້ງທີ່ສາມ. ຫາກເພິ່ນບໍ່ ຍອມຖ່ອມຕົວຟັງພວກເຖົ້າແກ່ແລະອາຈານແລ້ວພຣະເຢຊູສັ່ງວ່າ "ກໍໃຫ້ຖືເສັຽວ່າ ເພິ່ນເປັນເໝືອນຄົນນອກສາສນາ ແລະຄົນເກັບພາສີ" (ຂໍ້ 17). ດ້ວຍວ່າຄົນນອກສາສນາແລະຄົນເກັບພາສີບໍ່ຟັງບັນດາເຖົ້າແກ່ແລະອາຈານສັນໃດຄົນທີ່ ເປັນຄຣິສຕຽນແລ້ວຍັງບໍ່ຍອມຟັງເຖົ້າແກ່ແລະອາຈານ ເພິ່ນກໍບໍ່ມີຫຍັງແຕກຕ່າງກັບຄົນນອກສາສນາແລະຄົນເກັບພາ ສີແຕ່ຢ່າງໃດ. ດ້ວຍເຫດນີ້ຜູ້ເຊື່ອສົມຄວນຖ່ອມຕົວຍອມຟັງພວກເຖົ້າແກ່ແລະອາຈານຂອງຕົນ. ການໂອ້ລົມກັນ ສອງຕໍ່ສອງເປັນຄໍາແນະນໍາຂອງພຣະເຢຊູເພື່ອບໍ່ໃຫ້ເຣື່ອງສ່ວນຕົວດັງກ້ອງໄປທົ່ວໂບດ ແຕ່ເມື່ອທັງສອງລົມກັນບໍ່ໄດ້ ແຖມຍັງເອົາຄົນໄປນໍາກໍຍັງລົມກັນບໍ່ໄດ້ ເຣື່ອງມັນຈະຕ້ອງບານປາຍໄປເຖິງໂບດ ເມື່ອເຖິງໂບດຍັງແກ້ໄຂບໍ່ໄດ້ເພາະ ເພິ່ນບໍ່ຍອມຖ່ອມຕົວຟັງບັນດາເຖົ້າແກ່ແລະອາຈານ ເຣື່ອງເລັກນ້ອຍສ່ວນຕົວກໍກາຍເປັນເຣື່ອງໃຫຍ່ທີ່ປະກາດໃຫ້ຄົນຮູ້.

<u>ໃນພຣະນາມພຣະເຈົ້າ</u> (18:18-20)

ໃນຂໍ້ 18-20 ເບິ່ງຄ້າຍກັບວ່າປ່ຽນໄປອີກເຣື່ອງນຶ່ງເຮັດໃຫ້ຜູ້ອ່ານເຂົ້າໃຈຍາກ, ເພື່ອຄວາມເຂົ້າໃຈ ເຮົາຈໍາເປັນຕ້ອງ ຫັນກັບຄືນໄປຕອນຕົ້ນທີ່ເຮົາເວົ້າວ່າ ຄົນໃນຄຣິສຕະຈັກ (ໂບດ) ເປັນຄອບຄົວຂອງພຣະເຈົ້າໃນໂລກນີ້. ຜູ້ທີ່ເວົ້າພຣະ ທັມກໍແມ່ນພຣະທັມພຣະເຈົ້າ, ແລະເວົ້າໃນນາມພຣະເຈົ້າ, ຜູ້ທີ່ໄປອົບຮົມສັ່ງສອນທີ່ສອງຄົນບໍ່ຖືກກັນເພິ່ນກໍໄປໃນ ນາມພຣະເຈົ້າ ເມື່ອເພິ່ນບໍ່ຍອມຟັງຜູ້ທີ່ເວົ້າໃນນາມພຣະເຈົ້າ ເພິ່ນກໍບໍ່ມີຜູ້ໃດຈະຟັງອີກ ດ້ວຍເຫດນີ້ແຫລະພຣະເຢ ຊູຈຶ່ງກ່າວວ່າ "ສິ່ງໃດໆ ທີ່ພວກທ່ານຜູກມັດໄວ້ໃນໂລກ ກໍຈະຊົງຜູກມັດໄວ້ແລ້ວໃນສວັນ ແລະສິ່ງໃດໆທີ່ພວກ ທ່ານຈະແກ້ໃນໂລກ ກໍຈະຊົງແກ້ໃຫ້ ຫລຸດເສັຽແລ້ວໃນສັວນເໝືອນກັນ" (ຂໍ້ 18). ຄຣິສຕະຈັກ (ໂບດ) ເປັນຄ້າຍຄື ບ່ອນຝຶກຫັດປະຊາຊົນຂອງເມືອງສວັນ, ມີສິ່ງໃດຖືກຫລືຜິດ ພວກເຖົ້າແກ່ແລະອາຈານມີໜ້າທີ່ແກ້ໄຂດັດແປງເສັຽ

ກ່ອນໆວັນນັ້ນມາເຖິງ.  ດັ່ງນັ້ນຄວາມຜິດພາດຈະນຳພາໃຫ້ເກີດເປັນຄວາມຜິດບາບຫາກເຮົາບໍ່ຍອມຍົກໂທດໃຫ້ກັນແລະກັນ.  "ແຕ່ຖ້າທ່ານບໍ່ ຍອມຍົກຄວາມຜິດຂອງເພື່ອນມະນຸດ  ພຣະບິດາຂອງທ່ານກໍຈະບໍ່ຊົງໂຜດຍົກຄວາມຜິດຂອງທ່ານເໝືອນກັນ" (ມທ 6:15).  ເພື່ອບໍ່ໃຫ້ທັງສອງມີໂທດຈຳຈອງກັນຢູ່ ໂປໂລໄດ້ແນະນຳວ່າ "ສະນັ້ນເຈົ້າທັງຫລາຍຄວນຈະຍົກໂທດໃຫ້ຜູ້ນັ້ນ  ແລະໃຫ້ເພິ່ນໄດ້ຮັບຄວາມບັນເທົາທຸກກໍດີກວ່າ  ຢ້ານວ່າຄົນນັ້ນຈະຈົມລົງໃນຄວາມທຸກໂສກ ອັນເຫລືອລົ້ນ" (2ກຣທ 2:7).

ຫາກເຮົາມີໃຈປອງດອງກັນພຣະເຢຊູຊົງກ່າວວ່າ "ເຮົາບອກແກ່ພວກທ່ານທັງຫລາຍອີກວ່າ ຖ້າໃນພວກທ່ານທີ່ຢູ່ໃນໂລກສອງຄົນຈະຮ່ວມໃຈກັນຂໍສິ່ງນຶ່ງສິ່ງໃດ ພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນກໍຈະຊົງກະທຳໃຫ້. ດ້ວຍວ່າມີສອງຫລືສາມຄົນປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດ ເຮົາກໍຈະຢູ່ຖ້າມກາງເຂົາບ່ອນນັ້ນແຫລະ" (ຂໍ້ 19-20). ເຮົາເຫັນສອງປະເດັນໃນຄຳເວົ້າຂອງພຣະເຢຊູໃນຕອນນີ້ຄື: 1. ຫາກເຮົາມີໃຈປອງດອງກັນແທ້ ເມື່ອເຮົາອ້ອນວອນທູນຂໍສິ່ງໃດສິ່ງນຶ່ງຈາກພຣະບິດາ ເພິ່ນກໍຈະຊົງຕອບຄຳອ້ອນວອນນັ້ນ.  2. ຫາກມີສອງຫລືສາມຄົນຊຸມນຸມ, ນະມັສການ, ປະຊຸມໃນພຣະນາມແຫ່ງພຣະເຢຊູຄຣິດຢ່າງແທ້ຈິງແລ້ວ  ພຣະວິນຍານບໍຣິສຸດຂອງພຣະເຈົ້າກໍຈະສະຖິດຢູ່ນຳດ້ວຍ, ເພິ່ນ ຍັງບອກວ່າ "ຢູ່ບ່ອນໃດ"  ແປວ່າຢູ່ໃສກໍຕາມ ຫາກປະຊຸມໃນນາມຊື່ພຣະເຢຊູຄຣິດແລ້ວ ພຣະວິນຍານບໍຣິສຸດກໍຈະຢູ່ທີ່ນັ້ນເພື່ອເປັນປະມຸກໃນການຊຸມນຸມນັ້ນ.

<u>ຫລັກສະນະຂອງການໃຫ້ອະພັຍ</u> (18:21-22)

ເປໂຕເຄືອງໃຈທີ່ຕ້ອງອະພັຍຄົນອື່ນເມື່ອເຂົາເຮັດໃຫ້ເຈັບປວດທາງດ້ານຮ່າງກາຍ ແລະທາງດ້ານຈິດໃຈຊຶ່ງເປັນສ່ວນເລິກໄປກວ່າຮ່າງກາຍ, ເປໂຕຈຳຄຳສອນຂອງພຣະເຢຊູໃນ ມັດທາຍ 6:14-15 ຈຶ່ງຖາມຂຶ້ນວ່າ "ນາຍເອີຍ, ຖ້າພີ່ນ້ອງຂອງຂ້ານ້ອຍເຮັດຜິດຕໍ່ຂ້ານ້ອຍຫລາຍເທື່ອ ຂ້ານ້ອຍຕ້ອງຍົກຜິດໃຫ້ເພິ່ນຈັກເທື່ອ ເຖິງເຈັດເທື່ອຫລື" (ຂໍ້ 21). ຄວາມໝາຍທີ່ເປໂຕຖາມນັ້ນແມ່ນ 7 ເທື່ອໃນຊີວິດທີ່ເພິ່ນເຮັດຜິດ. ພຣະເຢຊູຕອບວ່າ "ເຮົາບໍ່ໄດ້ບອກພຽງແຕ່ເຈັດເທື່ອເທົ່ານັ້ນແຕ່ເຖິງເຈັດສິບຄູນກັບເຈັດ" (ຂໍ້ 22) ພຣະອົງຫມາຍຄວາມວ່າ  ບໍ່ເປັນການດີທີ່ເຮົາຈະຈົດບັນຊີຄວາມຜິດຂອງເພິ່ນຫາກເຮົາເກັບກຳບັນຊີຈາກຄັ້ງທີນຶ່ງເປັນຕົ້ນມາກໍສະແດງວ່າເຮົາບໍ່ໄດ້ໃຫ້ອະພັຍນັ້ນແຕ່ຄັ້ງແຮກແລ້ວ. ໂປໂລສອນໃນ 1ໂກຣິນໂທວ່າ "ຄວາມຮັກບໍ່ຊອບຈົດຈຳຄວາມຜິດ"  ທຳນອງດຽວກັນການໃຫ້ອະພັຍຈະບໍ່ຮື້ຟື້ນ ເຣື່ອງເກົ່າເວົ້າກັນ. ຫາກເວົ້າຕາມຫລັກສະນະທັມດາສາມັນແລ້ວ ການໃຫ້ອະພັຍ 7 ເທື່ອແມ່ນຫລາຍແລ້ວ  ແຕ່ເຮົາທັງຫລາຍບໍ່ໄດ້ຢູ່ໃນຈຳ ນວນມະນຸດທັມດາແລ້ວ ດ້ວຍວ່າເຮົາຖືກເລືອກອອກມາຈາກໂລກທັມດາແລ້ວ ເຮົາຄວນໃຊ້ຊີວິດໃຫ້ເໝາະສົມກັບຊົງເອີ້ນນັ້ນ.

<u>ຊົງກ່າວຄຳອຸປະມາໃຫ້ຟັງ</u> (18:23-35)

ພຣະເຢຊູກ່າວຄຳອຸປມາໃຫ້ເປໂຕຟັງເພື່ອເປໂຕຈະໄດ້ເຂົ້າໃຈໃນເຣື່ອງພຣະເຈົ້າໃຫ້ອະພັຍມະນຸດ. ພຣະອົງຊົງກ່າວວ່າ "ເຫດສັນນັ້ນຣາຊອານາຈັກສວັນປຽບເໝືອນເຈົ້າກະສັດອົງນຶ່ງຊົງປະສົງຢາກຄິດບັນຊີເງິນທີ່ ພວກຂ້າໃຊ້ເປັນໜີ້ເມື່ອຊົງຕັ້ງຕົ້ນຄິດບັນຊີຢູ່ນັ້ນເຂົາພາຄົນຜູ້ນຶ່ງທີ່ເປັນຫນີ້ໜຶ່ງໝື່ນຕາລັນຄົນມາເຝົ້າ" (ຂໍ້ 23-24). ຂ້າພະເຈົ້າບໍ່ຮູ້ວ່າໝື່ນຕາລັນຄົນໃນສມັຍນັ້ນຫລາຍປານໃດ ແຕ່ພໍຈະປຽບທຽບໄດ້ໃນເຣື່ອງເງິນຕາລັນທີ່ພຣະເຢຊູຊົງກ່າວໃນ ພຣະທັມມັດທາຍ 25:15 ວ່າ "ຄົນນຶ່ງເພິ່ນໃຫ້ຫ້າຕາລັນຄົນ, ຄົນນຶ່ງສອງຕາລັນຄົນ, ແລະອີກຄົນນຶ່ງໃຫ້ຕາລັນຄົນດຽວ"  ເຣື່ອງນີ້ໄດ້ບອກຂ້າພະເຈົ້າວ່າຄົນເຮັດງານຜູ້ນຶ່ງຈະບໍ່ໄດ້ຄ່າຈ້າງນຶ່ງຕາລັນຄົນຕໍ່ວັນນຶ່ງ ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງເຂົ້າໃຈວ່າໝື່ນຕາລັນຄົນນັ້ນມັນເປັນຈຳນວນທີ່ຄົນທັມດາຫາບໍ່ໄດ້.  ສາສນາສາດຜູ້ນຶ່ງກ່າວວ່າ ເງິນຈຳນວນນີ້ຕ້ອງເຮັດງານ 60

ລ້ານມື້ຈຶ່ງຈະໄດ້ມັນມາ. ເພິ່ນຍັງກ່າວອີກວ່າ ຖ້າຍຄືຄົນ ປັດກາວາດຜູ້ນຶ່ງເປັນໜີ້ Microsoft Bill Gates ສິບລ້ານໂດລາ, ເຮົາມາລອງຄິດເບິ່ງວ່າຄົນປັດກວາດຜູ້ນຶ່ງ ມີລາຍໄດ້ຫລາຍປານໃດ? ລາວຈະເຮັດແນວໃດຈຶ່ງຈະໃຊ້ໜີ້ສິບລ້ານໂດລາໄດ້.

ເມື່ອຄົນນັ້ນບໍ່ມີເງິນໃຊ້ໜີ້ຈຶ່ງອ້ອນວອນຂໍໃຫ້ຜ່ອນຜັນເສັງທ້ອນ. "ເຈົ້າອົງນັ້ນມີພຣະທັຍເມດຕາຈຶ່ງປ່ອຍຕົວມັນໄປແລະຍົກໜີ້ໃຫ້ດ້ວຍ" (ຂໍ້ 27). ຄົນນັ້ນກໍມີຄວາມຊົມຊື່ນຍິນດີຈົນຫາຫຍັງປຽບບໍ່ໄດ້ ດ້ວຍວ່າລາວເອງຮູ້ວ່າຊາດນີ້ທັງຊາດຄົງບໍ່ມີປັນຍາໃຊ້ໜີ້ໜຶ່ງໝື່ນຕາລັນຕົນໄດ້. ໃນຂະນະທີ່ລາວກຳລັງຍ່າງອອກໄປດ້ວຍຄວາມຊົມຊື່ນຍິນດີນັ້ນມີເຫດການເກີດຂຶ້ນດັ່ງນີ້; ແຕ່ເມື່ອຂ້າໃຊ້ຜູ້ນັ້ນອອກໄປກໍພົບເພື່ອນຜູ້ນຶ່ງທີ່ເປັນຂ້າໃຊ້ດ້ວຍກັນຊຶ່ງເປັນໜີ້ຕົນນຶ່ງຮ້ອຍເດນາຣີອົນມັນຈຶ່ງຈັບເພື່ອນນັ້ນບີບຄໍວ່າ ເງິນທີ່ມຶງເປັນໜີ້ກູນັ້ນເອົາມາແທນເສັງແມ" (ຂໍ້ 28). ສາສນາທູດຜູ້ນັ້ນກ່າວອີກວ່າ ນຶ່ງຮ້ອຍເດນາຣີອົນເປັນຄ່າແຮງງານ 100 ມື້. ມາເຖິງຕອນນີ້ເຮົາລອງມາສົມທຽບຜູ້ແຮກຕິດໜີ້ນຶ່ງໝື່ນຕາລັນຕົນໄລ່ເປັນຄ່າແຮງງານ 60 ລ້ານມື້ແຕ່ເມື່ອໃຊ້ບໍ່ໄດ້ເຈົ້ານາຍກໍຍົກໜີ້ໃຫ້, ສ່ວນຜູ້ທີສອງເປັນໜີ້ຜູ້ທີນຶ່ງຮ້ອຍເດນາຣີອົນໄລ່ເປັນຄ່າແຮງງານ 100ມື້ ຜູ້ທີນຶ່ງກໍບໍ່ຍອມຍົກໃຫ້ຜູ້ທີສອງແຖມຍັງບີບຄໍບັງຄັບເອົາ ທັ້ງໆທີ່ເພື່ອນຮ້ອງຂໍລາວຢ່າງດຽວກັນກັບລາວໄດ້ວອນຂໍເຈົ້າກະສັດ.

ເມື່ອເປັນເຊັ່ນນັ້ນເຈົ້າກະສັດຈຶ່ງເອີ້ນຜູ້ເປັນໜີນຶ່ງໝື່ນຕາລັນຕົນກັບຄືນມາແລ້ວກ່າວວ່າ "ອ້າຍຂີ້ຂ້າຊົ່ວຊ້າເຮີຍ, ກູໄດ້ຍົກໜີ້ໃຫ້ມຶງທັງໝົດເພາະມຶງໄດ້ວອນຂໍນຳກູ. ມຶງຄວນຈະສົງສານເພື່ອນຂອງມຶງເໝືອນດັ່ງກູໄດ້ສົງສານມຶງບໍ່ແມ່ນຫລືແລ້ວເຈົ້າອົງນັ້ນກໍຮ້າຍ ຈຶ່ງມອບມັນໄວ້ແກ່ເຈົ້າໜ້າທີ່ໃຫ້ທໍຣະມານຈົນກວ່າຈະໃຊ້ໜີ້ໝົດ" (ຂໍ້ 34). ເຣື່ອງທີ່ພຣະເຢຊູຊົງເລົ່ານີ້ແມ່ນເພື່ອໃຫ້ເປໂຕເຂົ້າໃຈເຖິງເຣື່ອງການໃຫ້ອະພັຍ. ດ້ວຍວ່າພະຣເຈົ້າຊົງໃຫ້ອະພັຍຄວາມຜິດບາບຂອງເຮົາຈົນໝົດສິ້ນ ເຮົາເອງຄວນຈະໃຫ້ອະພັຍແກ່ເພື່ອນຂອງເຮົາຜູ້ທີ່ເຮັດຜິດຕໍ່ເຮົານ້ອຍໄປກວ່າເຮົາເຮັດຜິດຕໍ່ພຣະເຈົ້າ.

ພຣະເຈົ້າໃຫ້ອະພັຍເຮົາສັນໃດ ພຣະອົງກໍຕ້ອງການໃຫ້ເຮົາອະພັຍຊຶ່ງກັນແລະກັນສັນນັ້ນ ແຕ່ຫາກເຮົາບໍ່ຍອມໃຫ້ອະພັຍຄົນອື່ນໃຫ້ເຮົາສຶກສາຄຳອຸປະມານີ້ອີກຕື່ມ ຄືເພິ່ນຈະເອີ້ນເຮົາກັບມາແລະຈະເວົ້າຢ່າງດຽວກັນກັບຜູ້ເປັນໜີ້ນຶ່ງໝື່ນຕາລັນຕົນ ແລ້ວເວລານັ້ນເຮົາຈະບໍ່ມີທາງແກ້ໄຂ. "ຢ່າງນັ້ນແຫລະ, ພຣະບິດາຂອງເຮົາຜູ້ຊົງສະຖິດໃນສວັນ ກໍຈະເຮັດຢ່າງນັ້ນແກ່ພວກທ່ານທຸກຄົນ ຖ້າພວກທ່ານບໍ່ຍົກຄວາມຜິດໃຫ້ພີ່ນ້ອງຂອງຕົນດ້ວຍສຸດໃຈ" (ຂໍ້ 35).

<u>ຄຳຖາມ:</u>

1. ເປັນຫຍັງເຮົາຈຶ່ງຖືວ່າຄົນໃນໂບດເປັນຄອບຄົວໃນພຣະເຈົ້າ?

2. ຄວາມເປັນນ້ຳນຶ່ງໃຈດຽວກັນໝາຍຄວາມວ່າຢ່າໃດ?

3. ຫາກມີຄວາມຂັດເຄືອງໃຈກັນ ພຣະເຢຊູແນະນຳໃຫ້ເຮົາເຮັດແນວໃດໃນ ຂໍ້ 15-17

4. ເຣື່ອງບຸດຫລົງຫາຍໃນ ລູກາ 15:18 ສອນເຮົາວິທີກ່າວຄຳຂໍໂທດແນວໃດ?

5. ພຣະເຢຊູຊົງກ່າວໃນຂໍ້ ຂໍ້ 19-20 ດ້ວຍວ່າມີ ສອງຫລືສາມຄົນປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດ
   ເຮົາກໍຈະຢູ່ຖ້າມກາງເຂົາບ່ອນນັ້ນແຫລະ ທ່ານເຂົ້າໃຈຢ່າງໃດ?

6. ເປັນຫຍັງພຣະເຢຊູຈຶ່ງກ່າວຄຳອຸປະມາໃຫ້ເປໂຕຟັງເມື່ອເພິ່ນຖາມວ່າ ຖ້າພີ່ນ້ອງ ຂອງຂ້ານ້ອຍເຮັດຜິດຕໍ່ຂ້ານ້ອຍຫລາຍເທື່ອ (ຂໍ້ 21).

7. ໃນຄຳອຸປະມານັ້ນສອນຫຍັງທ່ານແດ່?

8. ທ່ານເດຍັງມີໃຜບໍ່ທີ່ທ່ານບໍ່ສາມາດໃຫ້ອະພັຍຈົນເຖິງວັນນີ້? ທ່ານຈະປ່ອຍປະໄວ້ຢ່າງນັ້ນບໍ່? ຈະບໍ່ແກ້ໄຂບໍ່?

ສຈ. ທູນພັນ ວົງສຸຣິດທ໌

# ບົດຮຽນບົດທີ່ 12
# ວິບັດແກ່ນັກທັມຟາຣີຊາຍ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມັດທາຍ 23:1-30
ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມັດທາຍ 23
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບໍ່ຢາກໃຫ້ເຮົາເປັນຄົນສອນພຣະທັມເທົ່ານັ້ນ ຄວນປະຕິບັດດ້ວຍ.
ຄຳຖາມເພື່ອການສຳຣວດ: ເຮົາຄິດວ່າເຣື່ອງນີ້ແມ່ນສອນພວກຟາຣີຊາຍເທົ່ານັ້ນບໍ່? ເຮົາເດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາສັນນະສູດຕົນເອງໃນການນັບຖືພຣະເຈົ້າຢ່າເປັນຄືຟາຣີຊາຍ.

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ເຮົາຄວນຣະມັດຣະວັງເຣື່ອງການເປັນຄຣິສຕຽນແລະການສອນພຣະທັມຂອງເຮົາ ບໍ່ໃຫ້ເປັນຄືພວກນັກທັມແລະພວກຟາຣີຊາຍ. ເຮົາອາຈເປັນຜູ້ສອນພຣະທັມພຣະເຈົ້າທີ່ເກັ່ງ ຫລືເທສນາພຣະທັມພຣະເຈົ້າໄດ້ດີ ສ່ວນຊີວິດເຮົາຍັງບໍ່ໄດ້ປະຕິບັດໃນສິ່ງທີ່ເຮົາເທສນາຫລືສອນ ເຮັດແນວນັ້ນເຮົາກໍແມ່ນພັກພວກຂອງນັກທັມແລະຟາຣີຊາຍ. ຫລືລາງເທື່ອເຮົາບໍ່ໄດ້ເທສນາ, ແລະບໍ່ໄດ້ສອນ ແຕ່ມັກວ່າໃຫ້ຜູ້ອື່ນ, ຕຳຫນິຜູ້ອື່ນແຕ່ເຮົາເອງບໍ່ເຮັດຫຍັງ ເຮົາກໍເປັນຟາຣີຊາຍຄືກັນ.

ພຣະເຢຊູ ແລະພວກນັກທັມຟາຣີຊາຍ (23:1-7

ພຣະຄັມພີຫລາຍຕອນທີ່ເຮົາເຄີຍອ່ານ ສ່ວນຫລາຍເຮົາຈະເຫັນພວກນັກທັມຟາຣີຊາຍເປັນຜູ້ຊອກຈັບເອົາຄວາມຜິດຂອງພຣະເຢຊູເປັນປະຈຳ, ສ່ວນໃນພຣະຄັມພີຕອນນີ້ເຮົາເຫັນວ່າພຣະເຢຊູຊົງປະນາມພວກນັກທັມແລະພວກຟາຣີຊາຍໃຫ້ພວກສາວົກແລະຄົນໃກ້ຊິດຕິດຕາມພຣະອົງຟັງ ຊຶ່ງເປັນຄຳສອນໃນອາທິດສຸດທ້າຍກ່ອນທີ່ພຣະອົງຈະຖືກປະຫານ ຄືສອນສາວົກຂອງພຣະອົງບໍ່ໃຫ້ເຮັດຄືພວກນັກທັມ ແລະພວກຟາຣີຊາຍ.

ພະເຢຊູສອນວ່າ "ພວກນັກທັມແລະພວກຟາຣີຊາຍ ເຄີຍນັ່ງບ່ອນນັ່ງຂອງໂມເຊ" (ຂໍ້ 2). ມີຄວາມໝາຍວ່າພວກນັກທັມ ແລະພວກຟາຣີຊາຍໃຊ້ອຳນາດຂອງໂມເຊ, ເຮັດຄືໂມເຊ ສອນກົດບັນຍັດຂອງພຣະເຈົ້າ. ເວລາທີ່ໂມເຊສອນກົດບັນຍັດນັ້ນໂມເຊເປັນຜູ້ປະຕິບັດຕາມກົດນັ້ນກ່ອນ ສ່ວນພວກນັກທັມ ແລະພວກຟາຣີຊາຍສອນໃຫ້ປະຊາຊົນປະຕິບັດສ່ວນເຂົາເອງບໍ່ໄດ້ປະຕິບັດອັນໃດ ດ້ວຍເຫດນີ້ພຣະເຢຊູຈຶ່ງສອນສາວົກພຣະອົງວ່າ "ເຫດສັນນັ້ນທຸກສິ່ງທີ່ເຂົາບອກພວກທ່ານ ຈົ່ງເຮັດຕາມ" (ຂໍ້ 3ກ). ເຫດທີ່ພຣະອົງຊົງສັ່ງໃຫ້ປະຊາຊົນປະຕິບັດຕາມຄາສອນຂອງພວກນັກທັມ ແລະພວກຟາຣີຊາຍ ກໍເພາະວ່າພວກເຂົາສອນບັນຍັດຂອງໂມເຊແທ້, ການສອນຂອງເຂົາກໍຖືກຕ້ອງ ແລະຍັງສອນຢ່າງ

ເຄັ່ງຄັດ ເມື່ອຄຳສອນຂອງເຂົາຖືກຕ້ອງຕາມຫລັກຂອງໂມເຊແລ້ວ ປະຊຸມຂອງພຣະເຈົ້າຄວນປະຕິບັດຕາມບັດຍັດ ແຕ່ບໍ່ໃຫ້ເຮັດຄືພວກເຂົາ "ແຕ່ຢ່າເຮັດຕາມກິຈການຂອງເຂົາ ເພາະເຂົາບອກໄວ້ແຕ່ບໍ່ໄດ້ເຮັດຕາມ" (ຂໍ້ 3ຂ).

ຂ້າພະເຈົ້າມີໂອກາດໄດ້ໂອ້ລົມກັບຄຣິສຕຽນຈາກຫລາຍຄົນ ໃນນັ້ນມີຄຣິສຕຽນຈຳນວນນຶ່ງຈົ່ມໃຫ້ອາຈານຂອງຕົນເອງນາໆປະການເຊັ່ນ; "ເພິ່ນມີແຕ່ສອນໝູ່ ບາດລູກເພິ່ນບໍ່ມາຮອດໂບດ, ແຕ່ວ່າຄຳເທສນາເພິ່ນດີແທ້ໆ". "ອີກຜູ້ນຶ່ງຈົ່ມວ່າຄືບໍ່ເຫັນອາຈານຖວາຍຊັບຈັກເທື່ອ ແຕ່ຫາກສອນໃຫ້ຜູ້ອື່ນຖວາຍ" ເຣື່ອງຢ່າງນີ້ກໍມີຫລາຍ. ຂ້າພະເຈົ້າຢາກເລົ້າໂລມໃຈທ່ານໃຫ້ຟັງພຣະເຢຊູເວົ້າກັບສາວົກວ່າ "ເຫດສັນນັ້ນທຸກສິ່ງທີ່ເຂົາບອກພວກທ່ານ ຈົ່ງເຮັດຕາມ" ຫາກເຮົາເຮັດຕາມກໍເປັນຜົນດີແກ່ເຮົາ, ສຳລັບກິຈການຂອງເພິ່ນນັ້ນບໍ່ແມ່ນໜ້າທີ່ເຮົາຈະຕັດສິນ ປ່ອຍໃຫ້ເປັນໜ້າທີ່ຂອງພຣະເຈົ້າ. ໃນພຣະທັມຟີລິປອຍກ່າວວ່າ "ເຖິງແມ່ນວ່າເຂົາຈະປະກາດພຣະຄຣິດດ້ວຍປະການໃດກໍຕາມ ຈະເປັນການແກ້ງເຮັດຫລືຈິງໃຈກໍດີ ແຕ່ເຂົາຍັງປະກາດເຣື່ອງພຣະຄຣິດ" (ຟີລິປອຍ 1:18).

<u>ສອນໃຫ້ຖ່ອມຕົວ</u> ໒໓:8-1໒

ກ່ອນອື່ນຢາກບອກໃຫ້ທ່ານເຂົ້າໃຈຄຳວ່າ ຣັບບາຍ (Rhabbi) ເປັນພາສາກຣີກທີ່ເອົາມາຈາກພາສາເຮັບເຣີ (Rab) ເປັນພາສາກົກເຄົ້າໃນຄຳວ່າຣັບບາຍໆແປວ່າ ຜູ້ຍິ່ງໃຫຍ່, ເຈົ້ານາຍ, ພຣະອາຈານ, ກັບຕັນບັງຄັບເຮືອນ, ຫົວໜ້າໃຫຍ່ ແລະອື່ນໆ. ການສກົດໃນພາສາອັ່ງກິດໄດ້ຖືກປ່ຽນຈາກ Rhabbi ມາເປັນ Rabbi. ພວກນັກທັມແລະພວກຟາຣີຊາຍມັກໃຫ້ຄົນຮ້ອງເຂົາວ່າ ຣັບບາຍ (Rabbi) ແປວ່າພຣະອາຈານ, ເຂົາມັກນັ່ງບ່ອນມີ ກຽດ (ນັ່ງແຖວໜ້າ), ຍອຍເສື້ອກໍເຮັດຍາວເຮັດຄືເພິ່ນເປັນພຣະອາຈານໃຫຍ່. ພຣະເຢຊູສາມາດກ່າວສິ່ງນີ້ ດ້ວຍພຣະອົງຊົງເປັນພຣະເຈົ້າທີ່ເຫັນໃນຄວາມຄິດຈິດໃຈຂອງເຂົາ ສ່ວນເຮົາບໍ່ສາມາດຕັດສິນຜູ້ໃດວ່າເປັນຟາຣີຊາຍໄດ້ ດ້ວຍວ່າເຮົາເຫັນຄົນແຕ່ພາຍນອກເທົ່ານັ້ນ.

ພຣະເຢຊູຊົງສອນສາວົກຂອງພຣະອົງວ່າ "ຢ່າທຳຊົງເປັນຄົນຢ່າງນັ້ນ ຢ່າໃຫ້ໃຜເອີ້ນທ່ານວ່າ ພຣະອາຈານ ເພາະວ່າພວກທ່ານມີພຣະອາຈານແຕ່ຜູ້ດຽວ ແລະພວກທ່ານເປັນພີ່ນ້ອງກັນທັງໝົດ" (ຂໍ້ 8). ຫລາຍເທື່ອເຮົາໄດ້ຍິນຄຣິສຕຽນເວົ້າ ກັນວ່າ "ໂບດພວກຂ້ອຍບໍ່ຮ້ອງກັນວ່າອາຈານ ດ້ວຍວ່າພຣະຄັມພີສອນວ່າພຣະອາຈານມີແຕ່ຜູ້ດຽວ" ສຳລັບໂບດທີ່ບໍ່ ມີການຮ້ອງອາຈານວ່າ ອາຈານນັ້ນບາງທີ່ເພິ່ນຍັງບໍ່ຟັງຫມົດ, ພຣະເຢຊູເວົ້າວ່າ ຢ່າໃຫ້ໃຜເອີ້ນທ່ານວ່າ ພຣະອາຈານ ເພິ່ນບໍ່ໄດ້ເວົ້າວ່າ ຢ່າໃຫ້ໃຜເອີ້ນທ່ານວ່າ ອາຈານ ແຕ່ແມ່ນພຣະອາຈານ. ຄຳວ່າອາຈານທີ່ເຮົາໃຊ້ໃນໂບດເຮົາມີຄວາມ ຫມາຍວ່າ ອາຈານສອນພຣະຄັມພີ (ພຣະທັມພຣະເຈົ້າ), ລາງເທື່ອເຮົາໄດ້ຍິນເພິ່ນຮ້ອງກັນວ່າ ສາສນາຈານມີຄວາມ ຫມາຍວ່າ ອາຈານສອນສາສານາສາດ, ສ່ວນຄຳວ່າ Missionary ແປວ່າສາສານາທູດມີຄວາມຫມາວ່າເປັນທູດ ຣະວ່າງພຣະເຈົ້າກັບມະນຸດ ທີ່ຖືກສົ່ງໄປປະຈຳໃນເມືອງນັ້ນ, ປະເທດນັ້ນ ເພື່ອເປັນສາຍສຳພັນຣະວ່າງຄົນໃນເມືອງ ນັ້ນ, ຫລືປະເທດນັ້ນຈະມີໂອກາດຄືນດີກັບພຣະເຈົ້າ. ຂ້າພະເຈົ້າເຊື່ອວ່າທ່ານເຄີຽໄດ້ຍິນຄຳວ່າທູດລາວປະຈຳປະເທດ ໄທ, ຫລືທູດລາວປະຈຳສະຫະຣັຖອະເມຣິກາໃນເວລານີ້. ພວກທູດເຫລົ່ານີ້ມີຫນ້າທີ່ພົວພັນໃນຣະວ່າງປະເທດຕໍ່ປະເທດ ສ່ວນສາສນາທູດເປັນເຫມືອນທູດສວັນຊຶ່ງມີຫນ້າທີ່ພົວພັນໃນຣະວ່າງໂລກແລະສວັນຂອງພຣະເຈົ້າຍິ່ງສຳຄັນກວ່າທູດ ໃດໆໃນໂລກນີ້ຊ້ຳ.

ພຣະເຢຊູສອນສາວົກໃຫ້ຖ່ອມຕົວໂດຍກ່າວວ່າ "ຢ່າໃຫ້ໃຜເອີ້ນທ່ານວ່າ ພຣະອາຈານ" ອາດຈະມີຄວາມຫມາຍອີກຢ່າງນຶ່ງຄື ໃນເວລານັ້ນພວກສາວົກຍັງເປັນສາວົກໆແປວ່າຜູ້ຕິດຕາມ ຫລືຈະເວົ້າໃຫ້ແຈ້ງແລ້ວຄຳວ່າສາວົກແປວ່ານັກຮຽນ, ຜູ້ຮຽນເຮັດຕາມແບບຢ່າງຂອງພຣະອາຈານ ແລະເປັນຜູ້ປົນນິບັດຮັບໃຊ້ພຣະອາຈານ ດ້ວຍເຫດນີ້ແຫລະພຣະອົງ ຈຶ່ງບອກສາວົກວ່າ ຢ່າໃຫ້ໃຜເອີ້ນທ່ານວ່າ ພຣະອາຈານ ດ້ວຍພຣະອາຈານນັ້ນມີແຕ່ຜູ້ດຽວຄືພຣະເຢຊູສ່ວນ

ຄຳວ່າ ອາຈານ ກໍມີຄວາມແຕກຕ່າງກັບພຣະອາຈານ. ພຣະອົງຊົງສອນໃຫ້ສາວົກຖ່ອມຕົວເຫມືອນພຣະອົງເອງຊົງຖ່ອມຕົວ. ພຣະອົງສເດັດມາໃນໂລກໃນຖານາຜູ້ຮັບໃຊ້ທີ່ເຮັດຕາມພຣະທັຍພຣະບິດາຢ່າງໃດສາວົກຂອງພຣະອົງຄວນຈະຄິດຢ່າງດຽວກັບພຣະອົງ ດ້ວຍເຫດນີ້ພຣະອົງຈຶ່ງຊົງກ່າວວ່າ "ຜູ້ໃດຍົກຕົວຂື້ນຜູ້ນັ້ນຈະຖືກຖອຍລົງ ຜູ້ໃດຖ່ອມຕົວລົງ ຜູ້ນັ້ນຈະຖືກຍົກຂື້ນ (ຂໍ້ 12).

<u>ວິບັດແກ່ຟາຣີຊາຍ</u> 23:13-31

ເມື່ອເຮົາອ່ານໂດຍບໍ່ສຶກສາແລ້ວເຮົາຈະເຂົ້າໃຈວ່າວິບັດຈະຕົກມາໃສ່ຟາຣີຊາຍເທົ່ານັ້ນ, ແຕ່ຫາກເຮົາອ່ານຢ່າງພິຈະຣະນາແລ້ວເຮົາກໍຈະຢ້ານວິບັດທີ່ຈະມາ ດ້ວຍວ່າເຮົາບໍ່ຮູ້ວ່າເຮົາເອງເປັນຟາຣີຊາຍໃນໂບດເຮົາຫລືບໍ່? ກ່ອນອື່ນເຮົາຕ້ອງເຂົ້າໃຈວ່າຟາຣີຊາຍມັກເຮັດຫຍັງແດ່ໃນກິຈກັມປະຈຳວັນຂອງເຂົາໆມັກຢູ່ໃສ? ເຂົາເປັນຄົນນອກໂບດຫລືຄົນໃນໂບດ? ແຕ່ເຮົາບໍ່ສົມຄວນຕັດສິນຄົນອື່ນວ່າເປັນຈຳນວນພວກນັກທັມຟາຣີຊາຍ ດ້ວຍວ່າການຟັງພຣະທັມແລະປະຕິບັດຕາມພຣະທັມນັ້ນເຮົາບໍ່ມີຫນ້າທີ່ຟັງເພື່ອຄົນອື່ນຫລືປະຕິບັດເພື່ອຄົນອື່ນໄດ້ ສາວົກແທ້ຂອງຣະເຢຊູແມ່ນຜູ້ຟັງແລະປະຕິບັດຂັບຕາມພຣະທັມນັ້ນ. ພຣະເຢຊູຊົງກ່າວໂທດພວກນັກທັມຟາຣີຊາຍຢ່າງບໍ່ເຄີຽມີຜູ້ໃດປະກາດກ່າວຄວາມຜິດຂອງພວກນັກທັມຟາຣີຊາຍມາກ່ອນ ເຂົາອ້າງຕົນເອງວ່າເປັນພວກນັກທັມແຕ່ພາຍນອກດັ່ງນັ້ນພຣະເຢຊູຈຶ່ງຮ້ອງເຂົາວ່າ "ຄົນຫນ້າຊື່ໃຈຄົດ" (ຂໍ້ 13). ການກະທຳຂອງເຂົາແມ່ນເພື່ອຖານະຕຳແຫນ່ງເຂົາເອງ ເຂົາບໍ່ໄດ້ເຮັດເພື່ອພຣະເຈົ້າ, ພວກເຂົາໃຊ້ພຣະນາມພຣະເຈົ້າເປັນສາກບັງຫນ້າ ເປັນເຫມືອນນັກສະແດງຫນັງຕາມເຣື່ອງຂອງຫນັງ ສ່ວນຊີວິດຂອງນັກສະແດງຫນັງແນ່ນອນບໍ່ເປັນຄືໃນຫນັງ.

ວິບັດທີ່ພຣະເຢຊູຊົງກ່າວມີດັ່ງນີ້; ຫນ້າຊື່ໃຈຄົດອັດປະຕູສວັນຕັນທາງມະນຸດ(ຂໍ້ 13). ເຂົາທຽວໄປທາງນ້ຳ, ທາງບົກເພື່ອໃຫ້ຄົນເຂົ້າສາສນາ ເມື່ອເຂົາເຂົ້າແລ້ວເຂົາກໍໄດ້ຮັບຄວາມທຸກເພີ້ມກວ່າຟາຣີຊາຍ (ຂໍ້ 15). ເຂົາເປັນນາຍທາງຕາບອດ ຂໍ້ 16). ເຂົາອ້າງອີງເຣື່ອງການສາບານ, ເຂົາສອນໃຫ້ຄົນອື່ນຖວາຍນຶ່ງສ່ວນສິບ ແຕ່ຕົວເຂົາບໍ່ມີຄວາມຍຸຕິທັມແລະຂາດຄວາມເມຕາ (ຂໍ້ 23). ວິບັດອັນສຸດທ້າຍແມ່ນການສ້າງຕົນເອງແປງຕົນໃຫ້ເບິ່ງຄືເປັນຄົນສິນທັມສ່ວນທາງໃນບໍ່ເປັນດັ່ງທາງນອກ ຄ້າຍຄື ອຸບໂມງຝັງສົບຫລືບ່ອນໄວ້ກະດູກຄົນຕາຍທີ່ເບິ່ງເປັນຕາຢ້ານທາງດ້ານໃນ ສ່ວນດ້ານນອກນັ້ນທາປູນຂາວຢ່າງສວຍງາມ (ຂໍ້ 29).

<u>ຄຳຖາມ:</u>

1. ທ່ານເຄີຽເວົ້າບໍ່ວ່າຜູ້ນັ້ນເປັນແນວນັ້ນ, ຜູ້ນີ້ເປັນແນວນີ້ບໍ່? ຈົ່ງຣະວັງຢ່າເວົ້າ.

2. ເປັນຫຍັງພຣະເຢຊູຈຶ່ງກ່າວໂທດນັກທັມຟາຣີຊາຍ?

3. ເປັນຫນັງພຣະເຢຊູຈຶ່ງສອນໃຫ້ເຮົາປະຕິບັດໃນສິ່ງທີ່ຟາຣີຊາຍສອນ?

4. ຄຳວ່າພຣະອາຈານ ແລະອາຈານແຕກຕ່າງກັນຢ່າງໃດ?

6. ເປັນຫຍັງພຣະເຢຊູຈຶ່ງສອນສາວົກວ່າ ຢ່າໃຫ້ໃຜເອີ້ນທ່ານວ່າ ພຣະອາຈານ?

7. ເປັນຫຍັງວິບັດຈຶ່ງຕົກມາໃສ່ພວກຟາຣີຊາຍ?

ສຈ. ທູນພັນ ວົງສຸຣິດທ໌

## ບົດຮຽນທີ 13
## ສິ່ງທີ່ຄວນເຮັດ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ມັດທາຍ 25:31--46

ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້: ມັດທາຍ 24-25

ຈຸດສໍາຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຢຊູຊົງເອີ້ນເຮົາໃຫ້ເປັນຄົນເມດຕາກະຣຸນາ.

ຄໍາຖາມເພື່ອການສໍາຣວດ: ທ່ານໄດ້ສະແດງຄວາມເມດຕາກະຣຸນາໄດ້ດີປານໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອສໍາຣວດເບິ່ງວ່າເຮົາເປັນຄົນເມດຕາກະຣຸນາຢ່າງໃດແດ່.

ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ບົດນໍາ

ໃນພຣະທັມປະຖົມມະການບົດ 4 ໄດ້ເວົ້າເຣື່ອງຂອງສອງອ້າຍນ້ອງອາເບນແລະກາອິນຂ້າກັນຕາຍທີ່ທົ່ງນາ. ກາອິນມີແຜນການຊົ່ວຮ້າຍຈຶ່ງຊັກຊວນອາເບນຜູ້ເປັນນ້ອງຊາຍອອກໄປທ່ຽວຫລິ້ນທົ່ງນາ ເມື່ອໄປແລ້ວກໍຂ້າອາເບນນ້ອງຊາຍຂອງຕົນເສັຽ. ພຣະເຈົ້າຮູ້ຈັກການກະທໍາອັນຊົ່ວຂອງກາອິນຢ່າງຄົບຖ້ວນ, ພຣະເຈົ້າລອງໃຈຖາມກາອິນວ່າ "ກາອິນນ້ອງຊາຍຂອງເຈົ້າຢູ່ໃສ" (ປຖກ 4:9). ລາວຕອບວ່າ "ຂ້ານ້ອຍບໍ່ຮູ້ຈັກ ຫລືວ່າ ພຣະອົງໃຫ້ຂ້ານ້ອຍເປັນຜູ້ຮັກສານ້ອງຊາຍຂອງຂ້ານ້ອຍຊັ້ນບໍ່?" ສັງເກດເບິ່ງຜູ້ຮ້າຍປາກແຂງຕອບພຣະເຈົ້າແບບຂົ່ມຂູ່, ຄໍາຕອບຂອງກາອິນເປັນເຫມືອນຄົນຂາດປັນຍາບໍ່ຮູ້ຈັກຢໍາເກງພຣະເຈົ້າ ດ້ວຍວ່າລາວເອງເປັນຄົນຢ້ານນ້ອງຊາຍລື່ນຕົນເອງຈຶ່ງຂ້າລາວເພື່ອຈະບໍ່ມີໃຜມາແຂ່ງລາວໆກາຍເປັນຄົຍເຫັນແກ່ຕົວ ແລະບໍ່ຮູ້ຈັກຮັກແພງນ້ອງຊາຍແທ້ໆຂອງຕົນ. ຄຣິສຕຽນເຮົາກໍເຊັ່ນດຽວກັນຫາກບໍ່ຮູ້ຈັກຮັກອ້າຍນ້ອງໃນພຣະເຢຊູແລ້ວ ຈະເປັນພະຍານທີ່ດີໄດ້ຢ່າງໃດ?. ຖານະທີ່ເຮົາເປັນຄຣິສຕຽນເຮົາຄວນເປັນຫ່ວງໄຍຕໍ່ຄົນທັງປວງທີ່ຢູ່ອ້ອມຂ້າງເຮົາບໍ່ແມ່ນບໍ່?.

### ການສະເດັດກັບຄືນສູ່ໂລກຄັ້ງທີສອງ 25:31-33

ພຣະເຢຊູຄຣິດໄດ້ສະເດັດລົງມາເກີດໃນໂລກດ້ວຍຄວາມຖ່ອມພຣະທັຍ ເພື່ອຊ່ອຍກູ້ເອົາບັນດາຄົນທີ່ຫລົງຜິດຄິດຊົ່ວໃຫ້ຫັນຫນີກັບໃຈເຊື່ອໃນພຣະອົງ. ເປັນເວລາສາມປີກວ່າທີ່ພຣະອົງທຽວໄປມາເພື່ອເທສານາທັ່ງສອນ ແລະເອີ້ນເອົາຜູ້ຮັບໃຊ້ພຣະເຈົ້າເພື່ອສືບຕໍ່ວຽກງານທີ່ພຣະອົງຊົງເຮັດໃນໂລກ. ພຣະອົງທົນທຸກທໍຣະມານນາງປະການຈົນເຖິງແກ່ຄວາມຕາຍທີ່ບົນກາງແຂນເພື່ອຄົນບາບທັງຫລາຍທີ່ກັບໃຈເຊື່ອພຣະອົງຈະໄດ້ພົ້ນຈາກບຶງໄຟນາຣົກ, ຄາວນັ້ນພຣະອົງບໍ່ຊົງໂຕ້ຕອບຜູ້ໃດເມື່ອເຂົາຂົ່ມເຫັງພຣະອົງ ແຕ່ໃນການກັບຄືນມາສູ່ໂລກຄັ້ງທີສອງນັ້ນພຣະອົງຈະບໍ່ສະເດັດມາໃນຮູບ

ພາບເດີມ. ພຣະອົງຈະສເດັດມາໃນສະພາບຂອງພຣະເຈົ້າທີ່ມີອຳນາດເຕັມປ່ຽມ ແລະພຣະອົງຈະໃຊ້ອຳນາດນັ້ນຕາມຄວາມຍຸດຕິທັມຂອງພຣະອົງ.

ມີຕອນນຶ່ງໃນໜັງກາຕູນອາລາດິນ ນາງເອກຊື່ຈັສມິນ ເປັນລູກກະສັດ ນາງໄດ້ປອມຕົວອອກໄປຍັງບ້ານເມືອງຂອງພໍ່ນາງ ໃນຂະນະທີ່ທຽວໄປມານາງເຫັນເດັກນ້ອຍຍາກຈົນແລະຫິວໂຫຍຜູ້ນຶ່ງ ນາງຈຶ່ງຈັບເອົາໝາກໄມ້ໜ່ວຍນຶ່ງໃນຕລາດໃຫ້ເດັກນັ້ນ ເຈົ້າຂອງໝາກໄມ້ຈຶ່ງຈັບນາງເພື່ອຈະຕັດມືນາງຖືວ່າເປັນຄົນຂີ້ລັກພຣະເອກອາລາດິນກໍມາຊ່ອຍນາງຫລົບໜີໄປ. ຈັບຟາຜູ້ໃຊ້ເວດມົນກາຖາສະກົດຈິດກະສັດ ແລະຊີງອຳນາດແລ້ວກໍສັ່ງໃຫ້ເຈົ້າໜ້າທີ່ຕາມຈັບພຣະເອກອາລາດິນ. ມາເຖິງຕອນນີ້ນາງເອກຈັສມິນກໍເປີດເຜີຽຖານະຕົນເອງວ່າເປັນລູກກະສັດ ແຕ່ພວກເຈົ້າໜ້າທີ່ກໍບໍ່ໄດ້ປະຕິບັດຕາມຄຳສັ່ງຂອງນາງ ດ້ວຍວ່າອຳນາດຕົກຢູ່ໃນມືຂອງຜູ້ຮ້າຍຈັບຟາ ໃນຕອນສຸດຂອງເຣື່ອງໂຈນກໍຖືກປາບອຳນາດຈຶ່ງກັບເປັຂອງກະສັດ, ລູກສາວກໍຮັບສະງ່າຣາສີມີອຳນາດເໜືອປະຊາຊົນ. ເຣື່ອງນີ້ມີອັນຄ້າຍຄືຊີວິດຂອງພຣະເຢຊູ ເມື່ອພຣະອົງສະເດັດມາໃນຄາບຂອງມະນຸດບໍ່ມີໃຜຢ້ານຢຳເກງ ສ່ວນຄັ້ງທີສອງທີ່ພຣະອົງຈະສະເດັດມາ ພຣະອົງຈະສະເດັດມາໃນສະພາບຂອງພຣະເຈົ້າຜູ້ມີອິດທິຣິດ "ທຸກຄົນຈະຄຸເຂົ່າລົງຂາບໄຫວ້ເຮົາ ແລະທຸກສິ່ງຈະສັຣເສີນ ພຣະ ເຈົ້າ" (ໂຣມ 14:11).

ພຣະອົງຈະສະເດັດມາພ້ອມກັບຝູງເທວະດາ ສ່ວນບັນດາປະຊາຊາດຕ່າງໆ ຈະຖືກເຕົ້າໂຮມກັນໄວ້ຖ້າພຣະອົງໃນບ່ອນດຽວກັນ "ເມື່ອພຣະອົງຈະແຍກຝູງແກະອອກຈາກຝູງແບ້" ຂໍ້ 31. ຝູງແກະນັ້ນບໍ່ຈຳເປັນບອກໃຫ້ທ່ານຮູ້ດ້ວຍວ່າທ່ານຮູ້ແນ່ແກ່ໃຈແລ້ວວ່າທ່ານເຄີຽຖືກເອີ້ນເປັນແກະຕລອດມາ, ສ່ວນຝູງແບ້ນັ້ນພຣະອົງໝາຍເຖິງຄົນທີ່ບໍ່ເຊື່ອຟັງ, ຄົນຕໍ່ສູ້ພຣະອົງ, ຄົນດື້ດ້ານເໝືອນແບ້ທີ່ບໍ່ຍອມກັບໃຈ ພຣະອົງຈະແຍກໄວ້ຄົນລະທິດທາງເພື່ອລົງໂທດແລະໃຫ້ລາງວັນຕາມການງານຂອງທຸກຄົນ. ການມາຄັ້ງນີ້ພຣະອົງບໍ່ໄດ້ມາດ້ວຍຄວາມຖ່ອມຕົວ ຫລືປະກາດໃຫ້ຄົນຊື່ອກັບໃຈອີກ ພຣະອົງຈະໃຊ້ອຳນາດອັນສົມບູນຂອງພຣະອົງພິພາກສາຢ່າງບໍ່ໄວ້ໜ້າຜູ້ໃດ.

<u>ວັນສຸດທ້າຍຂອງຜູ້ມີຄວາມເມຕາກະຣຸນາ</u> 25: 34-40

ຄຣິສຕຽນກຳລັງຖືກດູຖູກຢຽບຢ່ຳຈາກສັງຄົມພາຍນອກ ເລີ້ມແຕ່ສມັຍອິສຣາເອນເປັນຂ້ອຍຂ້າຂອງປະເທດເອຢິບເມື່ອອິສຣາເອນຖືກປົດປ່ອຍຈາກເອຢິບແລ້ວກໍມີຈັກກະພັດໂຣມັນປົກຄອງອິສຣາເອນອີກ, ຕົກມາເຖິງສມັຍນີ້ກໍບໍ່ມີຫຍັງປ່ຽນແປງເທົ່າໃດ ປະເທດສັງຄົມນິຍົມທັງຫລາຍຍັງຕໍ່ຕ້ານຄຣິສຕຽນຢ່າງສາຫັດ. ພຣະເຢຊູປຽບເຮົາໃສ່ໂຕແກະ ແຕ່ບໍ່ໝາຍຄວາມວ່າເຮົາເປັນສັດ ດ້ວຍວ່າໂຕແກະເປັນສັດທີ່ຟັງຄວາມແລະບໍ່ທຳຮ້າຍຜູ້ໃດ. ດ້ວຍເຫດນີ້ເມື່ອພຣະອົງສະເດັດກັບຄືນມາພຣະອົງຈະຊົງກ່າວວ່າ "ພວກທ່ານທີ່ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາເອີຽ ຈົ່ງມາຮັບເອົາຣາຊອານາຈັກຊຶ່ງໄດ້ຊົງຕຽມໄວ້ສຳລັບທ່ານຕັ້ງແຕ່ເດີມໂລກ" ຂໍ້ 34. ພຣະອົງບອກມາຕຖານຄົນທີ່ຮັບມໍຣະດົກ ນັ້ນແມ່ນຄົນທີ່ເຊື່ອໃນພຣະອົງ ຊຶ່ງເປັນຄົນມີນ້ຳໃຈເມຕາສົງສານຕໍ່ເພື່ອນມະນຸສ "ເພາະວ່າເມື່ອເຮົາຢາກເຂົ້າພວກທ່ານກໍໃຫ້ເຮົາກິນ ເຮົາຫິວນ້ຳ ພວກທ່ານກໍໃຫ້ເຮົາດື່ມ ເຮົາເປັນແຂກບ້ານ ພວກທ່ານກໍຕ້ອນຮັບເຮົາໄວ້ ເຮົາເປືອຍຕົວ ພວກທ່ານກໍເອົາເຄື່ອງມາໃຫ້ເຮົານຸ່ງຫົ່ມ ເຮົາເຈັບປ່ວຍ ພວກທ່ານກໍມາ ຢ້ຽມເຮົາ ເຮົາຢູ່ໃນຄຸກ ພວກທ່ານກໍມາຫາເຮົາ" ຂໍ້ 35-36.

ຫລາຍເທື່ອຄຣິສຕຽນມັກຈະເວົ້າວ່າ ຍັງເປັນຄົນຍາກຈົນ, ຫາເຊົ້າກິນຄ່ຳຢູ່ ບໍ່ສາມາດຈະຊ່ອຍເຫລືອຄົນອື່ນໄດ້ເທື່ອຄຳເວົ້ານີ້ເຮົາມັກຈະໄດ້ຍິນຢູ່ເປັນປະຈຳ. ຄວາມຈິງແລ້ວເຣື່ອງຄວາມເມຕາປານີແບ່ງສຸກແບ່ງທຸກນັ້ນບໍ່ຂຶ້ນກັບຄວາມຮັ່ງມີເປັນດີແຕ່ຢ່າງໃດ ມັນເປັນກິຈການປະຈຳວັນຂອງຄຣິສຕຽນຈຳຕ້ອງມີແຕ່ລະວັນໆ ໂດຍບໍ່ຄິດວ່າມີຫລາຍຫລືເຫລືອຄອບຄົວເຮົາກ່ອນຈຶ່ງຊ່ອຍເພິ່ນ. ອົງພຣະຜູ້ເປັນເຈົ້າຍັງຊົງມີພຣະບຸດອົງດຽວກໍຍັງໂຜດປະທານໃຫ້ເປັນຄ່າໄຖ່

ໂທດຄວາມຜິດບາບຂອງມະນຸດດ້ວຍຄວາມເມດຕາກະຣຸນາສັນໃດ ຄຣິສຕຽນຜູ້ທີ່ໄດ້ຮັບຄວາມລອດພົ້ນດ້ວຍພຣະບຸດນັ້ນຄວນມີຈິດໃຈເມຕາກະຣຸນາເຫມືອນພຣະເຈົ້າຊົງເມຕາກະຣຸນາຄົນສັນນັ້ນ.

ພວກຄົນສິນທັມຈະເວົ້າວ່າ "ພວກຂ້າພຣະອົງໄດ້ຊົງເຫັນພຣະອົງຊົງຢາກເຂົ້າຫລືຫິວນ້ຳ ແລ້ວໄດ້ຈັດ ມາຖວາຍພຣະອົງເມື່ອໃດ ພວກຂ້າພຣະອົງຊົງເຫັນພຣະອົງຊົງເປັນແຂກບ້ານແລະໄດ້ຕ້ອນຮັບໄວ້ ຫລືຊົງເປືອຍພຣະກາຍ ແລ້ວໄດ້ຊົງເອົາມາໃຫ້ພຣະອົງເມື່ອໃດ ພວກຂ້າພຣະອົງຊົງເຫັນພຣະອົງຊົງປະຊວນຢູ່ ຫລືຢູ່ໃນຄຸກ ແລະໄດ້ມາ ເຝົ້າພຣະອົງເມື່ອ ໃດ " ຂໍ້ 37-38. ລາວເທື່ອເຮົາຄິດວ່າການກະທຳທຸກຢ່າງແມ່ນກະທຳກັບພຣະອົງໂດຍກົງ ເຮົາລືມຄິດໄປວ່າພຣະອົງມີພຣະປະສົງໃຫ້ເຮົາຮັກແພງຊ່ວຍເຫລືອຊຶ່ງກັນແລະກັນໃນພຣະນາມຂອງພຣະອົງ. ພຣະອົງຊົງຮັກຈົນຍອມວາຍພຣະ ຊົນແທນຄົນທັງປວງທີ່ຍອມເຊື່ອພຣະອົງ. ດ້ວຍເຫດນີ້ພຣະອົງຈຶ່ງຊົງກ່າວວ່າ "ທີ່ພວກທ່ານໄດ້ເຮັດການເຫລົ່ານີ້ແກ່ຜູ້ ຕ່ຳຕ້ອຍທີ່ສຸດຄົນນຶ່ງໃນພວກພີ່ນ້ອງຂອງເຮົານີ້ ກໍໄດ້ເຮັດໃຫ້ເຮົາເຫມືອນກັນ" ຂໍ້ 40.

<u>ວັນສຸດທ້າຍຂອງຜູ້ຂາດຄວາມເມດຕາກະຣຸນາ</u> 25:41-46

ນາຮົກບຶງໄຟບໍ່ແມ່ນບ່ອນຢູ່ຂອງມະນຸດ ແຕ່ເປັນບ່ອນຢູ່ຂອງພວກຊາຕານແລະບໍຣິວານຂອງມັນ ມະນຸດທີ່ຊົ່ວຊ້າອາດຈະຕົກໄປຢູ່ໃນບຶງໄຟນີ້ເນື່ອງຈາກວ່າມະນຸດຈຳພວກນີ້ເລືອກຜິດຄິດຊົ່ວປະຕິເສດພຣະເຈົ້າ. ເວລາທີ່ມະນຸສຍັງມີຊີວິດຢູ່ນັ້ນພຣະເຈົ້າໄດ້ຊົງສັ່ງສອນຜ່ານທາງຜູ້ປະກາດເຣື່ອງຣາຊອານາຈັກສວັນເປັນສຖານທີ່ງພຣະເຈົ້າມີພຣະປະສົງໃຫ້ມະນຸດຊາດໄດ້ເຂົ້າໄປຢູ່ໂດຍຍອມຈຳນົນຕົນເອງເຊື່ອໄວ້ວາງໃຈໃນພຣະເຢຊູ ຫລືຫາກຜູ້ໃດບໍ່ຍອມເຊື່ອຟັງແລ້ວກໍຈະຕົກລົງໄປຍັງບຶງໄຟນາຮົກຮ່ວມກັບມານຊາຕານ. ພຣະຜູ້ເປັນເຈົ້າບໍ່ໄດ້ພໍພຣະທັຍໃນເຣື່ອງມະນຸດຈະຕົກໃນບຶງໄຟ ແຕ່ເນື່ອງຈາກວ່າມະນຸດຫລາຍຄົນໄດ້ເລືອກທາງຜິດພຣະອົງຈຳເປັນຈະຕ້ອງໃຫ້ຄົນບາບເຫລົ່ານັ້ນລົງໄປຍັງບຶງໄຟທີ່ໄຫມ້ຕລອດໄປເປັນນິດ.

"ເມື່ອນັ້ນພຣະອົງຈະຊົງກ່າວກັບບັນດາຜູ້ທີ່ຢູ່ເບື້ອງພຣະຫັດຊ້າຍຂອງພຣະອົງວ່າ ສູທັງຫລາຍຜູ້ຖືກປ້ອຍເວນຈົ່ງຖອຍຫນີຈາກເຮົາເຂົ້າໄປໃນໄຟທີ່ໄຫມ້ຢູ່ເປັນນິດ ຊຶ່ງຊົງຈັດຕຽມໄວ້ສຳລັບພະຍາມານກັບບໍຣິວານຂອງມັນ ເພາະວ່າເຮົາຢາກເຂົ້າ ສູບໍ່ໄດ້ໃຫ້ເຮົາກິນ ເຮົາຫິວນ້ຳສູບໍ່ໄດ້ໃຫ້ເຮົາດື່ມ ເຮົາເປັນແຂກບ້ານມາ ສູບໍ່ໄດ້ພາເຮົາໄປ ເຮົາເປືອຍຕົວ ແຕ່ສູບໍ່ໄດ້ມາເອົາເຄື່ອງໃຫ້ເຮົານຸ່ງ ເຮົາເຈັບປ່ວຍແລະຢູ່ໃນຄຸກ ແຕ່ສູບໍ່ໄດ້ມາຢ້ຽມເຮົາ" ຂໍ້ 41-43. ເມື່ອນັ້ນເຂົາຈະທູນຕໍ່ພຣະອົງວ່າເຂົາບໍ່ໄດ້ເຫັນພຣະອົງຢູ່ໃນສະພາບທີ່ພຣະອົງກ່າວມານັ້ນເຂົາຈະຊ່ວຍໄດ້ຢ່າງໃດ. ເຂົາກ່າວວ່າ "ພວກຂ້າພຣະອົງໄດ້ຊົງເຫັນພຣະອົງຊົງຢາກເຂົ້າຫລືຫິວນ້ຳ ຊົງເປັນແຂກມາ, ຊົງເປືອຍພຣະກາຍ, ຊົງປະຊວນຫລືຊົງໃຢູ່ໃນຄຸກ ແລະພວກຂ້າພຣະອົງບໍ່ໄດ້ປະຕິບັດພຣະອົງຍາມໃດ? ເປັນຄຳຖາມຂອງພວກທີ່ຂາດຄວາມເມຕາປານີຕໍ່ຄົນທັງຫລາຍທີ່ພຣະອົງກ່າວມາ, ຄົນຈຳພວກນີ້ພວກເຂົາເຫັນຢູ່ທຸກວັນແຕ່ບໍ່ໄດ້ເຮັດຫຍັງຫມົດ. "ເມືອນັ້ນພຣະອົງຈະຊົງຕອບແກ່ເຂົາວ່າ ເຮົາບອກສູທັງຫລາຍຕາມຄວາມຈິງວ່າ ທີ່ສູທັງຫລາຍບໍ່ໄດ້ເຮັດການເຫລົ່ານັ້ນແກ່ຜູ້ຕຳຕ້ອຍທີ່ສຸດໃນພວກນີ້ ພວກສູກໍບໍ່ໄດ້ເຮັດແກ່ເຮົາເຫມືອນກັນ" ຂໍ້ 45. ຈາກນັ້ນພຣະອົງກໍຊົງລົງໂທດຄົນເຫລົ່ານີ້ເປັນນິດ ຂໍ້ 46.

<u>ຄຳຖາມ:</u>

1. ພຣະເຈົ້າຖາມວ່າ "ກາອີນ ນ້ອງຊາຍຂອງເຈົ້າຢູ່ໃສ" ລາວຕອບວ່າ "ຂ້ານ້ອຍບໍ່ຮູ້ຈັກ ຫລືວ່າ ພຣະອົງໃຫ້ຂ້ານ້ອຍເປັນຜູ້ຮັກສາ ນ້ອງຊາຍຂອງຂ້ານ້ອຍຊັ້ນບໍ່?" ທ່ານຄິດວ່າຄຳຕອບຂອງກາອີນເປັນແນວໃດ?

2. ຫາກພຣະເຈົ້າຖາມທ່ານວ່າ ພີ່ນ້ອງຂອງທ່ານຢູ່ໂບກຄຣວກັນເປັນແນວໃດ? ທ່ານຈະຕອບພຣະອົງແນວໃດ?

3. ການສະເດັດມາຂອງພຣະເຢຊູຄັ້ງທີນຶ່ງແລະຄັ້ງທີສອງຈະມີຫຍັງຕ່າງກັນ?

4. ພຣະອົງຈະພິພາກສາຄົນທັງສອງກຸ່ມນັ້ນມີກຸ່ມໃດແດ່?

5. ທ່ານຄິດວ່າທ່ານເປັນຄົນໃນກຸ່ມໃດ?

6. ພຣະອົງກ່າວວ່າ ""ເພາະວ່າເມື່ອເຮົາຢາກເຂົ້າ ພວກທ່ານກໍໃຫ້ເຮົາກິນ ເຮົາຫິວນໍ້າ ພວກທ່ານກໍໃຫ້ເຮົາດື່ມ ເຮົາເປັນແຂກບ້ານ ພວກທ່ານກໍຕ້ອນຮັບເຮົາໄວ້ ເຮົາເປືອຍຕົວ ພວກທ່ານກໍເອົາເຄື່ອງມາໃຫ້ເຮົານຸ່ງຫົ່ມ ເຮົາເຈັບປ່ວຍ ພວກທ່ານກໍມາ ຢ້ຽມເຮົາ ເຮົາຢູ່ໃນຄຸກ ພວກທ່ານກໍມາຫາເຮົາ" ຫມາຍຄວາມວ່າແນວໃດ? ທ່ານໄດ້ເຮັດສິ່ງເຫລົ່ານີ້ຈັກຢ່າງບໍ່?

7. ບົດຮຽນວັນນີ້ສອນເຮົາຢ່າງໃດ?

ສຈ. ທູນພັນ ວົງສຸຣິດທ໌

# ຄຣິສມັສ
# ພຣະເຈົ້າຊົງຢູ່ກັບເຮົາທຸກຄົນ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 1:18-2:12

<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> ມັດທາຍ 1:18--2:12

<u>ຈຸດສຳຄັນຂອງບົດຮຽນນີ້:</u> ການເກີດຢ່າງອັສະຈັນຂອງພຣະເຢຊູໄດ້ສອນວ່າເປັນຣິດອຳນາດຂອງພຣະເຈົ້າ

<u>ຄຳຖາມເພື່ອການສຳຣວດ:</u> ເປັນຫຍັງພຣະເຢຊູຈຶ່ງສະເດັດມາຢູ່ກັບພວກເຮົາ

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າພຣະເຢຊູຊົງລົງມາເພື່ອຄົນທັງຫລາຍຈະໄດ້ພົ້ນ.

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸສທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

ຂ່າວການເກີດຂອງເດັກນ້ອຍຜູ້ນຶ່ງເປັນຄວາມຍິນດີຂອງພໍ່ແລະແມ່ພ້ອມດ້ວຍຍາດພີ່ນ້ອງທາງໃກ້ແລະໄກ, ຍາດພີ່ນ້ອງຫລາຍຄອບຄົວມັກຈະເດີນທາງໄປຮ່ວມຄວາມຊົມຊື່ນຍິນດີກັບຜູ້ເປັນພໍ່ແມ່ຂອງເດັກ, ຫາກເປັນລູກເຈົ້າຫລານນາຍກໍຍິ່ງມີການຄົບງັນກັນຢ່າງຄຶກຄື້ນ. ຍິ່ງໄປກວ່ານັ້ນຫາກເປັນລູກຂອງກະສັດກໍຈະດັງໄປທົ່ວປະເທດເລີຍ, ແຕ່ການເກີດຂອງພຣະເຢຊູປີແລກນັ້ນມີຄົນຈຳນວນນ້ອຍທີ່ສຸດມີຄວາມຊົມຊື່ນຍິນດີ, ມາເຖິງເວລານີ້ງານສລອງງານວັນເກີດຂອງພຣະເຢຊູໄດ້ສລອງກັນທົ່ວໂລກຢ່າງບໍ່ມີງານວັນເກີດໃຜໆໃຫຍ່ໄປກວ່ານີ້ ດ້ວຍວ່າພຣະອົງຊົງເປັນພຣະບຸດອົງດຽວຂອງພຣະເຈົ້າທີ່ສະເດັດມາເກີດໃນໂລກເພື່ອຊ່ອຍໃຫ້ມະນຸສພົ້ນບາບກັມ. ເຣື່ອງການເກີດຂອງພຣະເຢຊູເປັນດັ່ງຕໍ່ໄປນີ້;

<u>ໂຢເຊບເຫັນນິມິດ</u> (ມັດທາຍ 1:18-25)

ໃນສັງຄົມຂອງຄົນຢິວ ແລະສັງຄົມຂອງຄົນລາວກໍບໍ່ແຕກຕ່າງກັນເທົ່າໃດ ຍິງຊາຍຈະແຕ່ງງານກັນນັ້ນມີສາມຂັ້ນຕອນດ້ວຍກັນຄື; 1. ຄອບຄົວທັງສອງກ້າສອງຝ່າຍຕ້ອງ ມາຕົກລົງກັນເປັນທາງການເສັຽກ່ອນ. 2. ຫລັງຈາກນັ້ນຈຶ່ງມາຫມັ້ນຫມາຍກັນໄວ້ແລ້ວປະກາດງານຫມັ້ນເປັນທາງການໃຫ້ຄົນທັງຫລາຍຮູ້ ເພື່ອບໍ່ໃຫ້ຜູ້ອື່ນຄິດຮັກມັກສອງຄົນນີ້, ສິ່ງສຳຄັນທີ່ສຸດນັ້ນແມ່ນບໍ່ໃຫ້ຊາຍຍິງໄປຢູ່ກິນນຳກັນກ່ອນແຕ່ງງານເດັດຂາດ ຫາກທັງສອງຂືນໄປຢູ່ກິນນຳກັນກ່ອນແຕ່ງງານຈະຕ້ອງຖືກໂທດຕາມຫລັກແຫ່ງສາສນາ. 3. ແຕ່ງງານກັນແລ້ວຢູ່ກິນຕາມໃຈຊອບ. ເຮົາຮູ້ແລ້ວວ່າໂຢເຊບເປັນຄົນຢິວທີ່ຖືສິນທັມຢ່າງຖືກຕ້ອງ ເພິ່ນໄດ້ຫມັ້ນຫມາຍກັບນາງມາຣີອາແລ້ວກໍຕາມ ເພິ່ນຍັງປະຕິບັດກົດຢ່າງເຄັ່ງຄັດ ຄືເພິ່ນບໍ່ລ່ວງເກີນນາງແມ່ນແຕ່ນ້ອຍ. ໃນຂະນະທີ່ເພິ່ນສງຽມຈຽມຕົວຢູ່ນັ້ນເພິ່ນຮູ້ວ່ານາງມາຣີອາຄູ່ຫມັ້ນຂອງເພິ່ນຕັ້ງທ້ອງເພິ່ນຈຶ່ງປ່ຽນໃຈຈະບໍ່ແຕ່ງກັບນາງແລະຕ້ອງຖອນຫມັ້ນເສັຽ, ເນື່ອງຈາກວ່າເພິ່ນເປັນຄົນສິນທັມເພິ່ນຈຶ່ງຄິດປຶກ ປ້ອງ

ນາງມາຣີອາບໍ່ໃຫ້ຂາຍໜ້າ. ອີງຕາມກົດໝາຍຂອງຢິວແລ້ວໂຢເຊບມີສິດຈະຢ່າຮ້າງຫລືຖອນໝັ້ນນາງ ຫລື ຫາກເພິ່ນບໍ່ເປັນຄົນມີສິນທັມແລ້ວເພິ່ນຈະໂວຍວາຍຮອດກົດໝາຍຂອງຢິວ ນາງມາຣີອາຈະຕ້ອງຖືກຄວ່າງໃຫ້ຕາຍ ອີງຕາມພຣະບັນຍັດກ່າວວ່າ "ສົມມຸດວ່າມີຊາຍຜູ້ນຶ່ງຖືກຈັບໄດ້ໃນເມືອງ ໃນຂະນະທີ່ລາວສົມສູ່ກັບຍິງສາວທີ່ມີຄູ່ໝັ້ນແລ້ວໃຫ້ນຳເຂົາທັງສອງອອກໄປນອກເມືອງແລະແກວ່ງກ້ອນຫີນໃສ່ໃຫ້ຕາຍ ຜູ້ຍິງນີ້ຕ້ອງຖືກໂທດເຖິງຕາຍເພາະນາງບໍ່ໄດ້ຮ້ອງໃຫ້ຊ່ອຍເຫລືອ ເຖິງແມ່ນນາງຢູ່ໃນເມືອງບ່ອນທີ່ຄົນໄດ້ຍິນສຽງໄດ້" (ພຣະບັດຍັດສອງ 22:23-24). ສຳລັບນາງມາຣີອາແລ້ວກົດທີ່ມີນັ້ນບໍ່ສາມາດເຮັດອັນຕະລາຍນາງໄດ້ ເພາະນາງບໍ່ໄດ້ສົມສູ່ກັບຊາຍໃດໃນເຣື່ອງຈິງຫາກເປັນເຣື່ອງກົດໝາຍແລະຄວາມຈິງມະນຸສແລ້ວຜູ້ຍິງຈະມີລູກໂດຍປາສຈາກຊາຍບໍ່ໄດ້ໃນເວລານັ້ນ.

ຝ່າຍໂຢເຊບຄຶງຄຶດຢ່າງໜັກໃນເຣື່ອງນີ້, "ແຕ່ເມື່ອໂຢເຊບຍັງຄຶດໃນເຣື່ອງນີ້ຢູ່ ກໍມີເທວະດາຕົນນຶ່ງຂອງອົງພຣະຜູ້ເປັນເຈົ້າມາປາກົດແກ່ໂຢເຊບໃນຄວາມຝັນວ່າ ໂຢເຊບບຸດດາວິດເອີຍ, ຢ່າຊູ່ຢ້ານທີ່ຈະຮັບນາງມາເປັນເມັຽຂອງເຈົ້າເພາະວ່າຜູ້ຊຶ່ງປະຕິສົນທິໃນທ້ອງຂອງນາງກໍເປັນ ໂດຍເດດພຣະວິນຍານບໍຣິສຸດ ນາງຈະປະສູດບຸດແລ້ວຈົ່ງຖວາຍນາມທ່ານວ່າເຢຊູ ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ" (ຂໍ້ 20-21). ເມື່ອໂຢເຊບຕື່ນຈາກນິມິດຝັນເພິ່ນຈຶ່ງປະຕິບັດຕາມເທວະດາບອກທຸກປະການ.

ພຣະຄັມພີບອກເຮົາວ່າໂຢເຊບເປັນຄົນສິລທັມໃນສາຍພຣະເນດຂອງພຣະເຈົ້າ ດັ່ງນັ້ນເພິ່ນຈຶ່ງຖືກເລືອກໃຫ້ເປັນພໍ່ລ້ຽງຂອງພຣະເຢຊູ. ເພິ່ນໄດ້ນຳເອົາມາຣີອາໄປຍັງບ້ານເກີດເມືອງນອນຂອງປູ່ຍ່າຕາຍາຍຂອງເພິ່ນເພື່ອລົງທະບຽນຕາມທາງການສັ່ງ ຄືບ້ານເບັດເລເຮັມທີ່ເປັນບ້ານນ້ອຍໆຊຶ່ງບໍ່ມີຜູ້ຄົນຮູ້ກັນເທົ່າໃດ, ຫລັງການປະສູດຂອງພຣະເຢຊູແລ້ວບ້ານນ້ອຍໆນີ້ກໍມີຊື່ສຽງດັງໄປທົ່ວໂລກ. ຕໍ່ມາເມື່ອເຫດການສງົບລົງແລ້ວໂຢເຊບກໍໄດ້ພາຄອບຄົວກັບໄປຍັງເມືອງນາຊາເຣັດບ່ອນຢູ່ປັຈຸບັນຂອງໂຢເຊບ ແລະດຳເນີນຊີວິດເປັນຊ່າງໄມ້ລ້ຽງຄອບຄົວຕໍ່ໄປ.

<u>ໂຫຣາຈານມາຂາບໄຫວ້</u> (ມັດທາຍ 2:1-6).

ໃນຂະນະທີ່ພຣະກຸມມານເຢຊູຊົງປະສູດນັ້ນໄດ້ມີພວກໂຫຣາຈານເດີນທາງຈາກທິດຕາເວັນອອກເພື່ອນະມັສການພຣະກຸມມານ. ແຕ່ກ່ອນອື່ນເຮົາຕ້ອງເຂົ້າໃຈວ່າພວກໂຫຣາຈານແມ່ນພວກນັກຮຽນທີ່ຄົ້ນຄວ້າຄວາມຮູ້ຕ່າງໆ, ພວກເຂົາເຈົ້າພາກັນຮຽນຮູ້ເຣື່ອງການສະເດັດມາຂອງພຣະເຢຊູພຣະຜູ້ຊ່ອຍໃຫ້ລອດນັ້ນແມ່ນພຣະເຢຊູ ດ້ວຍເຫດນີ້ພວກເຂົາເຈົ້າຈຶ່ງຊອກບ່ອນທີ່ພຣະກຸມມານຊົງປະສູດເພື່ອຈະນະມັສການພຣະອົງ. ພວກໂຫຣາຈານນີ້ບໍ່ແມ່ນຊົນຊາດຢິວ ດັ່ງນັ້ນຈຶ່ງໄດ້ຊື່ວ່າ ເປັນຄົນນອກສາສນາ, ພວກເຂົາເຈົ້າມາຊອກຫາພຣະກຸມມານໃນແຖບນັ້ນດ້ວຍວ່າເຂົາເຈົ້າເຫັນດາວປລາດທີ່ ພວກເຂົາເຊື່ອວ່າເປັນດາວພິເສດ ຂອງພຣະເຈົ້າມາບອກເຂົາເມື່ອເຂົາເຫັນດາວນັ້ນເຂົາກໍປະສິ່ງຂອງຕ່າງໆແລ້ວຕິດຕາມດາວດວງນັ້ນ, ເຂົາມີຄວາມເຊື່ອວ່າກຸມມານທີ່ເກີດມານັ້ນຈະເປັນກະສັດຂອງຊາດຢິວ. ດັ່ງນັ້ນເຂົາຈຶ່ງຖາມວ່າ "ກຸມມານຜູ້ເກີດມາເປັນກະສັດຂອງຊາດ ຢິວນັ້ນຢູ່ທີ່ໃດເພາະເຮົາເຫັນດາວຂອງທ່ານປາກົດຂຶ້ນ" (ຂໍ້ 2). ຂ່າວນີ້ໄດ້ຊ່າລືໄປເຖິງຫູຂອງກະສັດເຮໂຣດ ເພິ່ນຈຶ່ງມີຄວາມວຸ້ນວາຍໃຈ ແລະ ປະຊາຊົນທັງເມືອງເຢຣູຊາເລັມກໍວຸ້ນວາຍໃຈ ໄປນຳເພິ່ນ. ກະສັດເຮໂຣດໄດ້ສັ່ງປະຊຸມໃນພຣະຣາຊວັງຢ່າງຮີບດ່ວນ, ເພິ່ນສັ່ງໃຫ້ມະຫາປະໂລຫິດແລະພວກນັກທັມຟາຣີຊາຍເຂົ້າເຝົ້າເປັນພິເສດ. ເມື່ອທຸກຄົນມາເຖິງແລ້ວເຮໂຣດຖາມເຂົາວ່າ "ຜູ້ເປັນພຣະຄຣິດນັ້ນຈະບັງເກີດຢູ່ທີ່ໃດ ເຂົາທູນຕອບວ່າ ໃນບ້ານເບັດເລເຮັມແຂວງຢູດາຍ" (ຂໍ້ 4-5). ພວກນັກທັມຟາຣີຊາຍ ແລະພວກມະຫາປະໂລຫິດໄດ້ຮຽນຮູ້ເຣື່ອງນີ້ຕາມພຣະທັມເອຊາຢາໄດ້ກ່າວໄວ້, ດັ່ງນັ້ນເຂົາຈຶ່ງບອກກະສັດເຮໂຣດອີກວ່າ "ເພາະຜູ້ປະກາດພຣະທັມໄດ້ຂຽນໄວ້ດັ່ງນີ້ວ່າບ້ານເບດເລເຮັມໃນແຜ່ນດິນຢູດາເອີຍ ເຈົ້າກໍບໍ່ແມ່ນຜູ້ນ້ອຍທີ່ສຸດໃນຖ້າມກາງເຈົ້ານາຍຂອງຢູດາເພາະວ່າເຈົ້ານາຍຜູ້ນຶ່ງຈະອອກມາຈາກເຈົ້າຜູ້ຊຶ່ງຈະປົກຄອງອິສຣາເອນໄພ່ພົນຂອງເຮົາ" (ຂໍ້ 6).

<u>ເຮໂຣດວາງແຜນຮ້າຍ</u> (ມັດທາຍ 2:7-12)

ເມື່ອກະສັດເຮໂຣດໄດ້ຍິນຖ້ອຍຄຳຂອງພວກມະຫາປະໂລຫິດ ແລະພວກນັກທັມຟາຣີຊາຍແລ້ວກໍມີຄວາມຂັດເຄືອງໃຈ ຢ້ານວ່າຈະເສັຽຕຳແໜ່ງກະສັດຈຶ່ງວາງແຜນການເຊີນພວກໂຫຣາຈານມາເຂົ້າເຝົ້າເປັນການລັບ. "ແລ້ວເຮໂຣດໄດ້ເອີ້ນເອົາພວກໂຫຣາຈານເຂົ້າມາເຝົ້າເປັນການລັບ ຊົງຖາມເຂົາໄດ້ຄວາມຖ້ອນຖີ່ເຖິງເວລາທີ່ດາວນັ້ນປາກົດຂຶ້ນ ແລ້ວກະສັດໄດ້ຊົງໃຊ້ພວກໂຫຣາຈານໄປຍັງບ້ານເບັດເລເຮັມສັ່ງວ່າ ຈົ່ງໄປຄົ້ນຫາພຣະກຸມມານດ້ວຍຄັກແນ່ ເມື່ອພົບແລ້ວຈົ່ງກັບມາບອກເຮົາເພື່ອເຮົາຈະໄດ້ໄປຂາບໄຫວ້ທ່ານເໝືອນກັນ" (ຂໍ້ 7-8). ກະສັດເຮໂຣດໃຊ້ເລ້ກົນອຸບາຍຫລອກລວງພວກໂຫຣາຈານໃຫ້ໄປຄົ້ນຫາບ່ອນກຸມມານເຢຊູເກີດຢ່າງຄັກແນ່ ແລ້ວກັບມາລາຍງານເພື່ອເຮໂຣດຈະໄດ້ສັງຫານພຣະກຸມມານເສັຽ.

ພວກໂຫຣາຈານເປັນຄົນສລາດພໍທີ່ຈະຮູ້ເລ້ລ່ຽມຂອງເຮໂຣດ ແຕ່ພວກເຂົາເຈົ້າບໍ່ໄດ້ສະແດງທ່າທີໃດໆພໍຈະໃຫ້ເຮໂຣດສົງສັຍໄດ້. ຫລັງຈາກສັ່ງລາເຮໂຣດແລ້ວພວກເຂົາເຈົ້າກໍອອກເດີນທາງກັນຕໍ່ໄປ, ດາວທີ່ເຂົາເຈົ້າເຫັນກ່ອນນັ້ນກໍນຳໜ້າເຂົາເຈົ້າໄປຈົນເຖິງສະຖານທີ່ພຣະກຸມມານບັງເກີດ "ເບິ່ງແມ, ດາວທີ່ເຂົາໄດ້ເຫັນເມື່ອມາປາກົດຂຶ້ນນັ້ນກໍໄດ້ນຳໜ້າເຂົາໄປຈົນມາຢຸດຢູ່ທີ່ຊື່ສະຖານທີ່ກຸມມານຢູ່ນັ້ນ" (ຂໍ້ 9). ດາວນີ້ເປັນດາວທີ່ອັສຈັນຄົງຈະເປັນດາວທີ່ສົ່ງມາຈາກພຣະເຈົ້າເພື່ອນຳໜ້າ (ນຳທາງ, ບອກທາງ) ໃຫ້ພວກໂຫຣາຈານ, ດາວດວງດຽວທີ່ປາກົດຄັ້ງແຮກກໍປາກົດອີກຄັ້ງນີ້ງຊຶ່ງສແດງໃຫ້ເຫັນວ່າພຣະເຈົ້າມີຣິດອຳນາດຄວບຄຸມດາວທຸກດວງ, ພຣະອົງສາມາດສັ່ງດາວດວງນີ້ໃຫ້ນຳທາງພວກໂຫຣາຈານໄປຈົນເຖິງຈຸດໝາຍ.

ເມື່ອພວກໂຫຣາຈານໄປເຖິງທີ່ຢູ່ຂອງພຣະກຸມມານເຢຊູແລ້ວພວກເຂົາເຈົ້າກໍຂາບໄຫວ້ພຣະອົງດ້ວຍການຖວາຍເຄື່ອງໂຄຣົບຕ່າງໆ. "ພວກເຂົາຈຶ່ງກົ້ມລົງຂາບໄຫວ້ກຸມມານນັ້ນ ແລ້ວໄຂຫີບເອົາຊັບຂອງເຂົາອອກມາຖວາຍແກ່ກຸມມານເປັນເຄື່ອງໂຄຣົບຄື; ຄຳ, ກຳຍານ ແລະຢາງໄມ້ຫອມ" (ຂໍ້ 11) ແລ້ວພວກເຂົາເຈົ້າກໍລາກັບໄປຍັງບ້ານເຮືອນຂອງຕົນ. ໃນຂະນະທີ່ເຂົາເດີນທາງກັບນັ້ນເຂົາໄດ້ນອນພັກໃນຣະວ່າງທາງໃນເວລານັ້ນພຣະຜູ້ເປັນເຈົ້າໄດ້ເຕືອນເຂົາບໍ່ໃຫ້ກັບໄປລາຍງານກະສັດເຮໂຣດ "ພຣະເຈົ້າໄດ້ຊົງເຕືອນເຂົາທາງຄວາມຝັນບໍ່ໃຫ້ກັບໄປເຝົ້າເຮໂຣດ ດັ່ງນັ້ນເຂົາຈຶ່ງກັບໄປຍັງເມືອງຂອງຕົນໂດຍທາງອື່ນ "(ຂໍ້ 12). ພຣະເຈົ້າຊົງປົກປ້ອງພຣະບຸດຂອງພຣະອົງຈາກການປອງຮ້າຍຂອງສັດຕຣູສັນໃດ ພຣະອົງກໍຈະຊົງປົກປ້ອງພວກເຮົາຜູ້ເປັນລູກຍິງ, ລູກຊາຍຂອງພຣະອົງສັນນັ້ນ.

<u>ຄຳຖາມ:</u>

1. ຄັ້ງແຮກທີ່ທ່ານໄດ້ລູກໃໝ່ໆທ່ານໄດ້ເຮັດຫຍັງແດ່?

2. ໂຢເຊບເປັນຄົນແນວໃດໃນສາຍພຣະເນດຂອງພຣະເຈົ້າ?

3. ໂຢເຊບຄຶດແນວໃດເມື່ອເຫັນຄູ່ໝັ້ນຂອງເພິ່ນມີລູກກ່ອນແຕ່ງງານ?

4. ເປັນຫຍັງໂຢເຊບຈຶ່ງບໍ່ຢ່າຮ້າງກັບຄູ່ໝັ້ນຂອງເພິ່ນ?

5. ໂຢເຊບເຮັດແນວໃດເມື່ອເພິ່ນເຫັນນິມິດທາງຄວາມຝັນ? ເທວະດາບອກຫຍັງເພິ່ນແດ່?

6. ພຣະເຢຊູປະສູດຢູ່ໝູ່ບ້ານໃດ? ບ້ານນີ້ມີຊື່ສຽງດີຢ່າງໃດໃນເມື່ອກ່ອນ? ເປັນຫຍັງຈຶ່ງໃສ່ຊື່ວ່າ ເຢຊູ?

7. ເປັນຫຍັງພວກໂຫຣາຈານຈຶ່ງໄປຂາບໄຫວ້ພຣະເຢຊູ?

8. ກະສັດເຮໂຣດມີຄວາມຄິດຢ່າງໃດກັບພຣະກຸມມານນ້ອຍ?

9. ພຣະເຈົ້າໄດ້ປົກປ້ອງພຣະບຸດຂອງພຣະອົງຢ່າງໃດ?

ສຈ. ທູນພັນ ວົງສຸຣິດທ໌